# ປື້ມຄູ່ມື ການລົງທຶນ

## ຢູ່ໃນ ສປປ ລາວ 2022

ກະຊວງແຜນການ ແລະ ການລົງທຶນ



# ປື້ມຄູ່ມືການລົງທຶນໃນ ສປປ ລາວ

# Investment Handbook for Lao PDR

ກົມສົ່ງເສີມການລົງທຶນ
INVESTMENT PROMOTION DEPARTMENT

Tel: 021-217012, Fax: 021-215491
www.investlaos.gov.la
www.facebook.com/investlaos.gov.la

# ສາລະບານ

# 1

## ອົງການຈັດຕັ້ງຄຸ້ມຄອງການລົງທຶນ


1.1 ກະຊວງ ແຜນການ ແລະ ການລົງທຶນ 2

1.2 ກົມສົ່ງເສີມການລົງທຶນ 2

1.3 ຫ້ອງການບໍລິການ ການລົງທຶນປະຕູດຽວ 3

1.4 ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ 6

1.5 ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ 9


# 2

## ຫຼັກການ ແລະ ນະໂຍບາຍ ສົ່ງເສີມການລົງທຶນ


2.1 ຫຼັກການສົ່ງເສີມການລົງທຶນ 11

2.2 ນະໂຍບາຍສົ່ງເສີມການລົງທຶນ 11

2.3 ການໃຫ້ນະໂຍບາຍສົ່ງເສີມການລົງທຶນ 14

2.4 ການຈັດຕັ້ງປະຕິບັດນະໂຍບາຍຍົກເວັ້ນອາກອນກຳໄລ ແລະ ຄ່າເຊົ່າ ຫຼື ສຳປະທານທີ່ດິນຂອງລັດ 16

2.5 ການສິ້ນສຸດໄລຍະເວລາໄດ້ຮັບນະໂຍບາຍຍົກເວັ້ນອາກອນກຳໄລ ແລະ ຄ່າເຊົ່າ ຫຼື ສຳປະທານທີ່ດິນຂອງລັດ 17

2.6 ການຄຸ້ມຄອງ ແລະ ຕິດຕາມກວດກາ 17

2.7 ມາດຕະການຕໍ່ຜູ້ລະເມີດ 17


# 3

## ການລົງທຶນ ໃນ ສປປ ລາວ


3.1 ຮູບການ ການລົງທຶນ 19

3.2 ກິດຈະການ ການລົງທຶນ ໃນ ສປປ ລາວ 20

3.3 ການເຊົ່າ ແລະ ການສຳປະທານທີ່ດິນຂອງລັດ 23

3.4 ອາຍຸການລົງທຶນ ກິດຈະການລົງທຶນ ທົ່ວໄປ ແລະ ສຳປະທານ 24

3.5 ທຶນຈົດທະບຽນ ແລະ ການນຳເຂົ້າທຶນ 24

3.6 ການຂໍໃບອະນຸຍາດດຳເນີນກິດຈະການລົງທຶນ ທົ່ວໄປ ແລະ ສຳປະທານ 24

# 4

## ຂັ້ນຕອນການລົງທຶນ ກິດຈະການລົງທຶນທົ່ວໄປ


4.1 ກິດຈະການ ໃນບັນຊີຄວບຄຸມ 27

4.2 ກິດຈະການ ບໍ່ຢູ່ໃນບັນຊີຄວບຄຸມ 29


# 5

## ຂັ້ນຕອນການລົງທຶນ ກິດຈະການສຳປະທານ


5.1 ການລົງທຶນ ກິດຈະການສຳປະທານ ຂະແໜງກະສິກຳ 33

5.2 ການລົງທຶນ ກິດຈະການສຳປະທານ ຂະແໜງແຮ່ທາດ 36

5.3 ການລົງທຶນ ກິດຈະການສຳປະທານ ຂະແໜງໄຟຟ້າ 40

5.4 ຄຳຮ້ອງ ແລະ ເອກະສານປະກອບ ໃນກິດຈະການສຳປະທານ 44

5.5 ການພັດທະນາເຂດເສດຖະກິດພິເສດ (SEZ) 44


# 6

## ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ (PPP)


6.1 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ (PPP) 51

6.2 ຮູບການ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ (PPP) 51

6.3 ຮູບແບບການລົງທຶນຮ່ວມ 52

6.4 ການກະກຽມ ແລະ ຂັ້ນຕອນ ການພິຈາລະນາ ການລົງທຶນຮ່ວມ 55

## 7 ຫ້ອງການຜູ້ຕາງໜ້າ


7.1 ຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດ 60

7.2 ການສະເໜີຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ 60

7.3 ເງື່ອນໄຂຂອງການສ້າງຕັ້ງຫ້ອງການຜູ້ຕາງຫນ້າ 60

7.4 ເອກະສານປະກອບໃນການຍື່ນຄຳຮ້ອງຂໍສ້າງ ຕັ້ງຫ້ອງການຜູ້ຕາງໜ້າ 60


## 8 ການປຽນແປງທາງດ້ານນິຕິກຳ ແລະ ຄ່າບໍລິການ


8.1 ການປຽນແປງທາງດ້ານນິຕິກຳຕ່າງໆ 62

8.2 ຄ່າແບບຟອມຄຳຮ້ອງ ແລະ ຄ່າບໍລິການ 65


## ເອກະສານຊ້ອນທ້າຍ


ເອກະສານຊ້ອນທ້າຍ 1 ບັນຊີກິດຈະການສົ່ງເສີມການລົງທຶນ 66

ເອກະສານຊ້ອນທ້າຍ 2 ບັນຊີເຂດສົ່ງເສີມການລົງທຶນ 84

ເອກະສານຊ້ອນທ້າຍ 3 ໃບສົ່ງເສີມການລົງທຶນ 88

ເອກະສານຊ້ອນທ້າຍ 4 ລາຍການເອກະສານປະກອບ ການຂໍນະໂຍບາຍສົ່ງເສີມການລົງທຶນ 89

ເອກະສານຊ້ອນທ້າຍ 5 ຄ່າທຳນຽມຂຶ້ນທະບຽນວິສາຫະກິດ 93

ເອກະສານຊ້ອນທ້າຍ 6 ອັດຕາຄ່າສຳປະທານທີ່ດິນ ໃນກິດຈະການກ່ຽວກັບແຮ່ທາດ 94

ເບີໂທຕິດຕໍ່ ຂະແໜງແຜນການ ແລະ ການລົງທຶນ 96

ເອກະສານອ້າງອີງ 98

# ຕົວຫຍໍ້

| | |
|---|---|
| ກປ | ກະສິກຳ ແລະ ປ່າໄມ້ |
| ກງ | ການເງິນ |
| ກລທ | ກົມສົ່ງເສີມການລົງທຶນ |
| ກຜທ | ກະຊວງແຜນການ ແລະ ການລົງທຶນ |
| ກຊສ | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| ຂສພ | ເຂດເສດຖະກິດພິເສດ |
| ຄລທ.ສ | ຄະນະກຳມະການສົ່ງເສີມການລົງທຶນ ຂັ້ນສູນກາງ |
| ຄລທ.ຂ | ຄະນະກຳມະການສົ່ງເສີມການລົງທຶນ ຂັ້ນແຂວງ |
| ຄພທສ | ຄະນະພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກ ຂັ້ນສູນກາງ |
| ຍທຂ | ໂຍທາທິການ ແລະ ຂົນສົ່ງ |
| ນວ | ນະຄອນຫລວງວຽງຈັນ |
| ຖວທ | ຖະແຫຼງຂ່າວ ວັດທະນາທຳ ແລະ ທ່ອງທ່ຽວ |
| ປກສ | ປ້ອງກັນຄວາມສະຫງົບ |
| ຜທ | ແຜນການ ແລະ ການລົງທຶນ |
| ພບ | ພະລັງງານ ແລະ ບໍ່ແຮ່ |
| ຫລປ | ຫ້ອງການບໍລິການ ການລົງທຶນປະຕູດຽວ |
| ຫລບ | ຫ້ອງການລັດຖະບານ |
| ຫລອ | ຫ້ອງການລົງທຶນຮ່ວມພາກລັດ ແລະ ເອກະຊົນ |
| ວັນ | ວັນລັດຖະການ |
| ອຄ | ອຸດສາຫະກຳ ແລະ ການຄ້າ |
| ຫຈທ | ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ |
| ຮສສ | ແຮງງານ ແລະ ສະຫວັດດີການ ສັງຄົມ |
| CA | Concession Agreement (ສັນຍາສາປະທານ) |
| EIA | Environment Impact Assessment (ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ) |
| FS | Feasibility Study (ບົດວິພາກເສດຖະກິດ-ເຕັກນິກ) |
| MOU | Memorandum of Understanding (ບົດບັນທຶກຄວາມເຂົ້າໃຈ) |
| PDA | Project Development Agreement (ສັນຍາພັດທະນາໂຄງການ) |
| PPP | Public Private Partnership (ການລົງທຶນຮ່ວມ ພາກລັດ ແລະ ພາກເອກະຊົນ) |

# ຄຳນຳ



ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະ ການເຕີບໂຕສີຂຽວ, ລັດຖະ ບານ ສປປ ລາວໄດ້ ວາງແນວທາງ ສົ່ງເສີມ ແລະ ດຶງດູດການລົງທຶນ ທີ່ມີຄຸນນະພາບຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງສປປລາວ. ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016, ນາຍົກລັດຖະມົນຕີ ໄດ້ອອກດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເລກທີ 05/ນຍ, ລົງວັນທີ 05 ມັງກອນ 2018 ແລະ ໄດ້ຈັດຕັ້ງຫ້ອງການບໍລິການການລົງທຶນປະຕູດຽວຂື້ນ ທີ່ກະຊວງແຜນການ ແລະ ການລົງທຶນເພື່ອປັບປຸງບັນຍາກາດໃນການດຳເນີນທຸລະກິດ ພາຍໃນປະເທດໃຫ້ດີຂື້ນ. ພ້ອມທັງສ້າງຄວາມອາດສາມາດ ໃຫ້ການຍາດແຍ່ງ ແລະ ດຶງດູດເອົາການລົງທຶນທີ່ມີຄຸນນະພາບ, ຊຸກຍູ້ສົ່ງເສີມ ແລະ ສ້າງຂີດຄວາມສາມາດໃນການແຂ່ງຂັນຂອງທຸລະກິດພາຍໃນໃຫ້ສູງຂື້ນ, ແນ່ໃສ່ເຮັດໃຫ້ການມາລົງທຶນ ຢູ່ ສປປ ລາວ ໄດ້ຮັບຄວາມສະດວກ ໂປ່ງໃສ ແລະ ວ່ອງໄວຂື້ນ. ການລົງທຶນຂອງພາກເອກະຊົນ ໄດ້ປະກອບສ່ວນອັນສຳຄັນຕໍ່ການເຕີບໂຕ ແລະ ການພັດທະນາເສດຖະກິດ-ສັງຄົມຂອງປະເທດ, ສາມາດນຳທຶນຮອນ,ເຕັກໂນໂລຊີທີ່ທັນສະໄໝ, ຄວາມຮູ້ວິຊາການແລະການເຂົ້າເຖິງຕະຫຼາດໃຫຍ່ກວ່າເກົ່າຂອງລາວ. ພ້ອມກັນນັ້ນ, ຫ້ອງການບໍລິການ ການລົງທຶນປະຕູດຽວ ຍັງເປັນໜ່ວຍງານ ບໍລິການ ແລະ ອຳນວຍຄວາມສະດວກຮອບດ້ານໃຫ້ແກ່ຜູ້ລົງທຶນ ດ້ວຍການບໍລິການດ້ານຂໍ້ມູນຂ່າວສານ, ຂະບວນການພິຈາລະນາ ແລະ ອະນຸມັດໂຄງການການລົງທຶນ, ການອອກໃບອະນຸຍາດລົງທຶນ ແລະ ການອອກໃບແຈ້ງການຕ່າງໆ ກ່ຽວກັບການລົງທຶນ.

ຈຸດປະສົງຫຼັກຂອງປື້ມຄູ່ມືການລົງທຶນໃນສປປລາວສະບັບນີ້ແມ່ນເພື່ອເປັນເຄື່ອງມືໜຶ່ງຂອງວຽກງານການໃຫ້ບໍລິການ ການລົງທຶນປະຕູດຽວ, ພ້ອມທັງ ເປັນຂໍ້ມູນໃຫ້ແກ່ຜູ້ລົງທຶນ, ພະນັກງານ-ວິຊາການ ທັງພາກລັດ ແລະ ເອກະຊົນ ໄດ້ຮັບຮູ້ ແລະ ເຂົ້າເຖິງລະບຽບການຂອງການລົງທຶນໃນ ສປປ ລາວ ຢ່າງທົ່ວເຖິງ ແລະ ຈັດຕັ້ງປະຕິບັດໃຫ້ເປັນເອກະພາບທົ່ວປະເທດ.

ກະຊວງແຜນການ ແລະ ການລົງທຶນ, ຫວັງຢ່າງຍິ່ງວ່າ ປື້ມຄູ່ມືການລົງທຶນໃນ ສປປ ລາວ ສະບັບນີ້ ຈະເປັນປະໂຫຍດໃຫ້ແກ່ໝົດທຸກທ່ານ ແລະ ເພື່ອປັບປຸງປື້ມຄູ່ມືສະບັບນີ້ໃນຕໍ່ໜ້າ ໃຫ້ມີຄຸນນະພາບດີຂື້ນກວ່າເກົ່າ ພວກເຮົາ ຍິນດີຮັບເອົາຄຳຄິດເຫັນ ແລະ ຄຳຕິຊົມຈາກບັນດາທ່ານດ້ວຍຄວາມຈິງໃຈ.

ຮອງນາຍົກລັດຖະມົນຕີ

ລັດຖະມົນຕີ



ສອນໄຊ ສີພັນດອນ

# ພາກທີ

# 01

ອົງການຈັດຕັ້ງຄຸ້ມຄອງການລົງທຶນ

## 1.1 ກະຊວງ ແຜນການ ແລະ ການລົງທຶນ

ກະຊວງ ແຜນການ ແລະ ການລົງທຶນ “ກຜທ” ໃນຖານະເປັນເສນາທິການໃຫ້ແກ່ພັກ ແລະ ລັດຖະບານ ໃນວຽກງານການຄຸ້ມຄອງມະຫາພາກກ່ຽວກັບການວາງແຜນ ແລະ ການລົງທຶນ, ວຽກງານສະຖິຕິແຫ່ງຊາດ, ຄົ້ນຄວ້າຍຸດທະສາດ, ສ້າງແຜນການ ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສ້າງກົນໄກ ແລະ ນະໂຍບາຍ ທີ່ຕິດພັນກັບການຄຸ້ມຄອງເສດຖະກິດ, ສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພາກເອກະຊົນພາຍໃນ ແລະ ຕ່າງປະເທດ ແລະ ເຂດເສດຖະກິດພິເສດໃນຂອບເຂດທົ່ວປະເທດ, ໂດຍສະເພາະ ໄດ້ເປັນໃຈກາງໃນການຊຸກຍູ້ການປັບປຸງຂອດຂັ້ນໃນການດໍາເນີນທຸລະກິດ-ການລົງທຶນ ເພື່ອດຶງດູດການລົງທຶນທີ່ມີຄຸນນະພາບ, ຄຸ້ມຄອງການລົງທຶນຂອງລັດໃຫ້ມີປະສິດທິຜົນສູງຂຶ້ນ, ຂົນຂວາຍ ແລະ ຄຸ້ມຄອງການນໍາໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາທັງໃນກອບສອງຝ່າຍ ແລະ ຫຼາຍຝ່າຍ, ຄົ້ນຄວ້າ ແລະ ສະເໜີແນະມາດຕະການຕ່າງໆທາງດ້ານເສດຖະກິດ ແລະ ການພັດທະນາ ໂດຍສະເພາະ ນະໂຍບາຍ ແລະ ມາດຕະການເພື່ອຫຼຸດຜ່ອນຜົນກະທົບທາງດ້ານເສດຖະກິດຂອງ ສປປ ລາວ ແລະ ຜະລິດສະຖິຕິທາງການຮັບໃຊ້ໃຫ້ການສັງຄົມຢ່າງເປັນລະບົບ (ດໍາລັດນາຍົກລັດຖະມົນຕີ ເລກທີ 201/ນຍ, ລົງວັນທີ 30 ມິຖຸນາ 2017).

## 1.2 ກົມສົ່ງເສີມການລົງທຶນ

ກົມສົ່ງເສີມການລົງທຶນ “ກລທ” ແມ່ນໂຄງປະກອບກົງຈັກ ຂອງ ກຜທ, ມີພາລະບົດບາດເປັນເສນາທິການໃຫ້ແກ່ ກຜທ ທັງມີພາລະບົດບາດເປັນຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ ໃນການຄົ້ນຄວ້າ, ປະສານສົມທົບ, ສັງລວມ, ລາຍງານ, ຊຸກຍູ້ແກ້ໄຂຂອດຂັ້ນ ຂອງການອໍານວຍຄວາມສະດວກ ການລົງທຶນ ແລະ ຈັດຕັ້ງປະຕິບັດວຽກງານດຶງດູດ, ສົ່ງເສີມ, ປົກປ້ອງ ແລະ ຄຸ້ມຄອງການລົງທຶນຂອງພາກເອກະຊົນ, ການລົງທຶນຮ່ວມພາກລັດ ແລະ ເອກະຊົນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ເພື່ອນໍາໃຊ້ທ່າແຮງບົ່ມຊ້ອນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດ. ເຊິ່ງມີພາລະບົດບາດໂດຍຫຍໍ້ ດັ່ງນີ້:

1) ເປັນເສນາທິການໃຫ້ ກຜທ ແລະ ເປັນໃຈກາງປະສານງານ ວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງພາກເອກະຊົນ, ການລົງທຶນຮ່ວມພາກລັດ ແລະ ເອກະຊົນ ຢູ່ ສປປ ລາວ ແລະ ການອອກໄປລົງທຶນຢູ່ຕ່າງປະເທດ ໂດຍການປະສານງານ ກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ຕາມກົນໄກການບໍລິການການລົງທຶນປະຕູດຽວ ແລະ ເຮັດໜ້າທີ່ເປັນກອງເລຂາຊ່ວຍວຽກໃຫ້ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ;

2) ຄົ້ນຄວ້າ ກົດໝາຍ ແລະ ລະບຽບການ, ສ້າງແຜນຍຸດທະສາດ ແລະ ນະໂຍບາຍດຶງດູດ, ສົ່ງເສີມ, ປົກປ້ອງ ແລະ ຄຸ້ມຄອງການລົງທຶນ;

3) ເປັນສູນລວມດ້ານຂໍ້ມູນຂ່າວສານ ແລະ ສະຖິຕິການລົງທຶນ, ຮັບຟັງ, ເກັບກໍາ ແລະ ໃຫ້ຄໍາອະທິບາຍເບື້ອງຕົ້ນ ກ່ຽວກັບຂໍ້ຂ້ອງໃຈຕ່າງໆຂອງນັກລົງທຶນ ແລະ ຜູ້ພັດທະນາ;

4) ພິຈາລະນາຄໍາຮ້ອງຂໍລົງທຶນຂອງພາກເອກະຊົນ ທີ່ຂໍລົງທຶນໃນກິດຈະການສໍາປະທານ, ລວມທັງກິດຈະການລົງທຶນຮ່ວມພາກລັດ-ເອກະຊົນ, ກິດຈະການຄວບຄຸມ, ຫ້ອງການຜູ້ຕາງໜ້າ ແລະ ການອອກໄປລົງທຶນຢູ່ຕ່າງປະເທດ ໂດຍສອດຄ່ອງກັບແນວທາງ, ນະໂຍບາຍພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ, ກົດໝາຍ ແລະ ລະບຽບການຂອງ ສປປ ລາວ ໂດຍການປະສານສົມທົບກັບຂະແໜງການກ່ຽວຂ້ອງ ຂັ້ນສູນກາງ ແລະທ້ອງຖິ່ນ;

5) ຄົ້ນຄວ້າ ແລະ ປະກອບຄໍາເຫັນ ຕໍ່ຂໍ້ສະເໜີ, ຄໍາຮ້ອງທີ່ພົວພັນກັບວຽກງານການລົງທຶນພາຍໃນ ແລະ ຕ່າງປະເທດ ເພື່ອນໍາສະເໜີຕໍ່ກອງປະຊຸມ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ເພື່ອພິຈາລະນາອະນຸມັດ, ປະຕິເສດ ຫຼື ຂໍທິດຊີ້ນໍາຕໍ່ການສະເໜີຕາມກົດໝາຍ ແລະ ລະບຽບການ;

6) ກະກຽມ, ຄົ້ນຄວ້າ, ເຈລະຈາບົດບັນທຶກຄວາມເຂົ້າໃຈ, ສັນຍາສໍາປະທານປະເພດຕ່າງໆ ແລະ ເອກະສານນິຕິກໍາທີ່ກ່ຽວຂ້ອງກັບການລົງທຶນ ພາກເອກະຊົນ ພາຍໃນ ແລະ ຕ່າງປະເທດ ຢູ່ ສປປ ລາວ ຕາມກົດໝາຍ ແລະ ລະບຽບການ;

7) ຮ່າງໃບອະນຸຍາດລົງທຶນ, ໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ, ໃບອະນຸຍາດອອກໄປລົງທຶນຢູ່ຕ່າງປະເທດ, ໃບສົ່ງເສີມການລົງທຶນ, ໃບຮັບຮອງແຜນນໍາເຂົ້າປະຈໍາປີ; ຮ່າງໃບແຈ້ງໂຈະ, ແຈ້ງເຕືອນໃນກໍລະນີຜູ້ລົງທຶນ ຫຼື ຜູ້ພັດທະນາມີຄວາມບົກຜ່ອງ ໃນການຈັດຕັ້ງປະຕິບັດ ບົດບັນທຶກຄວາມເຂົ້າໃຈ, ສັນຍາ, ການຈັດຕັ້ງປະຕິບັດໂຄງການລົງທຶນ ຫຼື ມີຄວາມບົກຜ່ອງໃນການປະຕິບັດກົດໝາຍ ແລະ ລະບຽບການ;

8) ຮ່າງໃບແຈ້ງຍົກເລີກບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາ, ຮ່າງໃບແຈ້ງຖອນໃບອະນຸຍາດລົງທຶນ, ຮ່າງໃບແຈ້ງຕໍ່ອາຍຸ ຫຼື ສິ້ນສຸດອາຍຸບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາ ເພື່ອນໍາສະເໜີຂໍອະນຸມັດຕາມລະບຽບການ;

9) ຊຸກຍູ້, ຕິດຕາມ, ກວດກາ ແລະ ສະເໜີວິທີແກ້ໄຂບັນຫາຕ່າງໆ ຕໍ່ຂັ້ນເທິງກ່ຽວກັບການຈັດຕັ້ງປະຕິບັດໂຄງການລົງທຶນພາກເອກະຊົນ ທີ່ໄດ້ຮັບອະນຸຍາດລົງທຶນ ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ;

10) ອໍານວຍຄວາມສະດວກ, ຕິດຕາມ ແລະ ຄຸ້ມຄອງນັກລົງທຶນ ພ້ອມດ້ວຍຄອບຄົວ, ຊ່ຽວຊານ, ວິຊາການ ແລະ ແຮງງານຕ່າງປະເທດຢູ່ ສປປ ລາວ;

11) ຄຸ້ມຄອງ ແລະ ນໍາໃຊ້ທຶນຊ່ວຍເຫຼືອ, ການຊ່ວຍເຫຼືອດ້ານວິຊາການ ຂອງຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ໃນໂຄງການທີ່ຂຶ້ນກັບຄວາມຮັບຜິດຊອບກົມ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ສອດຄ່ອງຕາມ ລະບຽບການ.

## 1.3 ຫ້ອງການບໍລິການ ການລົງທຶນປະຕູດຽວ

ຫ້ອງການບໍລິການ ການລົງທຶນປະຕູດຽວ ຂຽນຫຍໍ້ວ່າ “ຫລປ” ແມ່ນ ຫ້ອງການປະຈໍາການ ຂອງ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອປະຕິບັດໜ້າທີ່ການບໍລິການ ການລົງທຶນ ຜ່ານປະຕູດຽວ ໃຫ້ແກ່ຜູ້ລົງທຶນ ຢູ່ ສປປ ລາວ, ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 84 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ 2016. ໂດຍມີຫຼັກການບໍລິການ ການລົງທຶນປະຕູດຽວ ດັ່ງນີ້:

1. ເປັນສູນລວມການບໍລິການ ການລົງທຶນ ໃຫ້ແກ່ຜູ້ລົງທຶນ ທີ່ລົງທຶນໃນກິດຈະການທົ່ວໄປ, ສໍາປະທານ ແລະ ການພັດທະນາເຂດເສດຖະກິດພິເສດ ໃຫ້ມີຄວາມກະທັດຮັດ, ວ່ອງໄວ, ໂປ່ງໃສ ແລະ ທັນການ;
2. ເປັນເຈົ້າການປະສານງານກັບຂະແໜງການທີ່ກ່ຽວຂ້ອງ ບົນພື້ນຖານການປະຕິບັດຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ;
3. ລວມສູນການເກັບກໍາຂໍ້ມູນ, ຕິດຕາມການຈັດຕັ້ງປະຕິບັດ, ສັງລວມຕີລາຄາປະເມີນຜົນສະພາບການລົງທຶນ ແລະ ໂຄງການລົງທຶນຂອງພາກເອກະຊົນ.

### ຫ້ອງການບໍລິການ ການລົງທຶນປະຕູດຽວ ມີ ສອງ ຂັ້ນ ຄື:

1. ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ຂຽນຫຍໍ້ວ່າ “ຫລປ.ສ”;
2. ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ ຂຽນຫຍໍ້ວ່າ “ຫລປ.ຂ”.

ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ

1) ໂຄງປະກອບກົງຈັກ

ໂຄງປະກອບກົງຈັກ ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ຕັ້ງຢູ່ ກະຊວງແຜນການ ແລະ ການລົງທຶນ, ຄະນະວິຊາການປະຕູດຽວ ຊຶ່ງປະກອບດ້ວຍ ກົມສົ່ງເສີມການລົງທຶນ ກະຊວງແຜນການ ແລະ ການລົງທຶນ ແລະ ຜູ້ຕາງໜ້າທີ່ບໍ່ປະຈຳການ ຈາກ ກະຊວງອຸດສາຫະກຳ ແລະ ການຄ້າ (ອຄ), ກະຊວງການເງິນ (ກງ), ກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ), ກະຊວງພະລັງງານ ແລະ ບໍ່ແຮ່ (ພບ), ກະຊວງກະສິກຳ ແລະ ປ່າໄມ້ (ກປ), ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຮສສ), ກະຊວງໂຍທາທິການ ແລະ ຂົນສົ່ງ (ຍທຂ), ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ (ຖວທ), ກະຊວງ ປ້ອງກັນຄວາມສະຫງົບ (ປກສ).

ແຕ່ລະກະຊວງ, ອົງການລັດທຽບເທົ່າກະຊວງ ມີໜ້າທີ່ສ້າງຕັ້ງໜ່ວຍງານປະສານງານການບໍລິການການລົງທຶນ ປະຕູດຽວ ປະຈຳອົງການຂອງຕົນ ໂດຍພາຍໃຕ້ການຊີ້ນຳຂອງ ລັດຖະມົນຕີ ຫຼື ຮອງລັດຖະມົນຕີ ຂອງກະຊວງ ກ່ຽວຂ້ອງ ທີ່ເປັນຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ. ໂດຍອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານ ການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ເລກທີ 002/ຄລທ.ສ, ລົງວັນທີ 20 ສິງຫາ 2018.




2) ການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ:

1. ບໍລິການ ການຂໍອະນຸຍາດລົງທຶນ, ການຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ, ຂໍຂຶ້ນທະບຽນວິສາຫະກິດ, ທະບຽນອາກອນ, ອະນຸຍາດເຄື່ອນໄຫວກິດຈະການ ແລະ ຂໍນະໂຍບາຍສົ່ງເສີມ;
2. ບໍລິການ ຂໍວີຊາທຸລະກິດ, ວີຊາເຂົ້າ-ອອກຫຼາຍເທື່ອ, ບັດແຮງງານ ແລະ ບັດພັກເຊົາ;
3. ບໍລິການ ການຂໍປ່ຽນແປງທາງດ້ານພື້ນຖານນິຕິກຳ ຕ່າງໆ ຂອງວິສາຫະກິດ ທີ່ລົງທຶນໃນກິດຈະການຄວບຄຸມ, ກິດຈະການສຳປະທານ, ການພັດທະນາເຂດເສດຖະກິດພິເສດ, ການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ (PPP), ການອອກໄປລົງທຶນຢູ່ຕ່າງປະເທດ ແລະ ຫ້ອງການຜູ້ຕາງໜ້າ;
4. ບໍລິການຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບການລົງທຶນ;

5. ບໍລິການ ພົວພັນເອົາໃບທະບຽນວິສາຫະກິດ ຫຼື ໃບທະບຽນອາກອນ ແລະ/ຫຼື ໃບອະນຸຍາດດຳເນີນທຸລະກິດ;
6. ບໍລິການມອບຈົດໝາຍຕອບຜູ້ລົງທຶນ, ມອບໃບອະນຸຍາດລົງທຶນ, ມອບໃບອະນຸຍາດຫ້ອງການຜູ້ຕາງໜ້າ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງ;
7. ບໍລິການອື່ນທີ່ຕິດພັນກັບວຽກງານສົ່ງເສີມການລົງທຶນ.

❑ ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ

1) ໂຄງປະກອບກົງຈັກ

ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນແຂວງ ຕັ້ງຢູ່ ພະແນກແຜນການ ແລະ ການລົງທຶນ ໂດຍມີຄະນະວິຊາການຮັບຜິດຊອບ ຊຶ່ງປະກອບດ້ວຍຜູ້ຕາງໜ້າຈາກພະແນກແຜນການ ແລະ ການລົງທຶນ (ຜທ), ພະແນກ ອຸດສາຫະກຳ ແລະ ການຄ້າ (ອຄ), ພະແນກການເງິນ (ກງ), ພະແນກພະລັງງານ ແລະ ບໍ່ແຮ່ (ບຣ), ພະແນກຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ (ຊພ), ພະແນກກະສິກຳ ແລະ ປ່າໄມ້ (ກປ), ພະແນກແຮງງານ ແລະ ສະຫວັດດີການສັງຄົມ (ຮສສ), ພະແນກໂຍທາທິການ ແລະ ຂົນສົ່ງ (ຍທຂ), ພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ (ຖວທ), ກອງບັນຊາການປ້ອງກັນຄວາມສະຫງົບ (ປກສ).

ແຕ່ລະພະແນກຂັ້ນແຂວງ ມີໜ້າທີ່ສ້າງຕັ້ງໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ປະຈຳພະແນກຂອງຕົນ ໂດຍພາຍໃຕ້ການຊີ້ນຳຂອງຫົວໜ້າພະແນກກ່ຽວຂ້ອງ ທີ່ເປັນຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ.




2) ການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ:

1. ບໍລິການ ການຂໍອະນຸຍາດລົງທຶນ ແລະ ຂໍນະໂຍບາຍສົ່ງເສີມ;
2. ບໍລິການ ຂໍວິຊາທຸລະກິດ, ວິຊາເຂົ້າ-ອອກຫຼາຍເທື່ອ, ບັດແຮງງານ ແລະ ບັດພັກເຊົາ;
3. ບໍລິການ ການຂໍປ່ຽນແປງທາງດ້ານພື້ນຖານນິຕິກຳຕ່າງໆ ຂອງວິສາຫະກິດທີ່ລົງທຶນໃນກິດຈະການຄວບຄຸມ, ກິດຈະການສຳປະທານ;
4. ບໍລິການ ຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບການລົງທຶນ;
5. ບໍລິການມອບຈົດໝາຍຕອບຜູ້ລົງທຶນ, ມອບໃບອະນຸຍາດລົງທຶນ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ;
6. ບໍລິການອື່ນທີ່ຕິດພັນກັບວຽກງານສົ່ງເສີມການລົງທຶນ.

## 1.4 ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ມີຊື່ຫຍໍ້ເປັນພາສາລາວວ່າ "ຄລທ" ແມ່ນການຈັດຕັ້ງໜຶ່ງຂອງລັດ ທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການຊ່ວຍລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ໃນການວາງກອບນະໂຍບາຍ, ພິຈາລະນາຕົກລົງອະນຸມັດໂຄງການລົງທຶນ, ພິຈາລະນາຕົກລົງກ່ຽວກັບບັນຫາຕ່າງໆ ທີ່ຕິດພັນກັບການລົງທຶນ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ 2016 ແລະ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມະການສົ່ງເສີມແລະ ຄຸ້ມຄອງການລົງທຶນ ເລກທີ 05/ນຍ, ລົງວັນທີ 05 ມັງກອນ 2018.

### ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ມີ ສອງ ຂັ້ນ ຄື:

1. ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ຂຽນຫຍໍ້ວ່າ "ຄລທ.ສ";
2. ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ ຂຽນຫຍໍ້ວ່າ "ຄລທ.ຂ".

❑ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ



1) ໂຄງປະກອບ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ

1. ຮອງນາຍົກລັດຖະມົນຕີ ເປັນປະທານ;
2. ລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ ເປັນຮອງປະທານ ທັງເປັນຜູ້ປະຈຳການ;
3. ລັດຖະມົນຕີ ກະຊວງ ອຸດສາຫະກຳ ແລະ ການຄ້າ ເປັນຮອງປະທານ;
4. ຮອງລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ ເປັນຄະນະ;
5. ຮອງລັດຖະມົນຕີກະຊວງ ການເງິນ ເປັນຄະນະ;
6. ຮອງລັດຖະມົນຕີກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ;
7. ຮອງລັດຖະມົນຕີກະຊວງ ພະລັງງານ ແລະ ບໍ່ແຮ່ ເປັນຄະນະ;
8. ຮອງລັດຖະມົນຕີກະຊວງ ກະສິກຳ ແລະ ປ່າໄມ້ ເປັນຄະນະ;
9. ຮອງລັດຖະມົນຕີກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;
10. ຮອງລັດຖະມົນຕີກະຊວງ ໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;
11. ຮອງລັດຖະມົນຕີກະຊວງ ຖະແຫຼງຂ່າວ ວັດທະນາທຳ ແລະ ທ່ອງທ່ຽວ ເປັນຄະນະ;
12. ຮອງລັດຖະມົນຕີກະຊວງ ປ້ອງກັນຄວາມສະຫງົບ ເປັນຄະນະ.

2) ສິດ ແລະ ໜ້າທີ

1. ພິຈາລະນາອະນຸຍາດ ການລົງທຶນໃນກິດຈະການຄວບຄຸມ, ກິດຈະການສຳປະທານ, ກິດຈະການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ (PPP) ແລະ ການລົງທຶນພັດທະນາເຂດເສດຖະກິດພິເສດ;
2. ຊີ້ນຳການຈັດຕັ້ງປະຕິບັດ ວຽກງານບໍລິການ ການລົງທຶນປະຕູດຽວ ໃນການສົ່ງເສີມ ແລະ ດຶງດູດການລົງທຶນ ໃຫ້ມີປະສິດທິພາບ, ປະສິດທິຜົນ;
3. ຊີ້ນຳ ການເຄື່ອນໄຫວ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ;
4. ຊີ້ນຳ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ສັນຍາ ທີ່ພົວພັນກັບການລົງທຶນໃນຂັ້ນຄຸ້ມຄອງຂອງຕົນ;
5. ພິຈາລະນາ ການປ່ຽນແປງ, ການໂຈະ ຫຼື ຍົກເລີກ ການລົງທຶນໃນກິດຈະການຄວບຄຸມ, ກິດຈະການສຳປະທານ, ກິດຈະການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ (PPP), ການລົງທຶນພັດທະນາເຂດເສດຖະກິດພິເສດ ແລະ ເຂດອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ ຕາມທີ່ໄດ້ການົດໄວ້ໃນມາດຕາ 47, 86 ແລະ 88 ຂອງກົດໝາຍສົ່ງເສີມການລົງທຶນ (2016);
6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສົ່ງເສີມການລົງ ທຶນຕາມການມອບໝາຍ;
7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ລັດຖະບານ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

❑ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ




1) ໂຄງປະກອບ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ

1. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນປະທານ;
2. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ເປັນຮອງປະທານ;
3. ຫົວໜ້າພະແນກ ແຜນການ ແລະ ການລົງທຶນ ເປັນຄະນະ, ທັງເປັນຜູ້ປະຈຳການ;
4. ຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າ ເປັນຄະນະ;
5. ຫົວໜ້າພະແນກ ການເງິນ ເປັນຄະນະ;
6. ຫົວໜ້າພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ;
7. ຫົວໜ້າພະແນກ ພະລັງງານ ແລະ ບໍ່ແຮ່ ເປັນຄະນະ;
8. ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ ເປັນຄະນະ;
9. ຫົວໜ້າພະແນກ ແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;
10. ຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;
11. ຫົວໜ້າພະແນກ ຖະແຫຼງຂ່າວ ວັດທະນາທຳ ແລະ ທ່ອງທ່ຽວ ເປັນຄະນະ;
12. ຫົວໜ້າກອງບັນຊາການ ປ້ອງກັນຄວາມສະຫງົບ ເປັນຄະນະ.

2) ສິດ ແລະ ໜ້າທີ່

1. ພິຈາລະນາອະນຸຍາດ ການລົງທຶນໃນກິດຈະການຄວບຄຸມ ແລະ ສຳປະທານ ຕາມການແບ່ງຂັ້ນຄຸ້ມຄອງຂອງຂະແໜງການທີ່ກ່ຽວຂ້ອງ;
2. ຊີ້ນຳການຈັດຕັ້ງປະຕິບັດ ວຽກງານບໍລິການ ການລົງທຶນປະຕູດຽວໃນການສົ່ງເສີມ ແລະ ດຶງດູດການລົງທຶນ ໃຫ້ມີປະສິດທິພາບ, ປະສິດທິຜົນ;
3. ຊີ້ນຳ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ສັນຍາທີ່ພົວພັນກັບການລົງທຶນໃນຂັ້ນຄຸ້ມຄອງຂອງຕົນ;

4. ພິຈາລະນາ ການປ່ຽນແປງ, ການໂຈະ ຫຼື ຍົກເລີກ ການລົງທຶນໃນກິດຈະການຄວບຄຸມ ແລະ ສຳປະທານ ຕາມຂັ້ນຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47, 86 ແລະ 88 ຂອງກົດໝາຍສະບັບນີ້;
5. ຊີ້ນຳການເຄື່ອນໄຫວ ຂອງ ຄະນະຄຸ້ມຄອງເຂດ ແລະ ຂະແໜງການທີ່ກ່ຽວຂ້ອງ ຂັ້ນແຂວງຢ່າງເປັນປະຈຳ;
6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສົ່ງເສີມການລົງທຶນ ຕາມການມອບໝາຍ;
7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## 1.5 ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ “ທຄວ” ພາສາອັງກິດ “Enterprise Registration and Management Department “ERM” ແມ່ນພາກສ່ວນຄຸ້ມຄອງບໍລິຫານໜຶ່ງໃນໂຄງປະກອບກົງຈັກຂອງກະຊວງອຸດສາຫະກຳ ແລະ ການຄ້າ. ມີພາລະບົດບາດໃນການເປັນເສນາທິການໃຫ້ແກ່ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໃນວຽກງານທະບຽນ ແລະ ຄຸ້ມຄອງວິສາຫະກິດ ລະອຽດມີຂໍ້ຕົກລົງດັ່ງລຸ່ມນີ້:

1. ຄຸ້ມຄອງທະບຽນວິສາຫະກິດຂອງທຸກປະເພດວິສາຫະກິດ (ລັດ, ປະສົມ,ລວມໝູ່ ແລະ ເອກະຊົນ);
2. ບໍລິການຂຶ້ນທະບຽນວິສາຫະກິດໃຫ້ແກ່ຜູ້ລົງທຶນ;
3. ເກັບກຳ, ປົກປັກຮັກສາ ແລະ ບໍລິການສະໜອງຂໍ້ມູນວິສາຫະກິດແກ່ສາທາລະນະຊົນ;
4. ສົ່ງເສີມບັນຍາກາດການປະກອບທຸລະກິດ ທີ່ ການສ້າງຕັ້ງທຸລະກິດ ແກ່ຜູ້ລົງທຶນ.

ນອກຈາກ ສີ່ ພາລະບົດບາດທີ່ກ່າວມາເທິງນີ້, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຍັງມີໜ້າທີ່ໃນການບໍລິການໃຫ້ຄຳປຶກສາດ້ານກົດໝາຍທີ່ກ່ຽວຂ້ອງ ແກ່ຜູ້ໃຊ້ບໍລິການ ໂດຍສະເພາະຜູ້ລົງທຶນ.

(ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເລກທີ 1752 /ອຄ, ລົງວັນທີ 19 ກັນຍາ 2016)

# ພາກທີ

# 02

## ຫຼັກການ ແລະ ນະໂຍບາຍ ສົ່ງເສີມການລົງທຶນ

## 2.1 ຫຼັກການສົ່ງເສີມການລົງທຶນ

1. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂະແໜງການ, ເຂດ ແລະ ການຂະຫຍາຍເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ສົມທົບແໜ້ນ ກັບການເພີ່ມທະວີ ການຄຸ້ມຄອງຂອງລັດຢ່າງລວມສູນ ເປັນເອກະພາບ ໃນທົ່ວປະເທດ;
3. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ, ລວມໝູ່, ປະຊາຊົນ ແລະ ຜູ້ລົງທຶນ;
4. ຮັບປະກັນການບໍລິການ ການລົງທຶນປະຕູດຽວ ໃຫ້ສະດວກ, ກະທັດຮັດ, ວ່ອງໄວ, ໂປ່ງໃສ ມີປະສິດທິພາບ ແລະ ຖືກຕ້ອງຕາມກົດໝາຍ;
5. ຮັບປະກັນການແຂ່ງຂັນທາງທຸລະກິດທີ່ເປັນທຳ;
6. ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ເສີມຂະຫຍາຍວັດທະນະທຳອັນດີງາມຂອງຊາດ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ, ມີປະສິດທິຜົນຕາມທິດສີຂຽວ ແລະ ຍືນຍົງ.

## 2.2 ນະໂຍບາຍສົ່ງເສີມການລົງທຶນ

ລັດ ສົ່ງເສີມການລົງທຶນຂອງທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ດ້ວຍການວາງນະໂຍບາຍ ເພື່ອສ້າງສະພາບແວດລ້ອມ, ເງື່ອນໄຂອຳນວຍຄວາມສະດວກຕ່າງໆ ເປັນຕົ້ນ ການສ້າງພື້ນຖານໂຄງລ່າງ, ການສະໜອງຂໍ້ມູນ ຂ່າວສານທີ່ຈຳເປັນ, ການໃຫ້ນະໂຍບາຍດ້ານພາສີ, ສ່ວຍສາອາກອນ, ດ້ານແຮງງານ, ການໃຫ້ສິດນຳໃຊ້ທີ່ດິນ, ການເຂົ້າເຖິງແຫຼ່ງທຶນ, ການປະຕິບັດຄວາມສະເໝີພາບ ລວມທັງການຮັບຮູ້, ການປົກປ້ອງກຳມະສິດ ກ່ຽວກັບ ສິດນຳໃຊ້, ສິດໄດ້ຮັບໝາກຜົນ, ສິດສືບທອດ, ສິດໂອນ ແລະ ສິດອື່ນໆ ຕາມທີ່ກົດໝາຍກຳນົດໄວ້.

ລັດ ສົ່ງເສີມໃຫ້ລົງທຶນເຂົ້າໃສ່ທຸກຂະແໜງການ, ກິດຈະການ ແລະ ທຸກເຂດ ໃນທົ່ວປະເທດ ເວັ້ນເສຍແຕ່ເຂດ ແລະ ກິດຈະການ ທີ່ແຕະຕ້ອງເຖິງຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງຊາດ, ມີຜົນສະທ້ອນອັນຮ້າຍແຮງຕໍ່ສິ່ງແວດລ້ອມໃນປັດຈຸບັນ ແລະ ຍາວນານ, ຕໍ່ສຸຂະພາບຂອງປະຊາຊົນ ແລະ ວັດທະນະທຳອັນດີງາມຂອງຊາດ. ນະໂຍບາຍສົ່ງເສີມການລົງທຶນປະກອບມີ:

1) ນະໂຍບາຍສົ່ງເສີມກິດຈະການຕາມຂະແໜງການ;
2) ນະໂຍບາຍສົ່ງເສີມຕາມເຂດ;
3) ນະໂຍບາຍສົ່ງເສີມດ້ານ ພາສີ, ສ່ວຍສາອາກອນ , ນະໂຍບາຍສົ່ງເສີມດ້ານການນາໃຊ້ທີ່ດິນ ແລະ ນະໂຍບາຍອື່ນ.

### 2.2.1 ນະໂຍບາຍສົ່ງເສີມກິດຈະການຕາມຂະແໜງການ

1 ການນຳໃຊ້ເຕັກໂນໂລຊີສູງ-ທັນສະໄໝ, ຄົ້ນຄວ້າວິໄຈວິທະຍາສາດ, ຄົ້ນຄວ້າ-ການພັດທະນາ, ການນຳໃຊ້ນະວັດຕະກຳ, ເປັນມິດກັບສິ່ງແວດລ້ອມ, ປະຢັດຊັບພະຍາກອນທຳມະຊາດ ແລະ ພະລັງງານ;

2 ກະສິກຳສະອາດ, ປອດສານພິດ, ການຜະລິດແນວພັນພືດ, ແນວພັນສັດ, ການປູກພືດອຸດສາຫະກຳ, ການພັດທະນາປ່າໄມ້, ປົກປັກຮັກສາສິ່ງແວດລ້ອມ ແລະ ຊີວະນາໆພັນ, ກິດຈະການສົ່ງເສີມການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;

3 ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ ທີ່ເປັນມິດຕໍ່ສິ່ງແວດລ້ອມ, ອຸດສາຫະກຳປຸງແຕ່ງຫັດຖະກຳທີ່ເປັນມູນເຊື້ອ ແລະ ເອກະລັກຂອງຊາດ;

4 ການພັດທະນາອຸດສາຫະກຳທ່ອງທ່ຽວ ທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ເປັນມິດກັບສິ່ງແວດລ້ອມ ແລະ ຍືນຍົງ;

5 ການສຶກສາ, ກິລາ-ກາຍຍະກຳ, ພັດທະນາຊັບພະຍາກອນມະນຸດ ແລະ ພັດທະນາສີມືແຮງງານ, ສະຖາບັນ ຫຼື ສູນຝຶກວິຊາຊີບ, ຜະລິດອຸປະກອນຮັບໃຊ້ການສຶກສາ ແລະ ກິລາ;

7 ການລົງທຶນ, ການບໍລິການ ແລະ ການພັດທະນາພື້ນຖານໂຄງລ່າງສາທາລະນະປະໂຫຍດ ເພື່ອແກ້ໄຂການສັນຈອນແອອັດໃນຕົວເມືອງ ແລະ ບ່ອນຢູ່ອາໄສ; ການກໍ່ສ້າງພື້ນຖານໂຄງລ່າງຮັບໃຊ້ໃຫ້ແກ່ການຜະລິດກະສິກຳ ແລະ ອຸດສາຫະກຳ; ການບໍລິການຂົນສົ່ງສິນຄ້າ, ບໍລິການ ທາງຜ່ານ ແລະ ເຊື່ອມໂຍງລະຫວ່າງປະເທດ;

6 ສ້າງໂຮງໝໍທັນສະໄໝ, ໂຮງງານຜະລິດຢາ ແລະ ອຸປະກອນການແພດ, ການຜະລິດ ແລະ ປິ່ນປົວດ້ວຍຢາພື້ນເມືອງ;

8 ທະນາຄານນະໂຍບາຍ ແລະ ສະຖາບັນການເງິນຈຸລະພາກ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນແລະຊຸມຊົນ ຜູ້ທີ່ບໍ່ສາມາດເຂົ້າເຖິງທະນາຄານ;

9 ສູນການຄ້າທັນສະໄໝທີ່ສົ່ງເສີມຜະລິດຕະພັນພາຍໃນ ແລະ ຍີ່ຫໍ້ທີ່ມີຊື່ສຽງຂອງໂລກ, ສູນວາງ ສະແດງ ແລະ ຕະຫຼາດນັດ ຜະລິດຕະພັນພາຍໃນທາງດ້ານອຸດສາຫະກຳ, ຫັດຖະກຳ ແລະ ກະສິກຳ.

### 2.2.2 ນະໂຍບາຍສົ່ງເສີມຕາມເຂດ

ນະໂຍບາຍສົ່ງເສີມຕາມເຂດ ໝາຍເຖິງການແບ່ງເຂດ ທີ່ໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ຊຶ່ງຜັນຂະຫຍາຍຈາກມາດຕາ 10 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໂດຍກຳນົດເປັນບັນຊີລະອຽດ ຕາມເອກະສານຊ້ອນທ້າຍ II. ເອກະສານຊ້ອນທ້າຍດັ່ງກ່າວ ອາດມີການປັບປຸງ ເພື່ອໃຫ້ສອດຄອງກັບສະພາບເປັນຈິງໃນແຕ່ລະໄລຍະ. (ລາຍຊື່ເມືອງໃນແຕ່ລະເຂດສາມາດເບິ່ງໄດ້ໃນເອກະສານຊ້ອນທ້າຍ 2)

| ເຂດ 1: | ເຂດ 2: | ເຂດ 3: |
|---|---|---|
| ເຂດທຸກຍາກ, ຫ່າງໄກສອກຫຼີກ, ພື້ນຖານໂຄງລ່າງເສດຖະກິດ-ສັງຄົມບໍ່ເອື້ອອຳນວຍແກ່ການລົງທຶນ | ເຂດທີ່ມີພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ | ເຂດເສດຖະກິດພິເສດ |

### 2.2.3 ນະໂຍບາຍສົ່ງເສີມດ້ານ ພາສີ, ສ່ວຍສາອາກອນ ແລະ ການນຳໃຊ້ທີ່ດິນ

- ນະໂຍບາຍດ້ານອາກອນກຳໄລ

ຜູ້ລົງທຶນ ທີ່ລົງທຶນໃນກິດຈະການຕາມຂະແໜງການ ແລະ ເຂດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ແລະ ມາດຕາ 10 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຈະໄດ້ຮັບນະໂຍບາຍຍົກເວັ້ນອາກອນກຳໄລ ດັ່ງນີ້:

| ເຂດ | ໄລຍະຍົກເວັ້ນ ອາກອນກຳໄລ | ໄລຍະຍົກເວັ້ນ ອາກອນກຳໄລເພີ່ມເຕີ່ມ |
|---|---|---|
| ເຂດ 1 | 10 ປີ | 5 ປີ<br>(ກະສິກຳສະອາດ, ປອດສານພິດ; ອຸດສາຫະກຳປຸງແຕ່ງ ຜະລິດຕະພັນກະສິກຳ; ສຶກສາ ແລະ ສາທາ) |
| ເຂດ 2 | 4 ປີ | 3 ປີ<br>(ກະສິກຳສະອາດ, ປອດສານພິດ; ອຸດສາຫະກຳປຸງແຕ່ງ ຜະລິດຕະພັນກະສິກຳ; ສຶກສາ ແລະ ສາທາ) |
| ເຂດ 3 | ປະຕິບັດຕາມທີ່ກຳນົດໄວ້ໃນລະບຽບການສະເພາະ | |

- ນະໂຍບາຍສົ່ງເສີມດ້ານພາສີ ແລະ ອາກອນມູນຄ່າເພີ່ມ

ຜູ້ລົງທຶນ ທີ່ລົງທຶນຢູ່ ສປປ ລາວ, ນອກຈາກໄດ້ຮັບນະໂຍບາຍດ້ານອາກອນກຳໄລ ແລ້ວ ຍັງຈະໄດ້ຮັບນະໂຍບາຍດ້ານພາສີ ແລະ ອາກອນມູນຄ່າເພີ່ມ ດັ່ງນີ້:

1/ ການນຳເຂົ້າວັດຖຸປະກອນ ທີ່ບໍ່ສາມາດ ສະໜອງ ຫຼື ຜະລິດໄດ້ໃນ ສປປ ລາວ ເພື່ອສ້າງເປັນຊັບສົມບັດຄົງທີ່ ແລະ ພາຫະນະກົນຈັກຮັບໃຊ້ການຜະລິດໂດຍກົງ ຈະໄດ້ຮັບການຍົກເວັ້ນ ພາສີ ແລະ ອາກອນມູນຄ່າເພີ່ມ; ສ່ວນການນຳເຂົ້າ ນ້ຳມັນເຊື້ອໄຟ, ອາຍແກັສ, ນ້ຳມັນຫຼໍ່ລື່ນ, ພາຫະນະຮັບໃຊ້ບໍລິຫານ ແລະ ວັດຖຸປະກອນອື່ນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

ສຳລັບການນຳເຂົ້າຊົ່ວຄາວ ພາຫະນະກົນຈັກ ຕ້ອງໄດ້ປະຕິບັດຕາມ ກົດໝາຍວ່າດ້ວຍ ພາສີ.

2/ ການນຳເຂົ້າ ວັດຖຸດິບ, ແຮ່ທາດ, ວັດຖຸປະກອນ ແລະ ຊິ້ນສ່ວນປະກອບ ທີ່ຮັບໃຊ້ການຜະລິດເພື່ອສົ່ງອອກ ຈະໄດ້ຮັບການຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມ, ໃນກໍລະນີສິນຄ້າດັ່ງກ່າວບໍ່ສົ່ງອອກ ໃຫ້ເກັບພາສີ, ອາກອນ ຕາມກົດໝາຍທີ່ກ່ຽວຂ້ອງກຳນົດ;

3/ ການນຳໃຊ້ ວັດຖຸດິບ, ວັດຖຸປະກອນ ແລະ ຊິ້ນສ່ວນປະກອບ ຢູ່ພາຍໃນ ທີ່ຮັບໃຊ້ການຜະລິດ ເປັນຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ເພື່ອສົ່ງອອກ ຖືກຍົກເວັ້ນອາກອນມູນຄ່າເພີ່ມ.

- ສຳລັບການສົ່ງອອກ ວັດຖຸດິບ ແລະ ຜະລິດຕະພັນ ຈາກແຮ່ທາດ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.
- ລັດຖະບານ ເປັນຜູ້ກຳນົດ ບັນຊີລາຍການຜະລິດຕະພັນເຄິ່ງສຳເລັດຮູບ ເພື່ອສົ່ງອອກ.

- ນະໂຍບາຍຍົກເວັ້ນ ການເກັບຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດ

ຜູ້ລົງທຶນ ທີ່ລົງທຶນໃນກິດຈະການຕາມຂະແໜງການ ທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສົ່ງເສີມການລົງທຶນ ໄດ້ຮັບນະໂຍບາຍຍົກເວັ້ນການເກັບຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດ ດັ່ງນີ້:

| ເຂດ | ໄລຍະຍົກເວັ້ນ<br>ຄ່າເຊົ່າ ຫຼື ຄ່າສຳປະທານ | ໄລຍະຍົກເວັ້ນ<br>ຄ່າເຊົ່າ ຫຼື ຄ່າສຳປະທານ ເພີ່ມເຕີມ |
|---|---|---|
| ເຂດ 1 | 10 ປີ | 5 ປີ<br>(ກະສິກຳສະອາດ, ປອດສານພິດ; ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ; ສຶກສາ ແລະ ສາທາ) |
| ເຂດ 2 | 5 ປີ | 3 ປີ<br>(ກະສິກຳສະອາດ, ປອດສານພິດ; ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ; ສຶກສາ ແລະ ສາທາ) |
| ເຂດ 3 | ປະຕິບັດຕາມທີ່ກຳນົດໄວ້ໃນລະບຽບການສະເພາະ | |

## 2.3 ການໃຫ້ນະໂຍບາຍສົ່ງເສີມການລົງທຶນ

### 2.3.1 ເງື່ອນໄຂການອະນຸຍາດໃຫ້ນະໂຍບາຍສົ່ງເສີມການລົງທຶນ

ວິສາຫະກິດ ທີ່ລົງທຶນຢູ່ ສປປ ລາວ ທີ່ມີຈຸດປະສົງຂໍນະໂຍບາຍດ້ານອາກອນກຳໄລ ແລະ ດ້ານຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດ ຕ້ອງມີເງື່ອນໄຂ ດັ່ງນີ້:

1) ວິສາຫະກິດ ທີ່ລົງທຶນໃນກິດຈະການສົ່ງເສີມການລົງທຶນ ຕາມມາດຕາ 9 ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ປະຕິບັດຕາມເງື່ອນໄຂສະເພາະ ຊຶ່ງມີລາຍລະອຽດກຳນົດໄວ້ ໃນເອກະສານຊ້ອນທ້າຍເລກທີ 1 ຂອງປຶ້ມຄູ່ມືສະບັບນີ້;
2) ການລົງທຶນ ຕ້ອງມີມູນຄ່າຢ່າງໜ້ອຍ 1.2 ຕື້ກີບ ຫຼື ມີການນຳໃຊ້ນັກວິຊາການລາວ ແຕ່ 30 ຄົນ ຫຼື ມີການນຳໃຊ້ແຮງງານລາວທີ່ມີສັນຍາແຮງງານ ຢ່າງຕ່ຳ 1 ປີ ແຕ່ 50 ຄົນ ຂຶ້ນໄປ;
3) ຕ້ອງຖອກທຶນຈົດທະບຽນໃຫ້ຄົບຖ້ວນ ໂດຍຜ່ານການຢັ້ງຢືນນຳ ທະນາຄານແຫ່ງ ສປປ ລາວ ຕາມທີ່ໄດ້ກຳນົດໃນມາດຕາ 53 ແລະ 54 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;
4) ດຳເນີນທຸລະກິດປົກກະຕິ ແລະ ປະຕິບັດພັນທະພາສີ, ອາກອນ ແລະ ພັນທະອື່ນໆ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງຄົບຖ້ວນ;
5) ປະຕິບັດພັນທະດ້ານສິ່ງແວດລ້ອມຢ່າງເຄັ່ງຄັດ ແລະ ຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການ.

### 2.3.2 ການສະເໜີຂໍນະໂຍບາຍສົ່ງເສີມການລົງທຶນ

ວິສາຫະກິດ ທີ່ຂັ້ນສູນກາງ ເປັນຜູ້ອະນຸມັດ ການລົງທຶນ ຫຼື ທະບຽນວິສາຫະກິດ ແມ່ນໃຫ້ສະເໜີຕໍ່ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ໃນນາມຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ ເປັນຜູ້ຄົ້ນຄວ້າ ແລະ ອອກໃບສົ່ງເສີມການລົງທຶນ.

ວິສາຫະກິດ ທີ່ຂັ້ນແຂວງ, ນະຄອນຫຼວງ ເປັນຜູ້ອະນຸມັດ ການລົງທຶນ ຫຼື ທະບຽນວິສາຫະກິດ ແມ່ນໃຫ້ສະເໜີຕໍ່ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ໃນນາມຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນແຂວງ ເປັນຜູ້ຄົ້ນຄວ້າ ແລະ ອອກໃບສົ່ງເສີມການລົງທຶນ.

ສໍາລັບ ໂຄງການລົງທຶນໃນກິດຈະການສໍາປະທານຂະໜາດໃຫຍ່ ທີ່ມີສັນຍາສໍາປະທານກັບລັດຖະບານ ແລະ ມີມະຕິສະພາແຫ່ງຊາດຮັບຮອງ ຕໍ່ການໃຫ້ນະໂຍບາຍສົ່ງເສີມການລົງທຶນ ທີ່ໄດ້ຮັບນະໂຍບາຍສົ່ງເສີມເກີນກົດໝາຍກໍານົດ ແມ່ນບໍ່ຈໍາເປັນຕ້ອງຍື່ນສະເໜີຂໍໃບສົ່ງເສີມການລົງທຶນ ອີກ.

### 2.3.3 ການປະກອບເອກະສານ ຂໍນະໂຍບາຍສົ່ງເສີມການລົງທຶນ

ການຂໍນະໂຍບາຍສົ່ງເສີມການລົງທຶນ ດ້ານອາກອນກໍາໄລ ແລະ ດ້ານຄ່າເຊົ່າ ຫຼື ຄ່າສໍາປະທານທີ່ດິນຂອງລັດ ຕ້ອງປະກອບມີເອກະສານ ດັ່ງນີ້:

1) ໃບສະເໜີຂອງບໍລິສັດ;
2) ສໍາເນົາ ໃບອະນຸຍາດລົງທຶນ (ຖ້າມີ), ໃບທະບຽນວິສາຫະກິດ, ໃບອະນຸຍາດດໍາເນີນທຸລະກິດ, ໃບຢັ້ງຢືນການມອບພັນທະອາກອນ ແລະ ສັນຍາເຊົ່າທີ່ດິນ ຫຼື ສັນຍາສໍາປະທານກັບລັດຖະບານ (ຖ້າມີ);
3) ສໍາເນົາ ໃບຢັ້ງຢືນການນໍາເຂົ້າທຶນ ທີ່ເປັນເງິນ ແລະ/ຫຼື ເປັນວັດຖຸ;
4) ສໍາເນົາ ໃບຢັ້ງຢືນສິ່ງແວດລ້ອມ;
5) ສໍາເນົາ ບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນການດໍາເນີນທຸລະກິດ ທີ່ໄດ້ຮັບການຢັ້ງຢືນຈາກຂະແໜງການກ່ຽວຂ້ອງ;
6) ເອກະສານກ່ຽວຂ້ອງອື່ນໆ.

### 2.3.4 ຂັ້ນຕອນການພິຈາລະນາໃຫ້ນະໂຍບາຍສົ່ງເສີມການລົງທຶນ

ຂະແໜງການແຜນການ ແລະ ການລົງທຶນ ໄດ້ຮັບເອກະສານຄົບຖ້ວນ ຕາມທີ່ກໍານົດໄວ້ໃນຂໍ້ 2.3.3 ຂອງປື້ມຄູ່ມືສະບັບນີ້, ຂະແໜງການແຜນການ ແລະ ການລົງທຶນ ຕ້ອງສົ່ງເອກະສານຄໍາຮ້ອງຂໍຄໍາເຫັນ ແລະ ປະສານສົມທົບກັບຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ລົງກວດກາພື້ນທີ່ຕົວຈິງ ພາຍໃນເວລາ 10 ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານເປັນຕົ້ນໄປ.

ພາຍຫຼັງມີຄໍາເຫັນຈາກຂະແໜງການ ຫ້ອງການບໍລິການ ການລົງທຶນປະຕູດຽວ ຄົ້ນຄວ້ານໍາສະເໜີຕໍ່ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາຕົກລົງດ້ານຫຼັກການ ພາຍໃນເວລາ 15 ວັນລັດຖະການ.

ຫຼັງຈາກນັ້ນ, ຫ້ອງການບໍລິການ ການລົງທຶນປະຕູດຽວ ອອກໃບສົ່ງເສີມການລົງທຶນ ພາຍໃນ 05 ວັນລັດຖະການ. ໃນກໍລະນີ ບໍ່ເຫັນດີ, ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ບໍລິສັດ ຊາບພາຍໃນເວລາ 02 ວັນລັດຖະການ ນັບແຕ່ວັນໄດ້ຮັບການຕົກລົງ.

ພາຍຫຼັງຂະແໜງການແຜນການ ແລະ ການລົງທຶນ ອອກໃບສົ່ງເສີມການລົງທຶນໃຫ້ແກ່ບໍລິສັດແລ້ວ ຕ້ອງນໍາສົ່ງໃຫ້ຂະແໜງການການເງິນ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຕິດຕາມ ແລະ ຈັດຕັ້ງປະຕິບັດ.

## 2.4 ການຈັດຕັ້ງປະຕິບັດນະໂຍບາຍຍົກເວັ້ນອາກອນກຳໄລ ແລະ ຄ່າເຊົ່າ ຫຼື ສຳປະທານທີ່ດິນຂອງລັດ

### 2.4.1 ການຈັດຕັ້ງປະຕິບັດຂອງວິສາຫະກິດ

ການຈັດຕັ້ງປະຕິບັດຂອງວິສາຫະກິດພາຍຫຼັງໄດ້ຮັບນະໂຍບາຍ ຕ້ອງປະຕິບັດ ດັ່ງລຸ່ມນີ້:

- ປະຕິບັດການໄດ້ຮັບນະໂຍບາຍ ຍົກເວັ້ນອາກອນກຳໄລ ແລະ ຍົກເວັ້ນຄ່າເຊົ່າ ຫຼື ສຳປະທານທີ່ດິນນຳລັດ ຕາມການກຳນົດໄລຍະເວລາຍົກເວັ້ນ ທີ່ໄດ້ກຳນົດໄວ້ໃນໃບສົ່ງເສີມການລົງທຶນ;
- ຕ້ອງປະຕິບັດພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ ຢ່າງເຄັ່ງຄັດ, ສົ່ງເສີມການພັດທະນາ ແລະ ເຕີບໂຕ ແບບສີຂຽວ;
- ສະຫຼຸບ, ລາຍງານ ການດຳເນີນທຸລະກິດຂອງຕົນ ປະຈຳ 06 ເດືອນ ແລະ ປະຈຳປີ ໃຫ້ຂະແໜງແຜນການ ແລະ ການລົງທຶນ, ຂະແໜງການເງິນ ແລະ ຂະແໜງການອື່ນກ່ຽວຂ້ອງ ຊາບ;
- ຕ້ອງເຄື່ອນໄຫວດຳເນີນກິດຈະການຂອງວິສາຫະກິດ ຕາມບົດວິພາກເສດຖະກິດ-ເຕັກນິກ ຄຽງຄູ່ກັບການ ປົກປັກຮັກສາສະພາບແວດລ້ອມ ຕາມກົດໝາຍ ແລະ ລະບຽບການ;
- ຕ້ອງເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຢ່າງຄົບຖ້ວນ ແລະ ທັນເວລາ ຕາມກົດໝາຍ ແລະ ລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ.

### 2.4.2 ການຈັດຕັ້ງປະຕິບັດຂອງຂະແໜງການພາກລັດ

ການຈັດຕັ້ງປະຕິບັດຂອງຂະແໜງການພາກລັດ ຕ້ອງປະຕິບັດ ດັ່ງລຸ່ມນີ້:

- ຂະແໜງການແຜນການ ແລະ ການລົງທຶນ ເປັນຜູ້ອະນຸຍາດ ການໃຫ້ນະໂຍບາຍສົ່ງເສີມແກ່ວິສາຫະກິດ ທີ່ລົງທຶນໃນກິດຈະການສົ່ງເສີມການລົງທຶນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ຕ້ອງແຈ້ງໃຫ້ຂະແໜງການການເງິນ ເປັນຜູ້ຈັດຕັ້ງປະຕິບັດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ;
- ຂະແໜງການແຜນການ ແລະ ການລົງທຶນ ເປັນຜູ້ຄຸ້ມຄອງວຽກງານການໃຫ້ນະໂຍບາຍຍົກເວັ້ນອາກອນກຳໄລ ແລະ ຍົກເວັ້ນຄ່າເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ໃຫ້ແກ່ວິສາຫະກິດທີ່ລົງທຶນຢູ່ ສປປ ລາວ ແລະ ເປັນເຈົ້າການປະສານສົມທົບກັບ ຂະແໜງການການເງິນ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
- ຂະແໜງການການເງິນ ເປັນຜູ້ຈັດຕັ້ງປະຕິບັດການຍົກເວັ້ນອາກອນກຳໄລ ແລະ ຍົກເວັ້ນຄ່າເຊົ່າ ຫຼື ສຳປະທານທີ່ດິນນຳລັດໃຫ້ແກ່ວິສາຫະກິດ ຕາມກຳນົດໄລຍະເວລາຍົກເວັ້ນທີ່ໄດ້ກຳນົດໄວ້ໃນໃບສົ່ງເສີມການລົງທຶນ, ພາຍຫຼັງສິ້ນສຸດໄລຍະຍົກເວັ້ນອາກອນກຳໄລ ແລະ ຍົກເວັ້ນຄ່າເຊົ່າ ຫຼື ສຳປະທານທີ່ດິນນຳລັດ ດັ່ງກ່າວແລ້ວ ແມ່ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. ພ້ອມທັງ, ສະຫຼຸບລາຍງານປະຈຳໄຕມາດ ແລະ ປະຈຳປີ ສົ່ງໃຫ້ຂະແໜງແຜນການ ແລະ ການລົງທຶນ ຢ່າງເປັນປົກກະຕິ.

## 2.5 ການສິ້ນສຸດໄລຍະເວລາໄດ້ຮັບນະໂຍບາຍຍົກເວັ້ນອາກອນກຳໄລ ແລະ ຄ່າເຊົ່າ ຫຼື ສຳປະທານທີ່ດິນຂອງລັດ

ວິສາຫະກິດທີ່ໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ຈະສິ້ນສຸດໃນກໍລະນີລຸ່ມນີ້:

- ໝົດອາຍຸ ຕາມກຳນົດເວລາທີ່ໄດ້ຮັບການຍົກເວັ້ນ ທີ່ໄດ້ລະບຸຢູ່ໃນໃບສົ່ງເສີມການລົງທຶນ;
- ມີການຖອນ ຫຼື ຖືກຍົກເລີກ ໃບສົ່ງເສີມການລົງທຶນ;
- ກໍລະນີ ມີການຍຸບເລີກວິສາຫະກິດ ຫຼື ວິສາຫະກິດລົ້ມລະລາຍ ຕາມຂັ້ນຕອນທີ່ໄດ້ກຳນົດໃນກົດໝາຍ ແລະ ລະບຽບການ.

## 2.6 ການຄຸ້ມຄອງ ແລະ ຕິດຕາມກວດກາ

ຂະແໜງການແຜນການ ແລະ ການລົງທຶນ ເປັນຜູ້ອະນຸຍາດ, ຄຸ້ມຄອງ ຕິດຕາມ ກວດກາ ວຽກງານການໃຫ້ນະໂຍບາຍສົ່ງເສີມການລົງທຶນ ດ້ານອາກອນກຳໄລ ແລະ ດ້ານຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດ ໃຫ້ແກ່ວິສາຫະກິດທີ່ລົງທຶນ ຢູ່ ສປປ ລາວ ແລະ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງ ການເງິນ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ. ພ້ອມທັງ, ກຳນົດມາດຕະການໃນການຄຸ້ມຄອງ ເພື່ອຈຳກັດຊ່ອງຫວ່າງການສວຍໃຊ້ນະໂຍບາຍສົ່ງເສີມການລົງທຶນ ດ້ານອາກອນກຳໄລ ແລະ ດ້ານຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດ ໃຫ້ມີຄວາມຮັດກຸມ ເພື່ອຈັດຕັ້ງຄຸ້ມຄອງການນຳໃຊ້ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ລະບຽບການ.

## 2.7 ມາດຕະການຕໍ່ຜູ້ລະເມີດ

ໃນກໍລະນີ ວິສາຫະກິດ ຫາກເຄື່ອນໄຫວບໍ່ສອດຄ່ອງກັບກິດຈະການທີ່ໄດ້ຮັບການສົ່ງເສີມ ແລະ ບໍ່ປະຕິບັດ ຕາມກົດໝາຍ ແລະ ລະບຽບການ ຂະແໜງແຜນການ ແລະ ການລົງທຶນ ຕ້ອງອອກໜັງສືແຈ້ງເຕືອນເພື່ອໃຫ້ປັບປຸງແກ້ໄຂ ພາຍໃນກຳນົດ 45 ວັນລັດຖະການ ນັບແຕ່ມື້ໄດ້ຮັບໜັງສືແຈ້ງເຕືອນເປັນຕົ້ນໄປ. ພາຍຫຼັງສິ້ນສຸດ ໄລຍະເວລາແຈ້ງເຕືອນ ຫາກວິສາຫະກິດບໍ່ສາມາດແກ້ໄຂ ຫຼື ປັບປຸງ ໄດ້ຢ່າງຖືກຕ້ອງ ແມ່ນຈະຖືກແຈ້ງຖອນ ຫຼື ຍົກເລີກໃບສົ່ງເສີມການລົງທຶນ.

# ພາກທີ

# 03

## ການລົງທຶນ ໃນ ສປປ ລາວ

## 3.1 ຮູບການ ການລົງທຶນ

ການລົງທຶນ ໃນ ສປປ ລາວ ມີ 5 ຮູບການ ຄື:

1) ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ

ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ ແມ່ນ ການລົງທຶນຂອງຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດຝ່າຍດຽວ ຊຶ່ງອາດຈະມີຜູ້ລົງທຶນ ຜູ້ດຽວ ຫຼື ຫຼາຍຄົນ ໃນກິດຈະການ ຫຼື ໂຄງການໃດໜຶ່ງຢູ່ ສປປ ລາວ.

2) ການລົງທຶນຮ່ວມລະຫວ່າງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ

ການລົງທຶນຮ່ວມລະຫວ່າງຜູ້ລົງທຶນພາຍໃນ ກັບຕ່າງປະເທດ ແມ່ນການຮ່ວມລົງທຶນລະຫວ່າງ ຜູ້ລົງທຶນພາຍໃນກັບຕ່າງປະເທດ ຊຶ່ງດຳເນີນທຸລະກິດ, ມີກຳມະສິດຮ່ວມກັນ ແລະ ສ້າງເປັນນິຕິບຸກຄົນໃໝ່ຂຶ້ນ ພາຍໃຕ້ກົດໝາຍ ຂອງ ສປປ ລາວ.

ການຈັດຕັ້ງ, ການເຄື່ອນໄຫວ, ການບໍລິຫານຄຸ້ມຄອງ, ສິດ ແລະ ພັນທະ ຂອງຜູ້ລົງທຶນຮ່ວມ ແມ່ນກຳນົດໄວ້ໃນສັນຍາຮ່ວມທຶນ ແລະ ກົດລະບຽບ ຂອງນິຕິບຸກຄົນໃໝ່ດັ່ງກ່າວ.

ສຳລັບ ຜູ້ລົງທຶນຕ່າງປະເທດ ທີ່ລົງທຶນໃນຮູບການດັ່ງກ່າວ ຕ້ອງປະກອບທຶນຢ່າງໜ້ອຍ ບໍ່ໃຫ້ຫຼຸດ ສິບສ່ວນຮ້ອຍ (10%) ຂອງທຶນທັງໝົດ.

3) ການລົງທຶນທຸລະກິດຮ່ວມຕາມສັນຍາ

ການລົງທຶນທຸລະກິດຮ່ວມຕາມສັນຍາ ແມ່ນ ການດຳເນີນທຸລະກິດໃດໜຶ່ງ ຮ່ວມລະຫວ່າງນິຕິບຸກ ຄົນຕ່າງປະເທດ ກັບນິຕິບຸກຄົນພາຍໃນ ລວມທັງພາກລັດ ແລະ ເອກະຊົນ ໂດຍມີສັນຍາຮ່ວມທຸລະກິດນຳກັນ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ໃນໄລຍະເວລາອັນແນ່ນອນໃດໜຶ່ງ ແລະ ບໍ່ຈຳເປັນຕ້ອງສ້າງຕັ້ງເປັນນິຕິບຸກຄົນໃໝ່ ຫຼື ສາຂາຂຶ້ນ ຢູ່ ສປປ ລາວ. ສັນຍາດັ່ງກ່າວ ຕ້ອງກຳນົດສິດ, ພັນທະ ແລະ ຜົນປະໂຫຍດຂອງ ແຕ່ລະຝ່າຍຕໍ່ກັນ ແລະ ກັນ ແລະ ຕໍ່ລັດຖະບານ ຢ່າງຈະແຈ້ງ.

ນິຕິບຸກຄົນພາຍໃນ ທີ່ໄດ້ລົງນາມໃນສັນຍາທຸລະກິດຮ່ວມຕາມສັນຍາດັ່ງກ່າວ ຕ້ອງແຈ້ງໃຫ້ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອຮັບຮອງ ແລະ ຄຸ້ມຄອງຕາມລະບຽບການ ແລະ ຕ້ອງນຳໄປຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານ ຂອງ ສປປ ລາວ ບ່ອນຈັດຕັ້ງປະຕິບັດສັນຍາ.

4) ການລົງທຶນຮ່ວມລະຫວ່າງລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ

ການລົງທຶນຮ່ວມລະຫວ່າງລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ ແມ່ນ ການຮ່ວມລົງທຶນລະຫວ່າງລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ ເພື່ອດຳເນີນທຸລະກິດ, ມີກຳມະສິດຮ່ວມກັນ ແລະ ສ້າງເປັນນິຕິບຸກຄົນໃໝ່ຂຶ້ນພາຍໃຕ້ກົດໝາຍ ຂອງ ສປປ ລາວ.

ການຈັດຕັ້ງ, ການເຄື່ອນໄຫວ, ການບໍລິຫານຄຸ້ມຄອງ, ສິດ ແລະ ພັນທະຂອງຜູ້ລົງທຶນຮ່ວມລະຫວ່າງລັດວິສາຫະກິດ ແລະ ວິສາຫາກິດເອກະຊົນ ໄດ້ກຳນົດໄວ້ໃນສັນຍາຮ່ວມທຶນ ແລະ ກົດລະບຽບຂອງນິຕິບຸກ ຄົນໃໝ່ດັ່ງກ່າວ.

5) ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ (PPP)

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນ ກິດຈະການຮ່ວມລົງທຶນ ລະຫວ່າງພາກລັດ ແລະ ພາກເອກະຊົນ ພາຍໃຕ້ສັນຍາການລົງທຶນຮ່ວມ ເພື່ອຈັດຕັ້ງປະຕິບັດໂຄງການກໍ່ສ້າງໃໝ່, ປັບປຸງພື້ນຖານໂຄງລ່າງ ຫຼື ສະໜອງການບໍລິການສາທາລະນະ.

ຂະແໜງການ, ເງື່ອນໄຂ ແລະ ຂັ້ນຕອນ ການລົງທຶນໃນຮູບການ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

ສະບັບເລກທີ 624/ນຍ, ລົງວັນວັນທີ 21 ທັນວາ 2021 ລາຍລະອຽດໄດ້ນຳສະເໜີໃນພາກທີ VI ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຂອງປຶ້ມຄູ່ມືສະບັບນີ້.

## 3.2 ກິດຈະການ ການລົງທຶນ ໃນ ສປປ ລາວ

### 3.2.1 ກິດຈະການ ລົງທຶນທົ່ວໄປ

1) ກິດຈະການໃນບັນຊີຄວບຄຸມ

ກິດຈະການໃນບັນຊີຄວບຄຸມ ແມ່ນ ປະເພດທຸລະກິດ ທີ່ມີຜົນກະທົບ ຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ເພື່ອຮັບປະກັນຄວາມສົມດຸນ ການພັດທະນາບັນດາຂະແໜງການເສດຖະກິດ ແລະ ສັງຄົມ ຊຶ່ງຕ້ອງໄດ້ຜ່ານການພິຈາລະນາໂດຍບັນດາຂະແໜງການທີ່ກ່ຽວຂ້ອງ ກ່ອນການອະນຸຍາດລົງທຶນຈາກຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ/ຫຼື ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ.

2) ກິດຈະການ ບໍ່ຢູ່ໃນບັນຊີຄວບຄຸມ

ກິດຈະການບໍ່ຢູ່ໃນບັນຊີຄວບຄຸມ ແມ່ນ ບັນດາກິດຈະການເປີດກວ້າງການລົງທຶນທົ່ວໄປ ທີ່ສາມາດແຈ້ງຂຶ້ນທະບຽນວິສາຫະກິດ ແລະ ຂໍອະນຸຍາດດຳເນີນກິດຈະການ ຕາມທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍ ວິສາຫະກິດ ແລະ ລະບຽບການທີ່ກ່ຽວຂ້ອງ.

### 3.2.2 ກິດຈະການ ການລົງທຶນສຳປະທານ

ກິດຈະການ ການລົງທຶນສຳປະທານ ແມ່ນ ກິດຈະການ ທີ່ຜູ້ລົງທຶນໄດ້ຮັບອະນຸຍາດໃນການສຳປະທານຈາກລັດ ຕາມກົດໝາຍ ເພື່ອພັດທະນາ ແລະ ດຳເນີນທຸລະກິດໃດໜຶ່ງ ເປັນຕົ້ນ ການສຳປະທານທີ່ດິນ, ການພັດທະນາເຂດເສດຖະກິດພິເສດ ແລະ ເຂດອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ, ການຂຸດຄົ້ນບໍ່ແຮ່, ການພັດທະນາແຫຼ່ງພະລັງງານໄຟຟ້າ, ການສຳປະທານສາຍການບິນ ແລະ ໂທລະຄົມມະນາຄົມ.

ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ຂໍລົງທຶນໃນກິດການ ການລົງທຶນສຳປະທານແມ່ນຕ້ອງໄດ້ຍື່ນຄຳຮ້ອງຂໍລົງທຶນ ຜ່ານຫ້ອງການບໍລິການ ການລົງທຶນປະຕູດຽວ ຢູ່ ຂັ້ນສູນກາງ ຫຼື ຂັ້ນແຂວງໂດຍຂັ້ນສູນກາງ ແມ່ນຕັ້ງຢູ່ທີ່ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ. ສຳລັບຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ ແມ່ນຕັ້ງຢູ່ພະແນກແຜນການ ແລະ ການລົງທຶນແຂວງ.

ສຳລັບການພິຈາລະນາການລົງທຶນ ໃນກິດຈະການສຳປະທານ ຕ້ອງໄດ້ຜ່ານລະບົບກົນໄກ ການບໍລິການການລົງທຶນປະຕູດຽວ ໂດຍຜ່ານການພິຈາລະນາຈາກຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຫຼື ຂັ້ນແຂວງ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ 2016 ແລະ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ສະບັບເລກທີ 05/ນຍ ລົງວັນທີ 05/01/2018. ກິດຈະການ ການລົງທຶນສຳປະທານ ມີຄືດັ່ງນີ້:

1) ການສຳປະທານທີ່ດິນ ເພື່ອລົງທຶນໃສ່ຂະແໜງ ກະສິກຳ, ໂຮງງານອຸດສາຫະກຳ, ສະຖານທີ່ທ່ອງທ່ຽວ ແລະ ການບໍລິການອື່ນໆ ທີ່ຕິດພັນກັບເນື້ອທີ່ດິນ;
2) ການຂຸດຄົ້ນບໍ່ແຮ່, ການພັດທະນາແຫຼ່ງພະລັງງານໄຟຟ້າ;
3) ການພັດທະນາເຂດເສດຖະກິດພິເສດ (SEZ) ແລະ ການພັດທະນາເຂດອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ;
4) ການສຳປະທານ ສາຍການບິນ ແລະ ໂທລະຄົມມະນາຄົມ.
5) ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ (PPP).

- ກິດຈະການ ການລົງທຶນສຳປະທານ ມີເງື່ອນໄຂ, ຂັ້ນຕອນ ແລະ ໄລຍະເວລາ ດັ່ງນີ້:

ເງື່ອນໄຂຂອງຜູ້ລົງທຶນ ໃນກິດຈະການສຳປະທານ

1) ເປັນນິຕິບຸກຄົນ ພາຍໃນ ຫຼື ຕ່າງປະເທດ;
2) ມີປະສົບການ ແລະ ໄດ້ຮັບຜົນສຳເລັດທາງດ້ານທຸລະກິດ ໂດຍມີການຢັ້ງຢືນຈາກອົງການທີ່ກ່ຽວຂ້ອງ;
3) ມີຖານະທາງດ້ານການເງິນ ຫຼື ແຫຼ່ງທຶນ ຊຶ່ງໄດ້ຮັບການຢັ້ງຢືນຈາກສະຖາບັນການເງິນ ພາຍໃນ ຫຼື ຕ່າງປະເທດ;
4) ມີເງື່ອນໄຂອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

2) ຂັ້ນຕອນ ແລະ ໄລຍະເວລາ ການອະນຸມັດການລົງທຶນ ກິດຈະການສຳປະທານ

ຂັ້ນຕອນ ແລະ ໄລຍະເວລາ ການພິຈາລະນາ ການອະນຸມັດການລົງທຶນ ກິດຈະການສຳປະທານ ແມ່ນເປັນໄປຕາມກົນການບໍລິການ ການລົງທຶນປະຕູດຽວ ໂດຍຕ້ອງຜ່ານກອງປະຊຸມ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຫຼື ຂັ້ນແຂວງ.

ຂັ້ນຕອນ ແລະ ໄລຍະເວລາ ການພິຈາລະນາຄຳຮ້ອງຂໍລົງທຶນ ກິດຈະການສຳປະທານ ຊຶ່ງຜູ້ລົງທຶນ ຈະໄດ້ຮັບໃບອະນຸຍາດລົງທຶນ ພາຍໃນເວລາ 65 ວັນ ນັບແຕ່ວັນ ຫ້ອງການບໍລິການ ການລົງທຶນປະຕູດຽວ ໄດ້ຮັບຄຳຮ້ອງຄົບຖ້ວນ ເປັນຕົ້ນໄປ ໂດຍມີຂັ້ນຕອນ ດັ່ງນີ້:

1. ຫ້ອງການບໍລິການ ການລົງທຶນປະຕູດຽວ ຈະອອກສະໂນດຄຳຮ້ອງຂໍລົງທຶນ ແລະ ເອກະສານກ່ຽວຂ້ອງ (ພາຍໃນເວລາ 2 ວັນລັດຖະການ) ເພື່ອສົ່ງຂໍຄຳເຫັນນຳຂະແໜງການກ່ຽວຂ້ອງ ຂັ້ນສູນກາງ ແລະ ຂັ້ນແຂວງ ທີ່ໂຄງການຕັ້ງຢູ່ ເພື່ອຄົ້ນຄວ້າ ແລະ ມີຄຳເຫັນດ້ານເຕັກນິກ-ວິຊາການ ໂດຍແຈ້ງຕອບເປັນລາຍລັກອັກສອນ ແລ້ວສົ່ງຄືນໃຫ້ ຫລປ ພາຍໃນເວລາບໍ່ເກີນ 30 ວັນ ນັບແຕ່ວັນໄດ້ຮັບເອກະສານຄຳຮ້ອງເປັນຕົ້ນໄປ;
2. ພາຍຫຼັງມີຄຳເຫັນຈາກຂະແໜງການ ສູນກາງ ແລະ ແຂວງ ແລ້ວ ຫ້ອງການບໍລິການ ການລົງທຶນປະຕູດຽວ ຄົ້ນຄວ້າ ແລ້ວນຳສະເໜີຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາຕົກລົງດ້ານຫຼັກການ ພາຍໃນເວລາ 30 ວັນ;
3. ພາຍຫຼັງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໄດ້ຕົກລົງດ້ານຫຼັກການແລ້ວ ຫ້ອງການບໍລິການ ການລົງທຶນປະຕູດຽວ ຈັດກອງປະຊຸມເຈລະຈາບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ກັບຜູ້ລົງທຶນ ໂດຍມີສ່ວນຮ່ວມຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວລາຍງານຂໍການຕົກລົງຈາກ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ກັບ ຜູ້ລົງທຶນ ໂດຍແມ່ນ ຂະແໜງແຜນການ ແລະ ການລົງທຶນ ຕາງໜ້າໃຫ້ລັດຖະບານລົງນາມໃນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາດັ່ງກ່າວ.

ຫຼັງຈາກ ເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາແລ້ວ ຜູ້ລົງທຶນ ຕ້ອງວາງເງິນຄ້ຳປະກັນ ຕາມທີ່ໄດ້ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ແລະ ດຳເນີນການເກັບກຳຂໍ້ມູນ, ສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ແລະ ດຳເນີນການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ຕາມລະບຽບການ.

ໃນກໍລະນີເຫັນດີ ຫ້ອງການບໍລິການ ການລົງທຶນປະຕູດຽວ ແຈ້ງເປັນລາຍລັກອັກສອນໃຫ້ຜູ້ລົງທຶນຊາບ ພາຍໃນເວລາ 3 ວັນ, ຜູ້ລົງທຶນຕ້ອງແຈ້ງຕອບເປັນລາຍລັກອັກສອນ ພາຍໃນເວລາ 10 ວັນ ນັບແຕ່ວັນໄດ້ຮັບແຈ້ງການຈາກຫ້ອງການບໍລິການ ການລົງທຶນປະຕູດຽວ ກ່ຽວກັບວັນເວລາທີ່ຈະເຈລະຈາບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ; ພາຍໃນເວລາ 30 ວັນ ນັບແຕ່ວັນຫ້ອງການບໍລິການ ການລົງທຶນປະຕູດຽວ ອອກແຈ້ງການ, ຖ້າຜູ້ລົງທຶນບໍ່ແຈ້ງຕອບ ຫຼື ບໍ່ເຂົ້າມາເຈລະຈາບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ຖືວ່າຜູ້ລົງທຶນສະລະສິດໃນການລົງທຶນ.

ພາຍຫຼັງເຊັນສັນຍາສໍາປະທານແລ້ວ ຫ້ອງການບໍລິການ ການລົງທຶນປະຕູດຽວ ອອກໃບອະນຸຍາດລົງທຶນ ພາຍໃນເວລາ 3 ວັນ.

ໃນກໍລະນີບໍ່ເຫັນດີໃຫ້ລົງທຶນ ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ລົງທຶນຊາບ ພາຍໃນເວລາ 3 ວັນ ນັບແຕ່ວັນມີການຕົກລົງ.

ຂັ້ນຕອນການອະນຸມັດການລົງທຶນ ກິດຈະການສໍາປະທານ



## 3.3 ການເຊົ່າ ແລະ ການສຳປະທານທີ່ດິນຂອງລັດ

ການລົງທຶນ ໃນ ສປປ ລາວ ໂດຍການນຳໃຊ້ທີ່ດິນຂອງລັດ ແມ່ນມີຢູ່ 2 ຮູບແບບ ຄື ການເຊົ່າທີ່ດິນ ຫຼື ການສຳປະທານທີ່ດິນ:

1. ການເຊົ່າທີ່ດິນ:

ແມ່ນການອະນຸຍາດໃຫ້ການຈັດຕັ້ງ, ບຸກຄົນ ຫຼື ນິຕິບຸກຄົນ ມີສິດໃຊ້ທີ່ດິນຂອງລັດ ຕາມເງື່ອນໄຂ ແລະ ກຳນົດເວລາ ໂດຍມີຂໍ້ຜູກພັນສັນຍາ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ;

2. ການສຳປະທານທີ່ດິນ:

ແມ່ນການອະນຸຍາດໃຫ້ ບຸກຄົນ ຫຼື ນິຕິບຸກຄົນ ເພື່ອດຳເນີນກິດຈະການ ໂດຍການມີສິດໃຊ້ທີ່ດິນຂອງລັດ ເຂົ້າໃນກິດຈະການໃດໜຶ່ງຕາມເງື່ອນໄຂ ແລະ ກຳນົດເວລາ ໂດຍມີຂໍ້ຜູກພັນສັນຍາ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

### 3.3.1 ຮູບການ ເຊົ່າ ແລະ ສຳປະທານ ທີ່ດິນຂອງລັດ

ຮູບການ ເຊົ່າ ຫຼື ສຳປະທານ ທີ່ດິນຂອງລັດ ມີ 2 ຮູບການ:

ຮູບການ ເຊົ່າ ຫຼື ສຳປະທານ ທີ່ມີລັກສະນະ ການບໍລິການ:

ແມ່ນລັດມອບໃຫ້ຄູ່ສັນຍາ ດຳເນີນການກ່ຽວກັບການບໍລິການໃດໜຶ່ງ ເຊັ່ນ: ການໄຟຟ້າ, ນ້ຳປະປາ, ການກໍ່ສ້າງ, ໂທລະຄົມມະນາຄົມ, ສວນສາທາລະນະ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ສະໜາມເດັກຫຼິ້ນ, ສະຖານີລົດຂົນສົ່ງຜູ້ໂດຍສານ, ສະຖານີລົດຂົນສົ່ງສິນຄ້າ, ສູນຟື້ນຟູສຸຂະພາບ ແລະ ອື່ນໆ ໃນເງື່ອນໄຂການລົງທຶນຂອງແຕ່ລະປະເພດກິດຈະການ ການລົງທຶນ ທີ່ຜູ້ລົງທຶນສົນໃຈ ເປັນຕົ້ນ ການລົງທຶນທົ່ວໄປ ຫຼື ການລົງທຶນສຳປະທານ.

ຮູບການ ສຳປະທານ ທີ່ມີລັກສະນະ ການຄ້າ (ການຜະລິດ):

ການສຳປະທານທີ່ດິນຂອງລັດ ທີ່ມີລັກສະນະການຄ້າ ຫຼື ການຜະລິດ ເຊັ່ນ: ທີ່ດິນປູກໄມ້, ທີ່ດິນກະສິກຳ, ທີ່ດິນພະລັງງານໄຟຟ້າ, ທີ່ດິນແຮ່ທາດ ແລະ ທີ່ດິນປະເພດອື່ນໆ ຕາມການຈັດສັນຂອງລັດ ເພື່ອດຳເນີນກິດຈະການ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ໂດຍຜູ້ສຳປະທານທີ່ດິນ ທີ່ພົວພັນກັບການນຳໃຊ້ຊັບພະຍາກອນທຳ ມະຊາດ ນອກຈາກຕ້ອງເສຍຄ່າສຳປະທານແລ້ວ ຍັງຕ້ອງເສຍຄ່າຊັບພະຍາກອນ, ອາກອນ, ພາສີ, ແລະ ຄ່າທຳນຽມຕ່າງໆ ຕາມກົດໝາຍກຳນົດໄວ້ ແລະ/ຫຼື ຕາມເງື່ອນໄຂຂອງສັນຍາ.

### 3.3.2 ການກຳນົດໄລຍະເວລາການໃຫ້ ເຊົ່າ ຫຼື ສຳປະທານ ທີ່ດິນຂອງລັດ

1. ການໃຫ້ເຊົ່າ ໄລຍະສັ້ນ (ກຳນົດເວລາສູງສຸດບໍ່ເກີນ 5 ປີ ແລະ ສາມາດຕໍ່ໄດ້);
2. ການໃຫ້ ເຊົ່າ ຫຼື ສຳປະທານ ໄລຍະກາງ (5 - 10 ປີ ແລະ ສາມາດຕໍ່ໄດ້);
3. ການໃຫ້ ເຊົ່າ ຫຼື ສຳປະທານ ໄລຍະຍາວ (10 ປີຂຶ້ນໄປ).

ອີງຕາມດຳລັດ 135/ນຍ, ລົງວັນທີ 25/05/2009 ວ່າດ້ວຍການເອົາດິນລັດໃຫ້ເຊົ່າ ຫຼື ສຳປະທານ.

ສຳລັບ ກິດຈະການໃນບັນຊີຄວບຄຸມ ແລະ ກິດຈະການ ການລົງທຶນສຳປະທານ ແມ່ນອີງຕາມດຳລັດ ວ່າດ້ວຍການຮັບຮອງເອົາບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ສະບັບເລກທີ 03/ນຍ, ລົງວັນທີ 10 ມັງກອນ 2020.

## 3.4 ອາຍຸການລົງທຶນ ກິດຈະການລົງທຶນ ທົ່ວໄປ ແລະ ສຳປະທານ

1) ອາຍຸການລົງທຶນ ກິດຈະການທົ່ວໄປ

ການລົງທຶນກິດຈະການທົ່ວໄປ ບໍ່ຈຳກັດອາຍຸການລົງທຶນ, ເວັ້ນເສຍແຕ່ກິດຈະການລົງທຶນ ທີ່ໄດ້ກຳນົດອາຍຸການລົງທຶນໄວ້ໃນລະບຽບການ ຂອງຂະແໜງການທີ່ກ່ຽວຂ້ອງ.

2) ອາຍຸການລົງທຶນ ກິດຈະການສຳປະທານ

ກິດຈະການ ລົງທຶນສຳປະທານ ແມ່ນອີງຕາມປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂ, ບົດວິພາກເສດຖະກິດ-ສັງຄົມ ຂອງກິດຈະການ ຕາມກົດໝາຍທີ່ກ່ຽວຂ້ອງ ແຕ່ສູງສຸດ ບໍ່ໃຫ້ເກີນ 50 ປີ ແລະ ສາມາດຕໍ່ໄດ້ຕາມການຕົກລົງຂອງລັດຖະບານ ຫຼື ສະພາແຫ່ງຊາດ ຫຼື ສະພາປະຊາຊົນ ຂັ້ນແຂວງ ຕາມຂອບເຂດສິດທີ່ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

(ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2020 ກາມົດໄວ້ຢູ່ໃນມາດຕາ 40 ແລະ 42).

## 3.5 ທຶນຈົດທະບຽນ ແລະ ການນຳເຂົ້າທຶນ

| ກິດຈະການລົງທຶນ | ທຶນຈົດທະບຽນ | ການນຳເຂົ້າທຶນ |
|---|---|---|
| ການລົງທຶນທົ່ວໄປ | ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ | ອີງໃສ່ລະບຽບການທີ່ກ່ຽວຂ້ອງຂອງຂະແໜງການທີ່ມີ |
| ການລົງທຶນສຳປະທານ | ຕ້ອງບໍ່ໃຫ້ຫຼຸດ 30% ຂອງທຶນທັງໝົດ | - 3% ຂອງທຶນຈົດທະບຽນ, ສຳລັບໂຄງການ ທີ່ມີມູນຄ່າຕ່ຳກວ່າ 10 ລ້ານໂດລາ ລົງມາ;<br>- 2% ຂອງທຶນຈົດທະບຽນ, ສຳລັບໂຄງການ ທີ່ມີມູນຄ່າແຕ່ 10 ລ້ານ - 500 ລ້ານໂດລາ;<br>- 1% ຂອງທຶນຈົດທະບຽນ, ສຳລັບໂຄງການ ທີ່ມີມູນຄ່າຫຼາຍກວ່າ 1 ຕື້ໂດລາ ຂຶ້ນໄປ. |

<u>ໝາຍເຫດ</u>: ສຳລັບການລົງທຶນໃນກິດຈະການສຳປະທານ ຫຼື ກິດຈະການໃນບັນຊີຄວບຄຸມ ຫາກພາຍຫຼັງໄດ້ຮັບໃບອະນຸຍາດລົງທຶນແລ້ວ ຕ້ອງໄດ້ຂໍໃບທະບຽນວິສາຫະກິດ ກັບຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ເລກປະຈຳຕົວຜູ້ເສຍອາກອນ ຫຼື ໃບທະບຽນອາກອນ ກັບຂະແໜງການເງິນ.

## 3.6 ການຂໍໃບອະນຸຍາດດຳເນີນກິດຈະການລົງທຶນ ທົ່ວໄປ ແລະ ສຳປະທານ

1) ໃບອະນຸຍາດດຳເນີນກິດຈະການທົ່ວໄປ:

ກິດຈະການທົ່ວໄປ ທີ່ບໍ່ນອນໃນບັນຊີຄວບຄຸມ: ຂະແໜງອຸດສາຫະກຳ ແລະ ການຄ້າ ຈະດຳເນີນການອອກໃບທະບຽນວິສາຫະກິດ ຄື: ກິດຈະການທີ່ຕ້ອງຂໍໃບອະນຸຍາດດຳເນີນທຸລະກິດກັບຂະແໜງການທີ່ກ່ຽວຂ້ອງ ເຈົ້າໜ້າໜ້າທີ່ທະບຽນວິສາຫະກິດ ຈະບໍ່ໄດ້ລະບຸປະເພດກິດຈະການ ໃສ່ໃນດ້ານຫຼັງຂອງໃບທະບຽນວິສາຫະກິດ ແຕ່ຈະອອກໜັງສືແນະນຳເພີ່ມເຕີມ ເພື່ອໃຫ້ໄປດຳເນີນການໃນຂັ້ນຕອນຕໍ່ໄປ. ສຳລັບກິດຈະການ ທີ່ບໍ່ຕ້ອງຂໍໃບອະນຸຍາດດຳເນີນທຸລະກິດ ແມ່ນຈະມີການລະບຸປະເພດກິດຈະການໃສ່ດ້ານຫຼັງໃບທະບຽນວິສາຫະກິດ ເພື່ອສາມາດໄປຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ.

ກິດຈະການທົ່ວໄປ ທີ່ນອນໃນບັນຊີຄວບຄຸມ: ກິດຈະການໃນບັນຊີຄວບຄຸມ ພາຍຫຼັງໄດ້ຮັບໃບອະນຸຍາດລົງທຶນ ຈາກຂະແໜງແຜນການ ແລະ ການລົງທຶນ ແລ້ວ ແມ່ນຕ້ອງໄດ້ຂໍໃບອະນຸຍາດດຳເນີນທຸລະກິດ ກັບຂະແໜງການທີ່ກ່ຽວຂ້ອງ.

2) ໃບອະນຸຍາດດຳເນີນກິດຈະການສຳປະທານ

ສຳລັບກິດຈະການສຳປະທານ ພາຍຫຼັງໄດ້ຮັບໃບອະນຸຍາດລົງທຶນ ຈາກຂະແໜງແຜນການ ແລະ ການລົງທຶນ ແລ້ວ ແມ່ນຕ້ອງໄດ້ຂໍໃບອະນຸຍາດດຳເນີນທຸລະກິດ ກັບຂະແໜງການທີ່ກ່ຽວຂ້ອງ. ຊຶ່ງໄດ້ອະທິບາຍຕື່ມໃນພາກທີ V ຂັ້ນຕອນການລົງທຶນ ກິດຈະການສຳປະທານ.

# ພາກທີ

# 04

## ຂັ້ນຕອນການລົງທຶນ
## ກິດຈະການລົງທຶນທົ່ວໄປ

## 4.1 ກິດຈະການ ໃນບັນຊີຄວບຄຸມ

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ຂໍລົງທຶນໃນກິດການ ການລົງທຶນ ທົ່ວໄປ ໃນບັນຊີຄວບຄຸມ ແມ່ນຕ້ອງໄດ້ຍື່ນຄຳຮ້ອງຂໍລົງທຶນ ຜ່ານ ຫ້ອງການບໍລິການ ການລົງທຶນປະຕູດຽວ "ຫລປ" ຢູ່ຂັ້ນສູນກາງ ແມ່ນຕັ້ງຢູ່ທີ່ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ. ສຳລັບຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ ແມ່ນຕັ້ງຢູ່ພະແນກແຜນການ ແລະ ການລົງທຶນແຂວງ.

ສຳລັບການພິຈາລະນາການລົງທຶນ ກິດຈະການ ໃນບັນຊີຄວບຄຸມ ຕ້ອງໄດ້ຜ່ານລະບົບກົນໄກ ການບໍລິການ ການລົງທຶນປະຕູດຽວ ໂດຍຜ່ານການພິຈາລະນາຈາກຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຫຼື ຂັ້ນແຂວງ ຕາມການແບ່ງຂັ້ນຄຸ້ມຄອງ.

### 4.1.1 ຂັ້ນຕອນ ແລະ ໄລຍະເວລາ ການພິຈາລະນາ ການລົງທຶນ ກິດຈະການໃນບັນຊີຄວບຄຸມ




ຂັ້ນຕອນ ແລະ ໄລຍະເວລາ ການພິຈາລະນາຄຳຮ້ອງຂໍລົງທຶນ ກິດຈະການໃນບັນຊີຄວບຄຸມ ຊຶ່ງຜູ້ລົງທຶນ ຈະໄດ້ຮັບໃບອະນຸຍາດລົງທຶນ ພາຍໃນເວລາ 25 ວັນ ນັບແຕ່ວັນ ຫ້ອງການບໍລິການ ການລົງທຶນປະຕູດຽວ ໄດ້ຮັບຄຳຮ້ອງຄົບຖ້ວນ ເປັນຕົ້ນໄປ ໂດຍມີຂັ້ນຕອນ ດັ່ງນີ້:

1. ຫ້ອງການບໍລິການ ການລົງທຶນປະຕູດຽວ ຈະອອກສະໂນດຄຳຮ້ອງຂໍລົງທຶນ ແລະ ເອກະສານກ່ຽວຂ້ອງ (ພາຍໃນເວລາ 2 ວັນລັດຖະການ) ເພື່ອສົ່ງຂໍຄຳເຫັນນຳຂະແໜງການກ່ຽວຂ້ອງ ຂັ້ນສູນກາງ ແລະ ຂັ້ນແຂວງ ທີ່ໂຄງການຕັ້ງຢູ່ ເພື່ອຄົ້ນຄວ້າ ແລະ ມີຄຳເຫັນດ້ານເຕັກນິກ-ວິຊາການ ໂດຍແຈ້ງຕອບເປັນລາຍລັກອັກສອນ ແລ້ວສົ່ງຄືນໃຫ້ ຫລປ ພາຍໃນເວລາບໍ່ເກີນ 8 ວັນ ນັບແຕ່ວັນໄດ້ຮັບເອກະສານຄຳຮ້ອງ ເປັນຕົ້ນໄປ;

2. ພາຍຫຼັງມີຄຳເຫັນ ຈາກຂະແໜງການ ແລະ ແຂວງ ກ່ຽວຂ້ອງແລ້ວ ຫ້ອງການບໍລິການ ການລົງທຶນປະຕູດຽວຕ້ອງຄົ້ນຄວ້າ ແລະ ຈັດກອງປະຊຸມວິຊາການຄະນະປະຕູດຽວ ເພື່ອພິຈາລະນາອະນຸມັດ ຫຼື ປະຕິເສດ (ກິດຈະການໃນບັນຊີຄວບຄຸມ ທີ່ບໍ່ມີຜົນກະທົບຮ້າຍແຮງ) ແລະ ນຳສະເໜີ (ກິດຈະການໃນບັນຊີຄວບຄຸມ ທີ່ມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ແລະ ເປັນໂຄງການທີ່ຍັງຊັກຊ້າເກີນກົດໝາຍກຳນົດເວລາໄວ້) ຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາ ພາຍໃນເວລາ 10 ວັນ;

3. ພາຍຫຼັງຄະນະປະຕູດຽວ ຫຼື ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເຫັນດີອະນຸມັດ, ຫ້ອງການບໍລິການ ການລົງທຶນປະຕູດຽວ ຈະອອກໃບອະນຸຍາດລົງທຶນ ພາຍໃນເວລາ 5 ວັນ.

ໃນກໍລະນີ ຄຳຮ້ອງຂໍລົງທຶນທີ່ສະເໜີ ບໍ່ໄດ້ຮັບການເຫັນດີ, ຫ້ອງການບໍລິການ ການລົງທຶນປະຕູດຽວຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ສະເໜີຂໍລົງທຶນຊາບພາຍໃນເວລາ 3 ວັນ ນັບແຕ່ວັນໄດ້ຮັບການຕົກລົງ.

### 4.1.2 ອາຍຸການລົງທຶນ ກິດຈະການໃນບັນຊີຄວບຄຸມ

ການລົງທຶນໃນກິດຈະການທົ່ວໄປ ບໍ່ຈຳກັດອາຍຸການລົງທຶນ, ເວັ້ນເສຍແຕ່ ກິດຈະການລົງທຶນ ທີ່ໄດ້ກຳນົດອາຍຸການລົງທຶນໄວ້ໃນລະບຽບການ ຂອງຂະແໜງການກ່ຽວຂ້ອງ.

### 4.1.3 ຄຳຮ້ອງ ແລະ ເອກະສານປະກອບ ກິດຈະການໃນບັນຊີຄວບຄຸມ

1) ຄຳຮ້ອງຂໍລົງທຶນ ຕາມແບບພິມ;
2) ບົດສະເໜີຫຍໍ້ກ່ຽວກັບການພັດທະນາໂຄງການ ຢັ້ງຢືນໂດຍຜູ້ສະເໜີຂໍລົງທຶນ ໃນກໍລະນີຜູ້ລົງທຶນເປັນບຸກຄົນ ຫຼື ປະທານ ຫຼື ອຳນວຍການໃຫຍ່ ຂອງ (ບໍລິສັດ ຫຼື ຜູ້ຖືກມອບສິດ ໃນກໍລະນີຜູ້ລົງທຶນເປັນນິຕິບຸກຄົນ);
3) ປະຫວັດ ແລະ ປະສົບການຂອງຜູ້ລົງທຶນ, ໃບອະນຸຍາດ ຫຼື ໃບທະບຽນວິສາຫະກິດ ຂອງຜູ້ລົງທຶນ, ບັດປະຈຳຕົວ (ໃນກໍລະນີຜູ້ລົງທຶນເປັນຄົນລາວ) ຫຼື ບັດຜ່ານແດນ (ໃນກໍລະນີຜູ້ລົງທຶນເປັນຄົນຕ່າງປະເທດ);
4) ສັນຍາຮ່ວມຮຸ້ນ (ໃນກໍລະນີ ມີສອງຜູ້ລົງທຶນຂຶ້ນໄປ);
5) ໃບມອບສິດ ໃຫ້ຜູ້ຕາງໜ້າບັນດາຂາຮຸ້ນ ຫຼື ບໍລິສັດ, ໃນກໍລະນີ ບຸກຄົນດັ່ງກ່າວບໍ່ຢູ່ໃນຕຳແໜ່ງສູງສຸດຂອງບໍລິສັດ (ໃນກໍລະນີຜູ້ລົງທຶນເປັນນິຕິບຸກຄົນ);
6) ແຜນທີ່ ຈຸດສະຖານທີ່ຕັ້ງຂອງໂຄງການ;
7) ເອກະສານ ກ່ຽວກັບການລົງເກັບກຳຂໍ້ມູນເບື້ອງຕົ້ນຂອງໂຄງການ (ຖ້າມີ);
8) ໜັງສືຢັ້ງຢືນຖານະການເງິນຂອງຜູ້ລົງທຶນບໍລິສັດຈາກສະຖາບັນການເງິນ ຫຼື ທະນະຄານ;
9) ປະກອບເອກະສານ ຕາມແບບຟອມຂອງຂະແໜງການກ່ຽວຂ້ອງ;
10) ໃນກໍລະນີທີ່ທ່ານມີຂໍ້ມູນສະເພາະຂອງໂຄງການ ສະເໜີເພີ້ມເຕີມ ເຂົ້າໃນຄຳຮ້ອງຂໍລົງທຶນສະບັບນີ້.

ຄຳຮ້ອງທີ່ຍື່ນ ຈຳນວນ 6 ຊຸດ ແລະ ຜູ້ລົງທຶນຕ້ອງເກັບສຳເນົາຄຳຮ້ອງຂໍລົງທຶນ 1 ສະບັບ ໄວ້ເປັນຫລັກຖານ.

## 4.2 ກິດຈະການ ບໍ່ຢູ່ໃນບັນຊີຄວບຄຸມ

### 4.2.1 ການສ້າງຕັ້ງ ແລະ ການແຈ້ງຂຶ້ນທະບຽນວິສາຫະກິດ

ການສ້າງຕັ້ງ ແລະ ການແຈ້ງຂຶ້ນທະບຽນວິສາຫະກິດ ເພື່ອເຄື່ອນໄຫວດຳເນີນທຸລະກິດໃນ ສປປ ລາວ ມອນໃນ 4 ປະເພດ, 3 ຮູບການ ແລະ 4 ຮູບແບບ ໂດຍສອດຄອງກັບກົດຫມາຍວ່າດ້ວຍວິສາຫະກິດ.

❑ ປະເພດວິສາຫະກິດ ມີ 4 ປະເພດ:

1) ວິສາຫະກິດເອກະຊົນ (Private Enterprise);
2) ວິສາຫະກິດຂອງລັດ (State Enterprise);
3) ວິສາຫະກິດປະສົມ (Mixed Enterprise);
4) ວິສາຫະກິດລວມຫມູ່ (Cooperative Enterprise);

❑ ຮູບການວິສາຫະກິດ ມີ 3 ຮູບການ:

1) ວິສາຫະກິດສ່ວນບຸກຄົນ (Individual Enterprise);
2) ວິສາຫະກິດຮຸ້ນສ່ວນ (Partnership);
3) ບໍລິສັດ (Company);

❑ ຮູບແບບວິສາຫະກິດ ແລະ ບໍລິສັດ ມີ 4 ຮູບແບບ:

ກ. ວິສາຫະກິດຮຸ້ນສ່ວນ ມີ 2 ຮູບແບບ:

1) ວິສາຫະກິດຮຸ້ນສ່ວນສາມັນ (Ordinary Partnership);
2) ວິສາຫະກິດຮຸ້ນສ່ວນຈຳກັດ (Limited Partnership).

ຂ. ບໍລິສັດ ມີ 2 ຮູບແບບ:

1) ບໍລິສັດ ຈຳກັດຜູ້ດຽວ (Sole Limited Company);
2) ບໍລິສັດ ຈຳກັດ (Limited Company).

### 4.2.2 ການຂຶ້ນທະບຽນວິສາຫະກິດ

ການຂຶ້ນທະບຽນວິສາຫະກິດ ແມ່ນ ການຮັບຮອງການສ້າງຕັ້ງວິສາຫະກິດ ຢ່າງຖືກຕ້ອງຕາມກົດໝາຍ ຕໍ່ບຸກຄົນ ຫຼື ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວ ດຳເນີນທຸລະກິດ ຢູ່ ສປປ ລາວ ໂດຍຂຶ້ນຄັ້ງດຽວຕະຫຼອດໄລຍະການເຄື່ອນໄຫວຂອງວິສາຫະກິດນັ້ນ.

1) ຫຼັກການ ການຂຶ້ນນທະບຽນວິສາຫະກິດ

ການຂຶ້ນທະບຽນວິສາຫະກິດ ແມ່ນປະຕິບັດເປັນເອກະພາບໃນຂອບເຂດທົ່ວປະເທດ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບການທີ່ກ່ຽວຂ້ອງ. ທຸກການເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ ຕ້ອງຂຶ້ນທະບຽນວິສາຫະກິດ ຍົກເວັ້ນການເຄື່ອນໄຫວທຸລະກິດ ທີ່ບໍ່ຈຳເປັນຕ້ອງຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເຊັ່ນ: ທຸລະກິດຕາມລະດູການ.

ກິດຈະການທີ່ບໍ່ຢູ່ໃນບັນຊີຄວບຄຸມ ແມ່ນໃຫ້ປະຕິບັດຕາມຂັ້ນຕອນທີ່ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍວ່າດ້ວຍວິສາຫະກິດ ຊຶ່ງເຈົ້າໜ້າທີ່ທະບຽນວິສາຫະກິດ ສາມາດພິຈາລະນາຂຶ້ນທະບຽນວິສາຫະກິດ ໂດຍບໍ່ຕ້ອງຂໍຄຳເຫັນຈາກຂະແໜງການທີ່ກ່ຽວຂ້ອງ ໂດຍປະຕິບັດຕາມກໍລະນີ ດັ່ງນີ້:

1. ກິດຈະການ ທີ່ບໍ່ຈຳເປັນຂໍໃບອະນຸຍາດດຳເນີນທຸລະກິດ: ແມ່ນສາມາດດາເນີນທຸລະກິດໄດ້ເລີຍ ໂດຍຈະລະບຸກິດຈະການໄວ້ໃນດ້ານຫຼັງໃບທະບຽນວິສາຫະກິດ.
2. ກິດຈະການ ທີ່ຕ້ອງຂໍໃບອະນຸຍາດດຳເນີນທຸລະກິດ: ແມ່ນຕ້ອງໄດ້ຂໍໃບອະນຸຍາດດຳເນີນທຸລະກິດ ກັບຂະແໜງການທີ່ກ່ຽວຂ້ອງ ຊຶ່ງເຈົ້າໜ້າໜ້າທີ່ທະບຽນວິສາຫະກິດ ຈະອອກໜັງສືແນະນຳໃຫ້ ໂດຍຈະບໍ່ລະບຸກິດຈະການໄວ້ໃນດ້ານຫຼັງໃບທະບຽນວິສາຫະກິດ. ສຳລັບວິສາຫະກິດທີ່ເຄື່ອນໄຫວຢູ່ແລ້ວ ແມ່ນສະເໜີໃຫ້ຫາຂະແໜງການກ່ຽວຂ້ອງ ຄົ້ນຄວ້າ ແລະ ພິຈາລະນາ ອອກໃບອະນຸຍາດດຳເນີນທຸລະກິດ.

### 2) ຜົນຂອງການຂຶ້ນທະບຽນວິສາຫະກິດ

1. ເຮັດໃຫ້ວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດ ມີຖານະນິຕິບຸກຄົນຕ່າງຫາກຈາກຜູ້ປະກອບຮຸ້ນ, ມີສິດໜ້າທີ່, ຄວາມຮັບຜິດຊອບຕາມຂອບເຂດວັດຖຸປະສົງ ແລະ ກົດລະບຽບຂອງຕົນ.
2. ເຮັດໃຫ້ວິສາຫະກິດ ສາມາດເຄື່ອນໄຫວທຸລະກິດຂອງຕົນ ໄດ້ຕາມຂະແໜງການທຸລະກິດ ທີ່ໄດ້ກຳນົດໄວ້ໃນໃບທະບຽນວິສາຫະກິດ.
3. ຂໍ້ຄວາມໃນສຳນວນເອກະສານທີ່ໄດ້ແຈ້ງຂຶ້ນທະບຽນວິສາຫະກິດແມ່ນເປີດເຜີຍ.
4. ເປັນການຂຶ້ນທະບຽນວິສາຫະກິດ ແລະ ອາກອນພ້ອມ.

### 3) ການແບ່ງຂັ້ນການພິຈາລະນາ ການແຈ້ງຂຶ້ນທະບຽນວິສາຫະກິດ

ການແຈ້ງຂຶ້ນທະບຽນວິສາຫະກິດ ມີການແບ່ງຂັ້ນພິຈາລະນາ ດັ່ງນີ້:

1. ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ: ແມ່ນ ພິຈາລະນາການຂຶ້ນທະບຽນວິສາຫະກິດ ກ່ຽວກັບການສ້າງຕັ້ງສາຂານິຕິບຸກຄົນຕ່າງປະເທດ, ລັດວິສາຫະກິດ, ວິສາຫະກິດຫຸ້ນສ່ວນ, ບໍລິສັດ ແລະ ວິສາຫະກິດສ່ວນບຸກຄົນ ທີ່ມີທຶນຈົດທະບຽນແຕ່ 500 ລ້ານກີບ ຂຶ້ນໄປ ຊຶ່ງມີທີ່ຕັ້ງສຳນັກງານຢູ່ ນະຄອນຫຼວງວຽງຈັນ ແລະ ແຂວງອື່ນ ທີ່ມີຄວາມຈຳເປັນ ໂດຍຈະມີແຈ້ງການສະເພາະໃນແຕ່ລະໄລຍະ;
2. ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ: ແມ່ນ ພິຈາລະນາການຂຶ້ນທະບຽນວິສາຫະກິດ ກ່ຽວກັບ ລັດວິສາຫະກິດ, ວິສາຫະກິດຫຸ້ນສ່ວນ, ບໍລິສັດ ເວັ້ນເສຍແຕ່ບໍລິສັດ ມະຫາຊົນ ແລະ ວິສາຫະກິດສ່ວນບຸກຄົນ ທີ່ມີທຶນຈົດທະບຽນແຕ່ 500 ລ້ານກີບ ຂຶ້ນໄປ ຊຶ່ງມີທີ່ຕັ້ງສານັກງານຢູ່ໃນ ແຂວງ, ນະຄອນຫຼວງ ຂອງຕົນ;
3. ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ: ແມ່ນ ພິຈາລະນາການຂຶ້ນທະບຽນສ້າງຕັ້ງສະຫະກອນ ຕາມທີ່ກຳນົດໃນດຳລັດ ວ່າດ້ວຍສະຫະກອນ ແລະການຂຶ້ນທະບຽນວິສາຫະກິດສ່ວນບຸກຄົນ ທີ່ມີທຶນຈົດທະບຽນຕ່ຳກວ່າ 500 ລ້ານກີບ ລົງມາ. ໃນກໍລະນີເມືອງໃດໜຶ່ງ ຫາກບໍ່ມີຄວາມພ້ອມ ໃນການຂຶ້ນທະບຽນວິສາຫະກິດຕາມເງື່ອນໄຂດັ່ງກ່າວ ແມ່ນມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ຄົ້ນຄ້ວາ ແລະ ນຳສະເໜີ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາ.

### 4) ຂັ້ນຕອນ ແລະ ກຳນົດເວລາ ການພິຈາລະນາອອກໃບທະບຽນວິສາຫະກິດ

ຂັ້ນຕອນ ແລະ ກຳນົດເວລາ ໃນການພິຈາລະນາການຂຶ້ນທະບຽນວິສາຫະກິດ ມີ ດັ່ງນີ້:

1. ປະກອບເອກະສານ ແຈ້ງຕໍ່ຂະແໜງອຸດສາຫະກໍາ ແລະ ການຄ້າ ຕາມການແບ່ງຂັ້ນພິຈາລະນາ ການແຈ້ງຂຶ້ນທະບຽນວິສາຫະກິດ ຕາມຂໍ້ 4 ຂ້າງເທິງ;
2. ພາຍຫຼັງໄດ້ຮັບເອກະສານແລ້ວ ເຈົ້າໜ້າທີ່ທະບຽນວິສາຫະກິດ ຈະກວດກາຄວາມຖືກຕ້ອງຂອງເອກະສານ ໃຫ້ສໍາເລັດພາຍໃນ 1 ຊົ່ວໂມງ ແລ້ວແຈ້ງຕອບຜູ້ຍື່ນຄໍາຮ້ອງໃນທັນທີ ຕາມກໍລະນີ ຄື:

1) ກໍລະນີ ເອກະສານຄົບຖ້ວນ ແລະ ຖືກຕ້ອງ: ເຈົ້າໜ້າທີ່ທະບຽນວິສາຫະກິດ ຈະມອບໃບຮັບເອກະສານໃຫ້ຜູ້ຍື່ນຄໍາຮ້ອງ, ຊຶ່ງໃບຮັບເອກະສານ ຈະປະກອບດ້ວຍ ວັນເວລາມື້ຮັບເອກະສານ ແລະ ມື້ນັດໝາຍມາຮັບເອົາໃບທະບຽນວິສາຫະກິດ ຊ້າສຸດບໍ່ໃຫ້ເກີນ 10 ວັນ ນັບແຕ່ມື້ອອກໃບຮັບເອກະສານເປັນຕົ້ນໄປ;
2) ກໍລະນີ ເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ: ເຈົ້າໜ້າທີ່ທະບຽນວິສາຫະກິດ ຕ້ອງແຈ້ງໃຫ້ຜູ້ຍື່ນຄໍາຮ້ອງທັນທີ ແລະ ແນະນໍາໃຫ້ນໍາໄປປັບປຸງແກ້ໄຂ ໂດຍຊີ້ໃຫ້ເຫັນຈະແຈ້ງ ຈຸດທີ່ຕ້ອງປັບປຸງແກ້ໄຂ ແລະ ລົງລາຍເຊັນຜູ້ແນະນໍາ ໃນເອກະສານແນະນໍາດັ່ງກ່າວ ແລະ ຈຶ່ງມາຍື່ນເອກະສານຕາມຂັ້ນຕອນຂ້າງເທິງດັ່ງກ່າວ.

### 5) ເອກະສານປະກອບ ແຈ້ງຂຶ້ນທະບຽນວິສາຫະກິດ

ເອກະສານແຈ້ງຂຶ້ນທະບຽນວິສາຫະກິດ ຕາມແບບພິມຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ມີດັ່ງນີ້:

1. ເອກະສານແຈ້ງຂຶ້ນທະບຽນວິສາຫະກິດສ່ວນບຸກຄົນ:
   1) ຄໍາຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດສ່ວນບຸກຄົນ;
   2) ໃບແຈ້ງລາຍການກິດຈະການ ທີ່ສະເໜີປະກອບທຸລະກິດ;
2. ເອກະສານແຈ້ງຂຶ້ນທະບຽນວິສາຫະກິດຫຸ້ນສ່ວນ ແລະ ບໍລິສັດ:
   1) ຄໍາຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ;
   2) ໃບແຈ້ງລາຍການກິດຈະການ ທີ່ສະເໜີປະກອບທຸລະກິດ;
   3) ສັນຍາສ້າງຕັ້ງວິສາຫະກິດ ຍົກເວັ້ນບໍລິສັດຈໍາກັດຜູ້ດຽວ.

   ໃນກໍລະນີນິຕິບຸກຄົນ ແຈ້ງຂຶ້ນທະບຽນວິສາຫະກິດ ຕ້ອງມີໃບມອບສິດຈາກວິສາຫະກິດແມ່.

### 6) ທຸລະກິດສໍາລັບພົນລະເມືອງລາວ ທີ່ບໍ່ຈໍາເປັນແຈ້ງຂຶ້ນທະບຽນວິສາຫະກິດ

- ເສດຖະກິດຄອບຄົວໃນດ້ານການຜະລິດກະສິກໍາ ແລະ ຫັດຖະກໍາ ທີ່ນໍາໃຊ້ແຮງງານຂອງສະມາຊິກຄອບຄົວຕົນເອງ ໂດຍບໍ່ຈ້າງແຮງງານບຸກຄົນພາຍນອກ.
- ຜູ້ຄ້າຂາຍນ້ອຍປະກອບດ້ວຍ: ຜູ້ດໍາເນີນທຸລະກິດຮ້ານຄ້າຂະໜາດນ້ອຍ, ຜູ້ຄ້າເລ, ຜູ້ຄ້າແຜງລອຍ ຊຶ່ງມີລາຍຮັບປົກກະຕິຕໍ່າກວ່າ 100.000 ກີບ/ວັນ.
- ຜູ້ດໍາເນີນທຸລະກິດບໍລິການຂະໜາດນ້ອຍທີ່ມີລາຍຮັບປົກກະຕິຕໍ່າກວ່າ 100.000 ກີບ/ວັນ.
- ຜູ້ຄ້າຂາຍ ຫລື ດໍາເນີນທຸລະກິດຕາມລະດູການ.

(ອີງຕາມແຈ້ງການກ່ຽວກັບທຸລະກິດ ທີ່ບໍ່ຈໍາເປັນແຈ້ງຂຶ້ນທະບຽນວິສາຫະກິດ ສະບັບເລກທີ 2037/ອຄ.ທຄວ 28/10/214).

# ພາກທີ

# 05

## ຂັ້ນຕອນການລົງທຶນ
## ກິດຈະການສຳປະທານ

## 5.1 ການລົງທຶນ ກິດຈະການສຳປະທານ ຂະແໜງກະສິກຳ

### 5.1.1 ເງື່ອນໄຂ ໃນການສຳປະທານເນື້ອທີ່ດິນຂອງລັດ ເພື່ອກິດຈະການ ກະສິກຳ - ປູກໄມ້

ການໃຫ້ສຳປະທານທີ່ດິນ ເພື່ອປູກພືດສະບຽງ ແລະ ພືດສິນຄ້າ, ປູກຕົ້ນໄມ້ກິນໝາກ, ໄມ້ອຸດສາຫະກຳ, ໄມ້ເສດຖະກິດ, ຟື້ນຟູປ່າ, ປູກປ່າ, ເຄື່ອງປ່າຂອງດົງ ຕ້ອງປະຕິບັດຕາມເງື່ອນໄຂຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

ສຳລັບ ລາຍລະອຽດກ່ຽວກັບເນື້ອທີ່ດິນຂອງລັດນັ້ນ, ປັດຈຸບັນ ພາກລັດ ຍັງບໍ່ມີຂໍ້ມູນລະອຽດກ່ຽວກັບການຈັດສັນເນື້ອທີ່ດິນໃນຂອບເຂດທົ່ວປະເທດ. ສະນັ້ນ, ຜູ້ລົງທຶນ ທີ່ສົນໃຈລົງທຶນໃນຂະແໜງກະສິກຳ ທີ່ຕິດພັນກັບການສຳປະທານເນື້ອທີ່ດິນຂອງລັດ ຕ້ອງໄດ້ລົງເກັບກຳຂໍ້ມູນເບື້ອງຕົ້ນດ້ວຍຕົນເອງ ໂດຍການປະສານສົມທົບກັບຂະແໜງກະສິກຳ ແລະ ປ່າໄມ້, ຂະແໜງແຜນການ ແລະ ການລົງທຶນ ແລະ ຂະແໜງການກ່ຽວຂ້ອງ ໃນແຂວງ ຫຼື ທ້ອງຖິ່ນ ຂອງໂຄງການທີ່ຕັ້ງຢູ່.

### 5.1.2 ບົດບັນທຶກຄວາມເຂົ້າໃຈ (MOU) ເພື່ອສຶກສາຄວາມເປັນໄປໄດ້ຂອງໂຄງການ

ຜູ້ລົງທຶນ (ນິຕິບຸກຄົນ) ທີ່ມີຈຸດປະສົງດຳເນີນທຸລະກິດໃນຂະແໜງກະສິກຳ ຫາກພາຍຫຼັງໄດ້ລົງໄປເກັບກຳຂໍ້ມູນເບື້ອງຕົ້ນກ່ຽວກັບເນື້ອທີ່ດິນ ແລະ ຈຸດທີ່ຕັ້ງຂອງໂຄງການແລ້ວ ໃຫ້ປະກອບຄຳຮ້ອງຂໍລົງທຶນ ແລະ ເອກະສານກ່ຽວຂ້ອງ ໂດຍສະເພາະໜັງສືລົງເກັບກຳຂໍ້ມູນເບື້ອງຕົ້ນກັບທ້ອງຖິ່ນ ຍື່ນຄຳຮ້ອງຂໍລົງທຶນ ກັບຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ຫຼື ຂັ້ນແຂວງ ຕາມຂັ້ນຄຸ້ມຄອງ ເພື່ອຂໍອະນຸມັດ ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ກັບລັດຖະບານ ຫຼື ແຂວງ ເພື່ອສຶກສາ-ສຳຫຼວດ ເນື້ອທີ່ດິນລະອຽດ ພ້ອມກັບການສ້າງບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ.

ອີງຕາມດຳລັດ 135/ນຍ, ລົງວັນທີ 25/05/2009 ວ່າດ້ວຍການເອົາດິນລັດໃຫ້ ເຊົ່າ ຫຼື ສຳປະທານ ມາດຕາ 28 ການອະນຸຍາດໃຫ້ສຳປະທານທີ່ດິນປ່າຊຸດໂຊມ ເພື່ອກິດຈະການກະສິກຳ ແລະ ປູກໄມ້ ແລະ ມາດຕາ 29 ການອະນຸຍາດໃຫ້ສຳປະທານທີ່ດິນປອກໂຫຼ້ນ ເພື່ອກິດຈະການກະສິກຳ ແລະ ປູກໄມ້ ມີດັ່ງນີ້:

- <u>ຂັ້ນທ້ອງຖິ່ນ</u>:
  - ປ່າຊຸດໂຊມ ບໍ່ເກີນ 150 ເຮັກຕາ ຕໍ່ 1 ໂຄງການ;
  - ທີ່ດິນປອກໂຫຼ້ນ ບໍ່ເກີນ 500 ເຮັກຕາ ຕໍ່ 1 ໂຄງການ.

- <u>ຂັ້ນສູນກາງ</u>:
  - ປ່າຊຸດໂຊມເນື້ອທີ່ແຕ່ 150 - 15.000 ເຮັກຕາຕໍ່ 1 ໂຄງການ;
  - ທີ່ດິນປອກໂຫຼ້ນ ເນື້ອທີ່ແຕ່ 500 – 30.000 ເຮັກຕາຕໍ່ 1 ໂຄງການ.

ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ 2016 (ມາດຕາ 42) ອາຍຸການລົງທຶນໃນກິດຈະການສຳປະທານ ແມ່ນອີງຕາມປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂ, ບົດວິພາກເສດຖະກິດ-ສັງຄົມ ຂອງກິດຈະການ ຕາມກົດໝາຍທີ່ກ່ຽວຂ້ອງ ແຕ່ສູງສຸດ ບໍ່ໃຫ້ເກີນ 50 ປີ ແລະ ສາມາດຕໍ່ໄດ້ຕາມການຕົກລົງຂອງລັດຖະບານ ຫຼື ສະພາແຫ່ງຊາດ ຫຼື ສະພາປະຊາຊົນ ຂັ້ນແຂວງ ຕາມຂອບເຂດສິດທີ່ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

❑ ຂອບເຂດໜ້າວຽກທີ່ຕ້ອງປະຕິບັດໃນໄລຍະ MOU ປະກອບມີ:

1. ສຶກສາຂໍ້ມູນທາງດ້ານເສດຖະກິດ-ສັງຄົມ, ຄວາມເໝາະສົມທາງທໍາມະຊາດ ເຊັ່ນ: ດິນ, ອາກາດ, ຄວາມສູງຈາກລະດັບນໍ້າທະເລ, ປະລິມານນໍ້າຝົນ, ແຫຼ່ງນໍ້າ, ສິດນໍາໃຊ້ທີ່ດິນ, ແຮງງານທ້ອງຖິ່ນ, ສໍາຫຼວດສະພາບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລະ ອື່ນໆ ທີ່ຈໍາເປັນ;

2. ສ້າງບົດວິພາກເສດຖະກິດ-ເຕັກນິກ (Feasibility Study "FS") ແລ້ວຂໍການຮັບຮອງຈາກກະຊວງກະສິກໍາ ແລະ ປ່າໄມ້ (ໂດຍກົມແຜນການ ແລະ ການເງິນ ເປັນຜູ້ປະສານງານກັບກົມທີ່ກ່ຽວຂ້ອງພາຍໃນກະຊວງຂອງຕົນ ເຊັ່ນ: ກົມປ່າໄມ້, ກົມປູກຝັງ, ກົມລ້ຽງສັດ ແລະ ກົມອື່ນໆ ທີ່ກ່ຽວຂ້ອງ ເພື່ອຂໍຄໍາເຫັນ ແລະ ມະຕິກອງປະຊຸມໃນການຮັບຮອງບົດວິພາກເສດຖະກິດ-ເຕັກນິກ). ສໍາຫຼັບຂັ້ນແຂວງ ແມ່ນພະແນກກະສິກໍາ ແລະ ປ່າໄມ້ແຂວງ/ນະຄອນຫຼວງ;

3. ສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ (Environmental Impact Assessment "EIA") ຫຼື ບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ (Initial Environmental Examination "IEE") ລວມທັງມາດຕະການແກ້ໄຂຢ່າງເໝາະສົມ ແລ້ວຂໍການຢັ້ງຢືນຮັບຮອງຈາກຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ;

4. ສ້າງແຜນການຄຸ້ມຄອງ ແລະ ຕິດຕາມກວດກາດ້ານສິ່ງແວດລ້ອມ (Environmental Management and Monitoring Plan "EMMP") ໃນການສ້າງແຜນການດໍາເນີນງານ ໂດຍເລັ່ງໃສ່ການປົກປັກຮັກສາແຫຼ່ງນໍ້າ ແລະ ສິ່ງແວດລ້ອມ, ການບຸກເບີກເນື້ອທີ່, ການພັດທະນາບ້ານ, ການສົ່ງເສີມປະຊາຊົນມີສ່ວນຮ່ວມໃນການດໍາເນີນການຜະລິດ, ການນໍາໃຊ້ເຕັກໂນໂລຊີ ແລະ ອື່ນໆ ຕະຫຼອດເຖິງການແບ່ງປັນຜົນປະໂຫຍດ;

ຂັ້ນຕອນການພິຈາລະນາອະນຸຍາດ ແລະ ອອກໃບອະນຸຍາດລົງທຶນ ຂະແໜງກະສິກໍາ






### 5.1.3 ສັນຍາສຳປະທານໂຄງການ (Concession Agreement “CA”)

ພາຍຫຼັງສຳເລັດການຈັດຕັ້ງປະຕິບັດຕາມບົດບັນທຶກຄວາມເຂົ້າໃຈ (MOU) ໂດຍສຳເລັດການສຳຫຼວດຂອບເຂດເນື້ອທີ່ດິນທີ່ຊັດເຈນ, ພ້ອມທັງໄດ້ມີການຮັບຮອງບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ (EIA) ຫຼື ບົດສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ (IEE) ໂດຍຜ່ານລະບຽບການຕ່າງໆຂອງຂະແໜງກະສິກຳ-ປ່າໄມ້ ແລະ ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລ້ວ ຜູ້ລົງທຶນສາມາດຍື່ນສະເໜີຕໍ່ຂະແໜງ ຜທ ເພື່ອຂໍກ້າວໄປສູ່ຂັ້ນຕອນພັດທະນາໂຄງການ ໂດຍສະເໜີຂໍເຊັນສັນຍາສຳປະທານໂຄງການ (CA) ກັບລັດຖະບານ.

ພາຍຫຼັງເຊັນສັນຍາສຳປະທານໂຄງການ (CA) ກັບລັດຖະບານແລ້ວ ຜູ້ລົງທຶນ ຕ້ອງສ້າງຕັ້ງບໍລິສັດໂຄງການ (Project Company) ຂຶ້ນ ເພື່ອດຳເນີນກິດຈະການ ຫຼື ຈັດຕັ້ງປະຕິບັດສັນຍາສຳປະທານ, ຊຶ່ງໃບອະນຸຍາດລົງທຶນ ຈະອອກໃຫ້ໂດຍຂະແໜງ ຜທ. ຫຼັງຈາກນັ້ນ, ກໍສາມາດຈັດຕັ້ງປະຕິບັດໂຄງການ ໂດຍສອດຄອງກັບບົດວິພາກເສດຖະກິດ-ເຕັກນິກຂອງໂຄງການ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### 5.1.4 ການວາງເງິນຄໍ້າປະກັນ ການພັດທະນາທີ່ດິນ

ການວາງເງິນຄໍ້າປະກັນ ແມ່ນການວາງເງິນມັດຈຳ ກັບລັດຖະບານ ເພື່ອຄໍ້າປະກັນການຈັດຕັ້ງປະຕິບັດ ບົດບັນທຶກຄວາມເຂົ້າໃຈ (MOU), ສັນຍາສຳປະທານໂຄງການ (CA) ທີ່ນອນຢູ່ໃນກິດຈະການ ການລົງທຶນສຳປະທານ ທີ່ໄດ້ກຳນົດຢູ່ໃນຂໍ້ຕົກລົງວ່າດ້ວຍການວາງເງິນຄໍ້າປະກັນ ສຳລັບກິດຈະການສຳປະທານ ສະບັບເລກທີ 2735/ກຜທ. ລົງວັນທີ 02 ພະຈິກ 2018. ສະນັ້ນ, ພາຍຫຼັງການເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາສຳປະທານແລ້ວ ຜູ້ລົງທຶນ ຕ້ອງໄດ້ວາງເງິນຄໍ້າປະກັນກັບຂະແໜງ ຜທ ຂັ້ນສູນກາງ ຫຼື ຂັ້ນແຂວງ ພາຍໃນກຳນົດເວລາ 30 ວັນ ນັບແຕ່ວັນທີ່ລັດຖະບານ ແລະ ຜູ້ລົງທຶນ ໄດ້ເຊັ່ນ ບັນທຶກຄວາມເຂົ່າໃຈ, ສັນຍາໂຄງການສຳປະທານ ຫຼື ໄດ້ຮັບອະນຸຍາດລົງທຶນ. ຜູ້ລົງທຶນ ຕ້ອງວາງເງິນຄໍ້າປະກັນເປັນເງິນສົດ ດ້ວຍການໂອນເຂົ້າບັນຊີຂອງລັດຖະບານ ຕາງໜ້າໂດຍຂະແໜງ ຜທ ຢູ່ຄັງເງິນແຫ່ງຊາດ ທີ່ເປີດໄວ້ຢູ່ທະນາຄານທຸລະກິດ ຕາມເລກບັນຊີທີ່ແຈ້ງໂດຍຂະແໜງ ຜທ, ຫາກພາຍຫຼັງ ຜູ້ລົງທຶນໄດ້ໂອນເງິນຄໍ້າປະກັນແລ້ວ ໃຫ້ນຳໃບຮັບຈາກທະນາຄານມາຍື່ນຂະແໜງ ຜທ ເພື່ອອອກໜັງສືຄໍ້າປະກັນໃຫ້.

ຈຳນວນມູນຄ່າເງິນຄໍ້າປະກັນ ບົດບັນທຶກຄວາມເຂົ້າໃຈ (MOU) ຫຼື ສັນຍາສຳປະທານໂຄງການ (CA)

| ເນື້ອທີ່ດິນສຳປະທານ | ເງິນຄໍ້າປະກັນ |
|---|---|
| 150 ເຮັກຕາລົງມາ | 30.000 ໂດລາສະຫະລັດ |
| 151 - 1.000 ເຮັກຕາ | 50.000 ໂດລາສະຫະລັດ |
| 1.000 ເຮັກຕາຂຶ້ນໄປ | 70.0 ລາສະຫະລັດ |

## 5.2 ການລົງທຶນ ກິດຈະການສຳປະທານ ຂະແໜງແຮ່ທາດ

### 5.2.1 ການລົງທຶນກ່ຽວກັບທຸລະກິດແຮ່ທາດ

ການລົງທຶນກ່ຽວກັບທຸລະກິດແຮ່ທາດ ໃຫ້ດຳເນີນພາຍໃຕ້ຮູບການບໍລິສັດ, ປະກອບດ້ວຍ 2 ປະເພດ ຄື:

- ທຸລະກິດກ່ຽວກັບບໍ່ແຮ່: ແມ່ນການເຄື່ອນໄຫວກິດຈະການກ່ຽວກັບການຊອກຄົ້ນ, ສຳຫຼວດ ແລະ ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ການຂຸດຄົ້ນ ລວມທັງການປະມູນສິດສຳປະທານບໍ່ແຮ່;
- ທຸລະກິດກ່ຽວກັບແຮ່ທາດສະເພາະ: ແມ່ນການດຳເນີນທຸລະກິດທີ່ບໍ່ຈຳເປັນຕ້ອງປະຕິບັດຕາມທຸກຂັ້ນຕອນຊອກຄົ້ນ ແລະ ສຳຫຼວດ ຄືກັນກັບການດຳເນີນທຸລະກິດກ່ຽວກັບບໍ່ແຮ່, ທຸລະກິດກ່ຽວກັບແຮ່ທາດສະເພາະມີດັ່ງນີ້:

1) ການຮອນແຮ່ທາດໂລຫະແບບພື້ນເມືອງ;
2) ການຂຸດຄົ້ນແຮ່ທາດອະໂລຫະສຳລັບການກໍ່ສ້າງ;
3) ການຂຸດຄົ້ນແຮ່ທາດອະໂລຫະສຳລັບອຸດສາຫະກຳ.

ນອກນັ້ນ, ຍັງມີ ທຸລະກິດໃຫ້ບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ແມ່ນການດຳເນີນທຸລະກິດກ່ຽວກັບການບໍລິການວຽກງານຊອກຄົ້ນ, ສຳຫຼວດ, ສ້າງແຜນທີ່, ສຳຫຼວດທໍລະນີຟີຊິກ, ເຈາະສຳຫຼວດ, ຂຸດຄົ້ນ, ຂົນສົ່ງ, ຄ້າຂາຍແຮ່ທາດ, ວິໄຈ ແລະ ວຽກງານໃຫ້ຄຳປຶກສາດ້ານບໍ່ແຮ່ ແລະ ການບໍລິການອື່ນກ່ຽວກັບແຮ່ທາດ.

### 5.2.2 ຂັ້ນຕອນການຊອກຄົ້ນ ແລະ ສຳຫຼວດແຮ່ທາດ

ຜູ້ລົງທຶນ (ນິຕິບຸກຄົນ) ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບແຮ່ທາດ ໃນຂັ້ນຕອນຊອກຄົ້ນ, ສຳຫຼວດ ແລະ ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຕ້ອງຂໍອະນຸຍາດເກັບກຳຂໍ້ມູນເບື້ອງຕົ້ນສະເພາະແຮ່ທາດໃດໜຶ່ງ ຈາກຂະແໜງພະລັງງານ ແລະ ບໍ່ແຮ່ ຂັ້ນສູນກາງ ຫຼື ຂັ້ນແຂວງທີ່ໂຄງການຕັ້ງຢູ່. ການເກັບກຳຂໍ້ມູນເບື້ອງຕົ້ນນັ້ນ ຈະດຳເນີນຢູ່ຫ້ອງການ ແລະ ຢູ່ພາກສະໜາມ ເພື່ອສຶກສາບ່ອນປະກົດແຮ່ທາດ, ສະພາບແວດລ້ອມ ແລະ ເກັບຕົວຢ່າງເທິງໜ້າດິນມາວິໄຈ (ຊຶ່ງຈະມີການເຮັດບົດບັນທຶກການລົງເກັບກຳຂໍ້ມູນເບື້ອງຕົ້ນ ແລະ ເຮັດບົດລາຍງານຜົນການລົງເກັບກຳຂໍ້ມູນເບື້ອງຕົ້ນກ່ຽວກັບແຮ່ທາດ). ພາຍຫຼັງເກັບກຳຂໍ້ມູນເບື້ອງຕົ້ນແລ້ວ ຖ້າຫາກເຫັນວ່າມີຂໍ້ມູນພຽງພໍ ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນ ໃນກິດຈະການກ່ຽວກັບແຮ່ທາດ (ເພື່ອຊອກຄົ້ນ, ສຳຫຼວດ ແລະ ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ) ໂດຍປະກອບເອກະສານຄຳຮ້ອງຂໍລົງທຶນ ແລະ ເອກະສານກ່ຽວຂ້ອງ ຍື່ນຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວຂະແໜງແຜນການ ແລະ ການລົງທຶນ ຂັ້ນສູນກາງ ແລະ ຂັ້ນແຂວງ ໂດຍອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ 2016 ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍມີດັ່ງຕໍ່ໄປນີ້:

| ລຳດັບ | ຄລທ ຂັ້ນສູນກາງ ເປັນຜູ້ພິຈາລະນາ | ຄລທ ຂັ້ນແຂວງ ເປັນຜູ້ພິຈາລະນາ |
|---|---|---|
| 1 | ກິດຈະການຊອກຄົ້ນ ແລະ ສຳຫຼວດແຮ່ທາດ | |
| 2 | ການຂຸດຄົ້ນແຮ່ທາດອະໂລຫະ ສຳລັບການກໍ່ສ້າງ (ບໍລິມາດຂຸດຄົ້ນແຕ່ 100.000 ແມັດກ້ອນຕໍ່ປີ ຂຶ້ນໄປ.) | ການຂຸດຄົ້ນແຮ່ທາດອະໂລຫະ ສຳລັບການກໍ່ສ້າງ (ບໍລິມາດຂຸດຄົ້ນ ໜ້ອຍກວ່າ 100.000 ແມັດ ກ້ອນຕໍ່ປີ ລົງມາ.) ແມ່ນປະຕິບັດຕາມ ມາດຕາ 90 ຄືກັນກັບການຂຸດຄົ້ນແຮ່ທາດອະໂລຫະສຳລັບການ ກໍ່ສ້າງ. |
| 3 | ທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດ ກ່ຽວກັບແຮ່ທາດ ເຊັ່ນ: ບໍລິການວຽກງານ ຊອກຄົ້ນ, ສຳຫຼວດ, ສ້າງແຜນທີ່, ສຳຫຼວດ ທໍລະນີຟີຊິກ, ເຈາະສຳຫຼວດ, ຂຸດຄົ້ນ, ຂົນສົ່ງ, ຄ້າຂາຍແຮ່ທາດ, ວິໄຈ ແລະ ວຽກງານໃຫ້ຄຳ ປຶກສາດ້ານບໍ່ແຮ່ ແລະ ການບໍລິການອື່ນກ່ຽວ ກັບແຮ່ທາດ. | |

ອີງຕາມກົດໝາຍວ່າດ້ວຍແຮ່ທາດ (ສະບັບປັບປຸງ) ເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017 ມາດຕາ 90 ການຂຸດຄົ້ນແຮ່ທາດອະໂລຫະ ສຳລັບອຸດສາຫະກຳ:

1. ບໍລິມາດຂຸດຄົ້ນ ໜ້ອຍກວ່າ 100.000 ແມັດກ້ອນຕໍ່ປີ ລົງມາ ໃຫ້ ຄລທ.ຂ ເປັນຜູ້ພິຈາລະນາອະຍຸາດໃຫ້ ສະເພາະນິຕິບຸກຄົນລາວ ເພື່ອສະໜອງໃຫ້ຕະຫຼາດພາຍໃນປະເທດ ແລະ ບໍ່ອະນຸຍາດໃຫ້ສົ່ງອອກ ຕ່າງປະເທດ;
2. ບໍລິມາດຂຸດຄົ້ນ 100.000 ແມັດກ້ອນຕໍ່ປີ ຂຶ້ນໄປ ໃຫ້ ຄລທ.ສ ເປັນຜູ້ພິຈາລະນາອະນຸຍາດໃຫ້ນິຕິບຸກຄົນ ພາຍໃນ ຫຼື ຕ່າງປະເທດ ເພື່ອສະໜອງໃຫ້ຕະຫຼາດພາຍໃນປະເທດ ແລະ ສົ່ງອອກ.

❑ ຂອບເຂດໜ້າວຽກທີ່ຕ້ອງປະຕິບັດໃນໄລຍະ ຊອກຄົ້ນ-ສຳຫຼວດ ປະກອບມີ:

ພາຍຫຼັງຜູ້ລົງທຶນ ໄດ້ເຊັນສັນຍາ ຊອກຄົ້ນ-ສຳຫຼວດ ແລະ ໄດ້ຮັບໃບອະນຸຍາດລົງທຶນ ຊອກຄົ້ນ-ສຳຫຼວດ ແລ້ວ ຜູ້ລົງທຶນຕ້ອງໄດ້ຂໍໃບອະນຸຍາດດຳເນີນກິດຈະການຊອກຄົ້ນ ແລະ ສຳຫຼວດກັບກະຊວງ ພະລັງງານ ແລະ ບໍ່ແຮ່ ພ້ອມສ້າງແຜນການ ສຳລັບການດຳເນີນວຽກງານຈັດຕັ້ງປະຕິບັດໂຄງການ ໂດຍເລີ່ມຈາກການຊອກຄົ້ນ ທົ່ວໄປຂອງເຂດສັນຍາສຳປະທານ ຕາມດ້ວຍການສຳຫຼວດໃນເຂດເນື້ອທີ່ຄັດຈ້ອນ. ແຜນການຊອກຄົ້ນ ແລະ ສຳຫຼວດ ແຕ່ລະໄລຍະ ຕ້ອງໄດ້ຜ່ານການຮັບຮອງຈາກ ກະຊວງພະລັງງານ ແລະ ບໍ່ແຮ່ ສາກ່ອນ, ຈຶ່ງສາມາດຈັດຕັ້ງປະຕິບັດໂຄງການໄດ້ ຊຶ່ງແຜນການດຳເນີນງານ ໄດ້ແບ່ງອອກເປັນ 3 ໄລຍະ ຄື:

1) ໄລຍະການຊອກຄົ້ນ:
- ສຶກສາເອກະສານຂໍ້ມູນ;
- ດຳເນີນວຽກງານຢູ່ພາກສະໜາມ ກ່ຽວກັບສະພາບທໍລະນີສາດ ແລະ ປະກົດການທີ່ມີແຮ່ທາດ;
- ສັງລວມຕີລາຄາຄຸນລັກສະນະ ຂອງແຮ່ທາດ;
- ກຳນົດເຂດທີ່ມີຄວາມເປັນໄປໄດ້ ເພື່ອກ້າວສູ່ການສຳຫຼວດ (ເນື້ອທີ່ອະນຸຍາດໃຫ້ຊອກຄົ້ນ ທີ່ກຳນົດໃຫ້ ນິຕິບຸກຄົນໜຶ່ງ ສາມາດດຳເນີນຊອກຄົ້ນແຮ່ທາດໄດ້ ໜຶ່ງຕອນ ສູງສຸດບໍ່ເກີນ 200 ກມ$^2$ ແລະ ຕ້ອງ

ສອດຄອງກັບລະບົບການຄຸ້ມຄອງເຂດເນື້ອທີ່ສໍາປະທານຂອງກະຊວງພະລັງງານ ແລະ ບໍ່ແຮ່ (ມາດຕາ 49 ຂອງກົດໝາຍວ່າດ້ວຍແຮ່ທາດ,2017);

- ບໍ່ເກີນ 2 ປີ ແລະ ສາມາດຕໍ່ໄດ້ 1 ເທື່ອ ບໍ່ເກີນ 1 ປີ.

2) ໄລຍະການສໍາຫຼວດ:

- ແມ່ນການສຶກສາໂຄງສ້າງທາງດ້ານທໍລະນີສາດ ແລະ ແຫຼ່ງແຮ່ທາດ ໃນຂອບເຂດເນື້ອທີ່ ທີ່ໄດ້ກໍານົດໃຫ້ສໍາຫຼວດ;
- ປະກອບດ້ວຍວຽກງານທໍລະນີສາດ, ທໍລະນີຟີຊິກ, ເຈາະສໍາຫຼວດ, ເຈາະອຸມົງ, ຂຸດຂຸມຄອງ, ຂຸດສ້າງ, ເກັບຕົວຢ່າງ, ວິເຄາະວິໄຈ ແລະ ອື່ນໆ;
- ໃຫ້ຮູ້ປະລິມານສະສົມ ແລະ ຄຸນນະພາບຂອງແຫຼ່ງແຮ່ທາດ;
- ປະເມີນຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ເງື່ອນໄຂທາງດ້ານເຕັກນິກຂອງການຂຸດຄົ້ນ;
- ການສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ທໍາມະຊາດ ໄລຍະສໍາຫຼວດແຮ່ທາດ (ມາດຕາ 50 ຂໍ້ 3 ຂອງກົດໝາຍວ່າດ້ວຍແຮ່ທາດ 2017);
- ບໍ່ເກີນ 3 ປີ ແລະ ສາມາດຕໍ່ໄດ້ 1 ເທື່ອ ບໍ່ເກີນ 1 ປີ.

3) ໄລຍະການສ້າງບົດວິພາກເສດຖະກິດ-ເຕັກນິກ:

- ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ;
- ໃນຂັ້ນຕອນນີ້ ຈະເນັ້ນໜັກລົງເລິກກ່ຽວກັບຜົນການຄິດໄລ່ປະລິມານສະສົມແຮ່ທາດ ທີ່ຈະນໍາມາຮັບໃຊ້ໃຫ້ແກ່ການສ້າງບົດວິພາກ ໃຫ້ມີຄວາມຊັດເຈນ ໃຫ້ໃກ້ຄຽງກັບມາດຖານການຈັດແບ່ງຂັ້ນປະລິມານສະສົມແຮ່ທາດ ທີ່ສາກົນ ພວມນໍາໃຊ້ຢູ່;
- ນອກນັ້ນຍັງແມ່ນການປະເມີນກ່ຽວກັບການວາງແຜນການຂຸດຄົ້ນ, ປຸງແຕ່ງ, ຜະລິດ ແລະ ຈໍາໜ່າຍ;
- ດໍາເນີນການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ສັງຄົມ ແລະ ທໍາມະຊາດ, ພ້ອມທັງການປະເມີນປະສິດທິຜົນທາງດ້ານເສດຖະກິດຂອງໂຄງການ;
- ບໍ່ເກີນ 2 ປີ ແລະ ສາມາດຕໍ່ໄດ້ 1 ເທື່ອ ບໍ່ເກີນ 1 ປີ.

ໝາຍເຫດ: ໄລຍະເວລາຂອງການດໍາເນີນງານ ທັງ 3 ໄລຍະ ແມ່ນຂຶ້ນກັບຜົນການເຈລະຈາສັນຍາຂຸດຄົ້ນ ແລະ ສໍາຫຼວດ.

### 5.2.3 ຂັ້ນຕອນການພັດທະນາບໍ່ແຮ່

ພາຍຫຼັງຜູ້ລົງທຶນ ໄດ້ປະຕິບັດຕາມສັນຍາຂຸດຄົ້ນ-ສໍາຫຼວດ ທີ່ໄດ້ເຊັນກັບລັດຖະບານໄປແລ້ວ ແລະ ບົດວິພາກເສດຖະກິດ-ເຕັກນິກ ໄດ້ຖືກຮັບຮອງໂດຍຂະແໜງພະລັງງານ ແລະ ບໍ່ແຮ່ ພ້ອມກັບຊີ້ບອກວ່າໂຄງການດັ່ງກ່າວນັ້ນ ເປັນເສດຖະກິດ ແລະ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດໄດ້ຖືກຮັບຮອງໂດຍຂະແໜງ ຊັບພະຍາກອນ ທໍາມະຊາດ ແລະ ສິ່ງແວດລ້ອມ, ຜູ້ລົງທຶນ ກໍ່ສາມາດສະເໜີຂໍກ້າວເຂົ້າສູ່ຂັ້ນຕອນການພັດທະນາບໍ່ແຮ່ (ການຂຸດຄົ້ນ ແລະ ປຸງແຕ່ງ) ໂດຍສອດຄອງກັບກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

ຂັ້ນຕອນການພິຈາລະນາອະນຸຍາດ ແລະ ອອກໃບອະນຸຍາດລົງທຶນ ຂະແໜງແຮ່ທາດ







ຫມາຍເຫດ: ພາຍຫລັງຜູ້ລົງທຶນ ໄດ້ຮັບໃບອະນຸຍາດລົງທຶນແລ້ວ ຜູ້ລົງທຶນຕ້ອງໄດ້ຂໍໃບອະນຸຍາດ ຊອກຄົ້ນ ແລະ ສຳຫຼວດແຮ່ທາດ ແລະ ໃບອະນຸຍາດດຳເນີນກິດຈະການ ພັດທະນາບໍ່ແຮ່ ກັບກະຊວງ ພະລັງງານ ແລະ ບໍ່ແຮ່.

### 5.2.4 ການວາງເງິນຄ້ຳປະກັນ ກ່ຽວກັບແຮ່ທາດ

ການວາງເງິນຄ້ຳປະກັນ ໃບອະນຸຍາດລົງທຶນ ສຳລັບກິດຈະການກ່ຽວກັບແຮ່ທາດ ແລະ ສັນຍາຂຸດຄົ້ນແຮ່ທາດ ມີດັ່ງນີ້:

| ເນື້ອທີ່ດິນສຳປະທານ | ເງິນຄ້ຳປະກັນ |
|---|---|
| 1 ກມ$^2$ ລົງມາ | 20.000 ໂດລາສະຫະລັດ |
| 1-100 ກມ$^2$ | 50.000 ໂດລາສະຫະລັດ |
| 100 ກມ$^2$ | 100.000 ໂດລາສະຫະລັດ |

ການວາງເງິນຄ້ຳປະກັນ ການຂຸດຄົ້ນແຮ່ທາດອະໂລຫະ ສຳລັບອຸດສາຫະກຳ ໃຫ້ປະຕິບັດ ດັ່ງນີ້:

| ບໍລິມາດຂຸດຄົ້ນ / ປີ | ເງິນຄ້ຳປະກັນ |
|---|---|
| ໜ້ອຍກວ່າ 100.000 ມ$^3$ | 10.000 ໂດລາສະຫະລັດ |
| 100.000 ມ$^3$ ຂຶ້ນໄປ | 30.0 ໂດລາສະຫະລັດ |

## 5.3 ການລົງທຶນ ກິດຈະການສຳປະທານ ຂະແໜງໄຟຟ້າ

### 5.3.1 ການລົງທຶນໃນທຸລະກິດໄຟຟ້າ

ການລົງທຶນກ່ຽວກັບທຸລະກິດໄຟຟ້າ ແບ່ງອອກເປັນ 3 ປະເພດ (ກົດໝາຍວ່າດ້ວຍໄຟຟ້າ,2017) ຄື:

- ທຸລະກິດບໍລິການໄຟຟ້າທົ່ວໄປ: ປະກອບມີ ການວາງແຜນ, ການສຳຫຼວດເກັບກຳຂໍ້ມູນ, ການອອກແບບ, ການກໍ່ສ້າງ, ການຕິດຕັ້ງ, ການດຳເນີນງານ, ການບໍລິການ ແລະ ການບຳລຸງຮັກສາອຸປະກອນ ແລະ ສິ່ງປະກອບສ້າງຂອງໂຄງການໄຟຟ້າ;

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດນີ້ ແມ່ນຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ຂະແໜງແຜນການ ແລະ ການລົງທຶນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ປີ 2016) ແລະ ກົດໝາຍທີ່ກ່ຽວຂ້ອງ ແລະ ຕ້ອງຂໍອະນຸຍາດດຳເນີນທຸລະກິດນຳຂະແໜງພະລັງງານ ແລະ ບໍ່ແຮ່.

- ທຸລະກິດສຳປະທານສາຍສົ່ງໄຟຟ້າ: ແມ່ນທຸລະກິດທີ່ລັດຖະບານໃຫ້ສຳປະທານໃນຮູບແບບ BOT ແກ່ນິຕິບຸກຄົນລາວ ໃຫ້ດຳເນີນການສຶກສາ, ອອກແບບ, ກໍ່ສ້າງ, ດຳເນີນງານ ແລະ ມອບໂອນໃຫ້ລັດຖະບານ ເມື່ອສິ້ນສຸດອາຍຸສຳປະທານ ຕາມກຳນົດໃນສັນຍາສຳປະທານ (ສາຍສົ່ງ 500 kV ຂຶ້ນໄປ ຕ້ອງໄດ້ຮັບອະນຸຍາດຈາກ ຄະນະປະຈຳສະພາແຫ່ງຊາດ) (ມາດຕາ 78), ຮູບການລົງທຶນສາມາດປະຕິບັດໄດ້ໂດຍການຮ່ວມທຶນລະຫວ່າງ ເອກະຊົນພາຍໃນ ຫຼື ຕ່າງປະເທດ ໂດຍຜ່ານຮູບແບບການປະມູນ ຫຼື ຮູບແບບ ບໍ່ຜ່ານການປະມູນ (ມາດຕາ 79).
- ທຸລະກິດຜະລິດໄຟຟ້າສະເພາະ: ແມ່ນທຸລະກິດທີ່ໄດ້ຮັບສຳປະທານຈາກລັດຖະບານ ຊຶ່ງດຳເນີນກິດຈະການກ່ຽວກັບການຜະລິດໄຟຟ້າ ຫຼື ທັງຜະລິດ ແລະ ສົ່ງໄຟຟ້າໄປຄ່ຽງຄູ່ກັນ (ມາດຕາ 42). ຂັ້ນການອະນຸຍາດຕໍ່ການດຳເນີນທຸລະກິດຜະລິດໄຟຟ້າສະເພາະ (ມາດຕາ 43) ມີດັ່ງນີ້:
  - ໂຄງການທີ່ມີກຳລັງຕິດຕັ້ງ 5 MW ລົງມາ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ພິຈາລະນາ;
  - ໂຄງການທີ່ມີກຳລັງຕິດຕັ້ງ 5 MW-100 MW ແມ່ນລັດຖະບານ ພິຈາລະນາ;
  - ໂຄງການທີ່ມີກຳລັງຕິດຕັ້ງ 100 MW ຂຶ້ນໄປ ແລະ ໂຄງການທີ່ມີອ່າງເກັບນ້ຳຫຼາຍກວ່າ 10.000 ເຮັກຕາຂຶ້ນໄປ ແລະ/ຫຼື ໂຄງການມີຜົນກະທົບຕໍ່ປະຊາຊົນ ທີ່ຕ້ອງຖືກຍົກຍ້າຍຫຼາຍຫວ່າ 500 ຄອບຄົວ ແມ່ນຄະນະປະຈຳສະພາແຫ່ງຊາດ ເປັນຜູ້ພິຈາລະນາຕາມການສະເໜີຂອງລັດຖະບານ.

### 5.3.2 ຮູບແບບການລົງທຶນໃນທຸລະກິດຜະລິດໄຟຟ້າສະເພາະ

ຮູບແບບການລົງທຶນໃນທຸລະກິດຜະລິດໄຟຟ້າສະເພາະ ໄດ້ກຳນົດຢູ່ໃນມາດຕາ 44, 45 ແລະ 46 ຂອງກົດໝາຍວ່າດ້ວຍໄຟຟ້າ ຊຶ່ງມີ 3 ຮູບແບບຄື:

1) Build, Operate and Transfer (BOT): ກໍ່ສ້າງ, ເປັນເຈົ້າຂອງ, ດຳເນີນງານ ແລະ ມອບໂອນໃຫ້ລັດຖະບານ ເມື່ອສິ້ນສຸດສັນຍາອາຍຸສຳປະທານຕາມສັນຍາສຳປະທານ ແມ່ນໂຄງການໄຟຟ້າພະລັງງານນ້ຳ ທີ່ມີກຳລັງຕິດຕັ້ງ 5 MW ຂຶ້ນໄປ.

2) Build, Own and Operate (BOO): ກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານ ລວມມີ: ໂຄງການໄຟຟ້າພະລັງງານນ້ຳຂະໜາດນ້ອຍ, ໂຄງການໄຟຟ້າພະລັງງານຄວາມຮ້ອນ, ພະລັງງານແສງຕາເວັນ, ພະລັງງານລົມ ແລະ ອື່ນໆ ຕາມການກຳນົດຂອງລັດຖະບານ;

3) ຮູບແບບອື່ນ ຕາມການກຳນົດຂອງລັດຖະບານ.

### 5.3.3 ການຈັດຫາຜູ້ພັດທະນາໂຄງການໃນທຸລະກິດຜະລິດໄຟຟ້າສະເພາະ

ການຈັດຫາຜູ້ພັດທະນາໂຄງການໃນທຸລະກິດຜະລິດໄຟຟ້າສະເພາະ ຕ້ອງດຳເນີນດ້ວຍ 2 ຮູບແບບ ຄື:

1) ຜ່ານການປະມູນ: ແມ່ນໂຄງການທີ່ລັດຖະບານມີຂໍ້ມູນເບື້ອງຕົ້ນ ຈາກການສຶກສາ ເກັບກຳ ແລະ ລວບລວມຂໍ້ມູນຂອງລັດຖະບານ ທີ່ພຽງພໍຈະສາມາດຈັດປະມູນໄດ້;

2) ບໍ່ຜ່ານການປະມູນ: ໃນປັດຈຸບັນ ໂຄງການສ່ວນໃຫຍ່ແມ່ນດຳເນີນຕາມຂັ້ນຕອນນີ້ ຊຶ່ງແມ່ນໂຄງການທີ່ປະເທດຊາດ ໄດ້ຜົນປະໂຫຍດສູງກວ່າຜົນປະໂຫຍດທີ່ໄດ້ກຳນົດໄວ້ໃນກົດໝາຍ ທີ່ມີເງື່ອນໄຂຄົບຖ້ວນທາງດ້ານເຕັກນິກ ແລະ ການເງິນທີ່ແນ່ນອນ ແລະ ເປັນໂຄງການນຳໃຊ້ເຕັກໂນໂລຊີໃໝ່ໃນ ສປປ ລາວ ຫຼື ເປັນໂຄງການ ທີ່ມີລັກສະນະຍຸດທະສາດຂອງລັດຖະບານ (ມາດຕາ 25).

### 5.3.4 ຂັ້ນຕອນການພັດທະນາໂຄງການທີ່ບໍ່ຜ່ານການປະມູນ

ຂັ້ນຕອນການພັດທະນາໂຄງການທີ່ບໍ່ຜ່ານການປະມູນ ແມ່ນຜູ້ພັດທະນາທີ່ຖືກຄັດເລືອກ (ເງື່ອນໄຂການພິຈາລະນາອະນຸມັດໂຄງການທີ່ບໍ່ຜ່ານການປະມູນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ) ໂດຍມີຂັ້ນຕອນການຈັດຕັ້ງປະຕິບັດ ດັ່ງນີ້:

- ບົດບັນທຶກຄວາມເຂົ້າໃຈ (MOU);
- ການພັດທະນາໂຄງການ (PDA);
- ການສຳປະທານໂຄງການ (CA)

### 5.3.5 ບົດບັນທຶກຄວາມເຂົ້າໃຈ (MOU) ເພື່ອສຶກສາຄວາມເປັນໄປໄດ້ໂຄງການ

ຜູ້ລົງທຶນ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບພະລັງງານໄຟຟ້າ ຕ້ອງຂໍອະນຸຍາດລົງເກັບກຳຂໍ້ມູນເບື້ອງຕົ້ນຈາກຂະແໜງການພະລັງງານ ແລະ ບໍ່ແຮ່ ເພື່ອກຳນົດຈຸດທີ່ຕັ້ງຂອງໂຄງການທີ່ຕ້ອງການແລ້ວ ໃຫ້ປະກອບຄຳຮ້ອງຂໍລົງທຶນ ແລະ ເອກະສານກ່ຽວຂ້ອງ ຍື່ນຄຳຮ້ອງຂໍລົງທຶນ ກັບຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ ຫຼື ຂັ້ນແຂວງ ຕາມຂັ້ນຄຸ້ມຄອງ ເພື່ອຂໍອະນຸມັດ ເຊັ່ນບົດບັນທຶກຄວາມເຂົ້າໃຈ (MOU) ກັບລັດຖະບານ ຫຼື ແຂວງ ເພື່ອດຳເນີນການສຶກສາຄວາມເປັນໄປໄດ້ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

| ລ/ດ | ຄລທ ຂັ້ນສູນກາງ ເປັນຜູ້ພິຈາລະນາ ກຳລັງການຕິດຕັ້ງ ຫຼາຍກວ່າ 5 MW ຂຶ້ນໄປ | ຄລທ ຂັ້ນແຂວງ ເປັນຜູ້ພິຈາລະນາ ກຳລັງການຕິດຕັ້ງ ນ້ອຍກວ່າ ຫຼື ເທົ່າກັບ 5 MW ລົງມາ |
|---|---|---|
| 1 | ການພັດທະນາພະລັງງານໄຟຟ້ານ້ຳຕົກ | ການພັດທະນາພະລັງງານໄຟຟ້ານ້ຳຕົກ |
| 2 | ການພັດທະນາພະລັງງານໄຟຟ້າດ້ວຍລົມ | ການພັດທະນາພະລັງງານໄຟຟ້າດ້ວຍລົມ |
| 3 | ການພັດທະນາພະລັງງານໄຟຟ້າດ້ວຍແສງຕາເວັນ | ການພັດທະນາພະລັງງານໄຟຟ້າດ້ວຍແສງຕາເວັນ |
| 4 | ການພັດທະນາພະລັງງານໄຟຟ້າດ້ວຍຄວາມຮ້ອນ | ການພັດທະນາພະລັງງານໄຟຟ້າດ້ວຍຄວາມຮ້ອນ |

ອີງຕາມ ກົດໝາຍວ່າດ້ວຍໄຟຟ້າ (ສະບັບປັບປຸງ) ເລກທີ 19/ສພຊ. ວັນທີ 9 ພຶດສາພາ 2017, ມາດຕາ 43 ການອະນຸຍາດດຳເນີນທຸລະກິດໄຟຟ້າສະເພາະ.

❑ ຂອບເຂດໜ້າວຽກທີ່ຕ້ອງປະຕິບັດໃນໄລຍະບົດບັນທຶກຄວາມເຂົ້າໃຈ (MOU) ປະກອບມີ:

ໄລຍະເວລາຂອງບົດບັນທຶກຄວາມເຂົ້າໃຈ (MOU) ການດຳເນີນງານສຶກສາຄວາມເປັນໄປໄດ້ໂຄງການພັດທະນາພະລັງງານໄຟຟ້າ ແມ່ນມີອາຍຸບໍ່ເກີນ 24 ເດືອນ ຊຶ່ງໃນນັ້ນ ຜູ້ພັດທະນາ ຈະຕ້ອງປະຕິບັດ ຄື:

1) ການສຶກສາຄວາມເປັນໄປໄດ້ (ບົດວິພາກເສດຖະກິດ-ເຕັກນິກ "FS") ຈະຕ້ອງປະຕິບັດຕາມລະບຽບການ ແລະ ບົດແນະນຳຂອງກະຊວງພະລັງງານ ແລະ ບໍ່ແຮ່; ແລະ ສະເພາະໂຄງການພັດທະນາແຫຼ່ງຜະລິດໄຟຟ້າຕາມລຳນ້ຳຂອງຕ້ອງດຳເນີນຕາມທຸກຂັ້ນຕອນຕາມກອບສັນຍາ 1995 ແລະ ບົດແນະນາທີ່ກ່ຽວຂ້ອງ ຂອງ ກອງເລຂາແມ່ນ້ຳຂອງສາກົນ (MRCs);
2) ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ Environmental Impact Assessment "EIA" ຫຼື ບົດລາຍງານການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ Initial Environmental Examination (IEE).

### 5.3.6 ຂັ້ນຕອນສັນຍາພັດທະນາໂຄງການ (PDA)

ພາຍຫຼັງທີ່ຜູ້ລົງທຶນ ໄດ້ສຳເລັດພັນທະຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນ MOU (ໃນນັ້ນບົດ FS, ບົດ EIA/IEE ໄດ້ຮັບການຮັບຮອງໂດຍຂະແໜງການທີ່ກ່ຽວຂ້ອງ) ແລ້ວ, ຜູ້ລົງທຶນ ສາມາດສະເໜີຂໍເຂົ້າສູ່ການສຶກສາຄວາມເປັນໄປໄດ້ລະອຽດ ຫຼື ເອີ້ນວ່າ ຂັ້ນຕອນພັດທະນາໂຄງການ ບົນພື້ນຖານການເຊັນສັນຍາພັດທະນາໂຄງການກັບລັດຖະບານ, ໃນຂັ້ນຕອນຕໍ່ໄປນີ້ ຜູ້ລົງທຶນ ແມ່ນຈະຕ້ອງໄດ້ປະສານງານກັບກະຊວງພະລັງງານ ແລະ ບໍ່ແຮ່ ຊຶ່ງຈະມີລາຍລະອຽດ ແລະ ຂັ້ນຕອນ ທີ່ຕ້ອງປະຕິບັດຕາມລະບຽບຂອງກະຊວງພະລັງງານ ແລະ ບໍ່ແຮ່. ການເຈລະຈາສັນຍາ ແມ່ນສົມທົບໂດຍກົງກັບ ກະຊວງພະລັງງານ ແລະ ບໍ່ແຮ່ ໂດຍຈະນຳຜົນການເຈລະຈາສັນຍາພັດທະນາໂຄງການ ນຳສະເໜີຕໍ່ ຄລທ.ສ ພິຈາລະນາ ແລ້ວລາຍງານລັດຖະບານ ເພື່ອອອກແຈ້ງການ ແລະ ໃບມອບສິດເຊັນສັນຍາພັດທະນາໂຄງການ.

### 5.3.7 ຂັ້ນຕອນການສຳປະທານໂຄງການ (CA)

ຂັ້ນຕອນນີ້ ກໍຄ້າຍຄືກັບຂັ້ນຕອນຂໍພັດທະນາໂຄງການ (PDA) ແຕ່ກ່ອນຈະເຊັນສັນຍາສຳປະທານໂຄງການ (CA) ຜູ້ລົງທຶນ ແມ່ນຈະຕ້ອງໄດ້ສ້າງຕັ້ງບໍລິສັດໂຄງການ (Project Company) ເພື່ອເຊັນສັນຍາສຳປະທານໂຄງການ (CA) ກັບລັດຖະບານ ຊຶ່ງປະກອບເອກະສານຕໍ່ໄປນີ້:

1. ສັນຍາຂາຮຸ້ນພາຍໃນຜູ້ລົງທຶນດ້ວຍກັນ ລວມທັງວິສາຫະກິດໃດໜຶ່ງຂອງລັດຖະບານ ຕາມການຕົກລົງມອບໝາຍຂອງລັດຖະບານ ເພື່ອຖືຮຸ້ນໃນໂຄງການ/ບໍລິສັດ;
2. ປະກອບຄຳຮ້ອງຕາມແບບຄຳຮ້ອງຂໍສ້າງຕັ້ງບໍລິສັດ ໂຄງການ ໂດຍມີເອກະສານປະກອບຄືກັບເອກະສານປະກອບໃນການຍື່ນຄຳຮ້ອງຂໍລົງທຶນໃນຂະແໜງພະລັງງານໄຟຟ້າໃນເບື້ອງຕົ້ນ ໂດຍແນບສັນຍາຂາຮຸ້ນ ແລະ ເອກະສານກ່ຽວຂ້ອງ.

ຂະບວນການພິຈາລະນາອະນຸຍາດ ແລະ ອອກໃບອະນຸຍາດລົງທຶນ ຂະແໜງພະລັງງານໄຟຟ້າ







ພາຍຫລັງໄດ້ຮັບການສ້າງຕັ້ງບໍລິສັດໂຄງການແລ້ວ, ຂະແໜງແຜນການ ແລະ ການລົງທຶນ ອອກໃບອະນຸຍາດລົງທຶນ (ກິດຈະການໄຟຟ້າ) ໃຫ້ແກ່ຜູ້ລົງທຶນ ເພື່ອສາມາດເຊັນສັນຍາສຳປະທານກັບລັດຖະບານ ເພື່ອກ້າວໄປສູ່ການຈັດຕັ້ງປະຕິບັດແຜນການດຳເນີນງານຕໍ່ໄປ.

ການເຊັນບົດບັນທຶກຄວາມເຂົ້າໃຈ, ສັນຍາພັດທະນາໂຄງການ ແລະ ສັນຍາສຳປະທານ ກັບຜູ້ລົງທຶນ ໂດຍແມ່ນຂະແໜງແຜນການ ແລະ ການລົງທຶນ ຕາງໜ້າໃຫ້ລັດຖະບານລົງນາມ ເປັນຄູ່ສັນຍາ.

### 5.3.8 ການວາງເງິນຄ້ຳປະກັນ ການພັດທະນາພະລັງງານໄຟຟ້າ

ການວາງເງິນຄ້ຳປະກັນ ບົດບັນທຶກຄວາມເຂົ້າໃຈ (MOU), ສັນຍາພັດທະນາໂຄງການ (PDA) ມີດັ່ງນີ້:

| ກຳລັງຕິດຕັ້ງ | ເງິນຄ້ຳປະກັນ |
|---|---|
| 5 MW ລົງມາ | 30.000 ໂດລາສະຫະລັດ |
| ສູງກວ່າ 5 MW - 100 MW | 50.000 ໂດລາສະຫະລັດ |
| 100 MW ຂຶ້ນໄປ | 100.0 ລາສະຫະລັດ |

## 5.4 ຄຳຮ້ອງ ແລະ ເອກະສານປະກອບ ໃນກິດຈະການສຳປະທານ

1) ຄຳຮ້ອງຂໍລົງທຶນ ຕາມແບບພິມ;
2) ບົດສະເໜີຫຍໍ້ກ່ຽວກັບການພັດທະນາໂຄງການ ຢັ້ງຢືນໂດຍປະທານ ຫຼື ອຳນວຍການໃຫຍ່ ຂອງບໍລິສັດ (ຫຼື ຜູ້ຖືກມອບສິດ);
3) ສຳເນົາປະຫວັດຂອງບໍລິສັດສະບັບຫຼ້າສຸດ, ປະຫວັດ ແລະ ປະສົບການຂອງຜູ້ລົງທຶນ ຫຼື ບໍລິສັດ, ບັດປະຈຳຕົວ, ໃບແຈ້ງໂທດ, ສຳເນົາໜັງສືເດີນທາງ, ໃບອະນຸຍາດ ຫຼື ໃບທະບຽນວິສາຫະກິດ ຂອງບໍລິສັດ;
4) ສັນຍາຮ່ວມ ພ້ອມຢັ້ງຢືນທະບຽນສານຢູ່ ສປປ ລາວ (ໃນກໍລະນີ ມີສອງບໍລິສັດຂຶ້ນໄປ);
5) ໃບມອບສິດ ໃຫ້ຜູ້ຕາງໜ້າບັນດາຂາຮຸ້ນ ຫຼື ບໍລິສັດ. ໃນກໍລະນີ ບຸກຄົນດັ່ງກ່າວບໍ່ຢູ່ໃນຕຳແໜ່ງສູງສຸດຂອງບໍລິສັດ;
6) ແຜນທີ່ ຈຸດພິກັດ ຈຸດສະຖານທີ່ຕັ້ງຂອງໂຄງການ;
7) ເອກະສານກ່ຽວກັບຂໍ້ມູນທາງດ້ານເຕັກນິກຂອງໂຄງການເບື້ອງຕົ້ນ;
8) ເອກະສານກ່ຽວກັບການລົງເກັບຂໍ້ມູນເບື້ອງຕົ້ນຂອງໂຄງການ (ຖ້າມີ);
9) ໜັງສືຢັ້ງຢືນຖານະການເງິນຂອງບໍລິສັດຈາກສະຖາບັນການເງິນ ຫຼື ທະນະຄານ;
10) ປະກອບເອກະສານ ຕາມແບບຟອມຂອງຂະແໜງການກ່ຽວຂ້ອງ;
11) ໃນກໍລະນີທີ່ທ່ານມີຂໍ້ມູນສະເພາະຂອງໂຄງການ ສະເໜີເພີ່ມເຕີມ ເຂົ້າໃນຄຳຮ້ອງຂໍລົງທຶນ.

ຄຳຮ້ອງທີ່ຍື່ນ ຈຳນວນ 6 ຊຸດ ແລະ ຜູ້ລົງທຶນຕ້ອງເກັບສຳເນົາຄຳຮ້ອງຂໍລົງທຶນ 1 ສະບັບ ໄວ້ເປັນຫລັກຖານ.

## 5.5 ການພັດທະນາເຂດເສດຖະກິດພິເສດ (SEZ)

### 5.5.1 ເຂດເສດຖະກິດພິເສດ (SEZ)

ເຂດເສດຖະກິດພິເສດ ຂຽນຫຍໍ້ວ່າ “ຂສພ” ຂຽນເປັນພາສາອັງກິດ: Special Economic Zone “SEZ” ແມ່ນເຂດທີ່ມີກົນໄກຄຸ້ມຄອງບໍລິຫານສະເພາະ ເພື່ອສ້າງເງື່ອນໄຂໃຫ້ແກ່ການດຶງດູດການລົງທຶນ ທີ່ນຳໃຊ້ເຕັກໂນໂລຊີສູງ, ນຳໃຊ້ນະວັດຕະກຳໃນການຜະລິດກະສິກຳເປັນສິນຄ້າ, ການຜະລິດທີ່ສະອາດ, ປະຢັດຊັບພະຍາກອນທຳມະຊາດ ແລະ ພະລັງງານ ເພື່ອການພັດທະນາແບບຍືນຍົງ ແລະ ເປັນມິດກັບສິ່ງແວດລ້ອມ.

ເຂດເສດຖະກິດພິເສດ ຖືກສ້າງຕັ້ງຂຶ້ນໂດຍການຕົກລົງເຫັນດີຂອງລັດຖະບານ ເປັນຜູ້ພິຈາລະນາຕົກລົງສ້າງຕັ້ງເຂດເສດຖະກິດພິເສດ ຕາມການຄົ້ນຄວ້າ ແລະ ສະເໜີຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຊຶ່ງອາດປະກອບມີ: ນິຄົມອຸດສາຫະກຳ, ເຂດພັດທະນາກະສິກຳ, ອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ, ການພັດທະນາເຕັກໂນໂລຊີ ແລະ ຂໍ້ມູນ ຂ່າວສານ, ການບໍລິການ, ການຄ້າ, ການທ່ອງທ່ຽວ.

ໂຄງສ້າງການຄຸ້ມຄອງເຂດເສດຖະກິດພິເສດ




### 5.5.2 ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ

ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ "ຫຂສພ" ມີຖານະເທົ່າກົມ ຂຶ້ນກັບກະຊວງແຜນການ ແລະ ການລົງທຶນ ໂດຍໄດ້ຮັບການຊີ້ນຳຈາກລັດຖະມົນຕີ, ຮອງລັດຖະມົນຕີ ຕາມການມອບໝາຍ.

ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ເປັນເສນາທິການໃຫ້ກະຊວງແຜນການ ແລະ ການລົງທຶນ ໃນການຄົ້ນຄວ້າ, ວາງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບເຂດເສດຖະກິດພິເສດ.

### 5.5.3 ຄະນະຄຸ້ມຄອງ ຂສພ

ຄະນະຄຸ້ມຄອງ ຂສພ ແມ່ນກົງຈັກການຈັດຕັ້ງໜຶ່ງ ທີ່ຂຶ້ນກັບກະຊວງ ຜທ ມີຖານະເທົ່າພະແນກການ ຂັ້ນແຂວງ ປະກອບມີຂະແໜງການ, ໜ່ວຍງານ ແລະ ວິຊາການຈຳນວນໜຶ່ງ.

ແຂວງ, ນະຄອນຫຼວງ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ຂສພ ຈະມີຄະນະຄຸ້ມຄອງເຂດ ຄະນະໜຶ່ງເປັນຜູ້ຄຸ້ມຄອງ ແລະ ບໍລິຫານ ຂສພ ເພື່ອເປັນໃຈກາງປະສານງານ ອຳນວຍຄວາມສະດວກແກ່ການພັດທະນາ ແລະ ການລົງທຶນ ຢູ່ໃນ ຂສພ.

ໃນແຕ່ລະເຂດ ຈະມີການບໍລິການ ການລົງທຶນປະຕູດຽວ ໃຫ້ບໍລິການສິ່ງອຳນວຍຄວາມສະດວກແກ່ຜູ້ລົງທຶນພາຍໃນເຂດຂອງຕົນສະເພາະ.

ການຈັດຕັ້ງປະຕິບັດເຂດເສດຖະກິດພິເສດ ແມ່ນອີງຕາມດຳລັດວ່າດ້ວຍ ເຂດເສດຖະກິດພິເສດ ສະບັບເລກທີ 188/ລບ, ລົງວັນທີ 07/06/2018.

### 5.5.4 ການກຳນົດ ແລະ ເງື່ອນໄຂ ຂອງການພັດທະນາ ຂສພ

ອົງການປົກຄອງທ້ອງຖິ່ນ ເປັນຜູ້ກຳນົດ ແລະ ສະເໜີເຂດເສດຖະກິດພິເສດຂອງຕົນ ໂດຍປະສານສົມທົບກັບ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ໃນການກຳນົດ ຂສພ ຕ້ອງມີເງື່ອນໄຂ ຄື:

- ມີວັດຖຸປະສົງ ຂອງ ຂສພ ຈະແຈ້ງ;
- ມີທີ່ຕັ້ງ ທີ່ເໝາະສົມ, ກຳນົດເນື້ອທີ່ ແລະ ເຂດແດນ ຢ່າງຈະແຈ້ງ;
- ສອດຄອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
- ສອດຄອງກັບແຜນຍຸດທະສາດ ທີ່ດິນແຫ່ງຊາດ ແລະ ແຜນຍຸດທະສາດການພັດທະນາ ຂສພ;
- ກຳນົດອາຍຸການພັດທະນາ ຂສພ ທີ່ຊັດເຈນ;
- ກຳນົດແຈ້ງຜົນປະໂຫຍດຂອງລັດ, ປະຊາຊົນ, ຜູ້ພັດທະນາເຂດ ແລະ ຜູ້ລົງທຶນ;
- ກຳນົດນະໂຍບາຍສົ່ງເສີມ ທີ່ຈະແຈ້ງ;
- ມີການດຳເນີນການປະເມີນຜົນທາງດ້ານເສດຖະກິດ-ເຕັກນິກ;
- ມີການດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໂດຍສອດຄອງກັບ ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
- ຢູ່ພາຍໃຕ້ການຄຸ້ມຄອງຂອງລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ.

### 5.5.5 ການສະເໜີຂໍພັດທະນາ ແລະ ເງື່ອນໄຂ ຂອງຜູ້ພັດທະນາ ຂສພ

ຜູ້ທີ່ມີຈຸດປະສົງລົງທຶນພັດທະນາ ຂສພ ຕ້ອງເປັນນິຕິບຸກຄົນ ຍື່ນຄຳຮ້ອງ ພ້ອມດ້ວຍເອກະສານປະກອບ ຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ.

ໃນກໍລະນີ ມີຜູ້ສະເໜີຂໍພັດທະນາ ຂສພ ແຫ່ງດຽວ ແຕ່ສອງບໍລິສັດ ຂຶ້ນໄປ ຕ້ອງຜ່ານການຄັດເລືອກ ຕາມທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ, ໂດຍຜູ້ມີຈຸດປະສົງລົງທຶນພັດທະນາ ຂສພ ຕ້ອງຜ່ານການພິຈາລະນາ 2 ຂັ້ນຕອນ ຄື:

1. ການພິຈາລະນາການເຊັນບົດບັນທຶກຄວາມເຂົ້າໃຈ (MOU)

ພາຍຫຼັງໄດ້ຮັບຄຳຮ້ອງຖືກຕ້ອງ ແລະ ຄົບຖ້ວນແລ້ວ ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ຄົ້ນຄວ້າ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນກ່ຽວຂ້ອງ ແລ້ວລາຍງານຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ເພື່ອພິຈາລະນາ.

ໃນກໍລະນີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຕົກລົງເຫັນດີແລ້ວ ກະຊວງແຜນການ ແລະ ການລົງທຶນ ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ເພື່ອດຳເນີນການສຳຫຼວດພື້ນທີ່, ສຶກສາຂໍ້ມູນ ແລະ ປະກອບເອກະສານ ໃຫ້ສຳເລັດພາຍໃນ 18 ເດືອນ.

❑ ເອກະສານປະກອບການສະເໜີເຊັນບົດບັນທຶກຄວາມເຂົ້າໃຈ

ການສະເໜີຂໍເຊັນບົດບັນທຶກຄວາມເຂົ້າໃຈ ປະກອບດ້ວຍເອກະສານ ດັ່ງນີ້:

1. ໜັງສືຄຳຮ້ອງ;
2. ເອກະສານຢັ້ງຢືນຖານະນິຕິບຸກຄົນ;
3. ເອກະສານຢັ້ງຢືນຖານະການເງິນ;
4. ແຜນວາດເບື້ອງຕົ້ນ ເນື້ອທີ່ດິນຂອງໂຄງການ;
5. ເອກະສານອື່ນ ຕາມທີ່ໄດ້ກຳນົດໄວ້ໃນໃບຄຳຮອ້ງ.

## 2. ການພິຈາລະນາການເຊັນສັນຍາພັດທະນາ

ພາຍຫຼັງສຳເລັດການສຶກສາຂໍ້ມູນ, ປະກອບເອກະສານຖືກຕ້ອງ, ຄົບຖ້ວນ ແລະ ຮັບຮອງເອົາໂດຍກອງປະຊຸມຄະນະວິຊາການ ຂອງຂະແໜງການ ແລະ ທ້ອງຖິ່ນແລ້ວ, ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ລາຍງານຜົນຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ, ເມື່ອໄດ້ຮັບການຕົກລົງເຫັນດີແລ້ວ ກະຊວງແຜນການ ແລະ ການລົງທຶນ ສະເໜີລັດຖະບານ ຂໍອະນຸມັດ ເຊັນສັນຍາພັດທະນາ ກັບຜູ້ພັດທະນາເຂດ ແລະ ອອກໃບອະນຸຍາດລົງທຶນພັດທະນາ ຢ່າງເປັນທາງການ.

❑ ເອກະສານປະກອບການສະເໜີເຊັນສັນຍາພັດທະນາ

ການສະເໜີຂໍເຊັນສັນຍາພັດທະນາ ປະກອບດ້ວຍເອກະສານ ດັ່ງນີ້:

1. ໜັງສືສະເໜີຂໍພັດທະນາ;
2. ໜັງສືຢັ້ງຢືນຂອບເຂດເນື້ອທີ່ດິນລະອຽດຂອງໂຄງການ ຈາກອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ;
3. ແຜນແມ່ບົດການພັດທະນາໂຄງການ ແລະ ແຜນຜັງກໍ່ສ້າງເບື້ອງຕົ້ນ;
4. ບົດວິພາກເສດຖະກິດ-ເຕັກນິກ;
5. ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ;
6. ຮ່າງສັນຍາພັດທະນາເຂດເສດຖະກິດພິເສດ;
7. ແຜນວາດເບື້ອງຕົ້ນ ເນື້ອທີ່ດິນຂອງໂຄງການ;
8. ເອກະສານອື່ນ ຕາມທີ່ໄດ້ກຳນົດໄວ້ໃນໜັງສືສະເໜີຂໍພັດທະນາ.

### ຂັ້ນຕອນການພິຈາລະນາອະນຸຍາດ ແລະ ອອກໃບອະນຸຍາດລົງທຶນພັດທະນາເຂດເສດຖະກິດພິເສດ






### 5.5.6 ການລົງທຶນໃນ ຂສພ

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນຢູ່ໃນ ຂສພ ໃຫ້ຍື່ນຄຳຮ້ອງຕໍ່ຄະນະຄຸ້ມຄອງເຂດ ເພື່ອພິຈາລະນາ ຕາມກົນໄກການບໍລິການປະຕູດຽວ.

ໜ່ວຍງານບໍລິການປະຕູດຽວໃນ ຂສພ




1) ກິດຈະການລົງທຶນໃນ ຂສພ

ກິດຈະການລົງທຶນໃນ ຂສພ ປະກອບມີ 2 ປະເພດ ຄື:

- ກິດຈະການທີ່ຄະນະຄຸ້ມຄອງເຂດ ຕ້ອງໄດ້ຂໍອະນຸມັດ:

  ບັນຊີກິດຈະການທີ່ຄະນະຄຸ້ມຄອງເຂດ ຕ້ອງໄດ້ຂໍອະນຸມັດ ປະກອບດ້ວຍ: ກິດຈະການທີ່ຕ້ອງຂໍອະນຸມັດຈາກ ຄລທ.ສ ໂດຍສະເໜີຜ່ານຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ.

- ກິດຈະການທີ່ຄະນະຄຸ້ມຄອງເຂດ ສາມາດອະນຸມັດ:

  ຄະນະຄຸ້ມຄອງເຂດສາມາດອະນຸມັດໄດ້ແມ່ນກິດຈະການທີ່ບໍ່ຢູ່ໃນບັນຊີຕ້ອງຂໍການອະນຸມັດຈາກ ຄລທ.ສ. ກິດຈະການທີ່ຄະນະຄຸ້ມຄອງເຂດ ສາມາດອະນຸມັດໄດ້ມີ 2 ປະເພດ ດັ່ງນີ້:

1. ກິດຈະການ ທີ່ຕ້ອງຂໍຄຳເຫັນ ຈາກຂະແໜງການທີ່ກ່ຽວຂ້ອງພິຈາລະນາ ແລະ ແຈ້ງຕອບພາຍໃນ 10 ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຈາກຄະນະຄຸ້ມຄອງເຂດ. ຖ້າບໍ່ມີຄຳຕອບພາຍໃນ 10 ວັນລັດຖະການ ຖືວ່າເປັນການເຫັນດີ;
2. ກິດຈະການ ທີ່ບໍ່ຕ້ອງຂໍຄຳເຫັນ ຈາກຂະແໜງການກ່ຽວຂ້ອງພິຈາລະນາ ຄະນະຄຸ້ມຄອງເຂດ ສາມາດອະນຸມັດໄດ້ເລີຍ.

ຂັ້ນຕອນການພິຈາລະນາອະນຸມັດ ພາຍໃນເຂດເສດຖະກິດພິເສດ




## 5.5.7 ເອກະສານປະກອບການລົງທຶນໃນ ຂສພ

1) ຄຳຮ້ອງຂໍລົງທຶນ;
2) ບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນດຳເນີນທຸລະກິດ (ຖ້າຫາກມີຄວາມຈຳເປັນ);
3) ບົດປະເມີນຜົນກະທົບເບື້ອງຕົ້ນ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ຖ້າຫາກມີຄວາມຈຳເປັນ);
4) ສັນຍາສ້າງຕັ້ງບໍລິສັດ (ຖ້າເປັນການຮ່ວມມື);
5) ກົດລະບຽບບໍລິສັດ;
6) ເອກະສານຢັ້ງຢືນຖານະການເງິນ;
7) ເອກະສານການນຳໃຊ້ທີ່ດິນ;
8) ເອກະສານຢັ້ງຢືນຖານະບຸກຄົນ, ນິຕິບຸກຄົນ;
9) ແລະ ເອກະສານກ່ຽວຂ້ອງອື່ນໆ.

# ພາກທີ

# 06

## ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ (PPP)

## 6.1 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ (PPP)

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຂຽນເປັນພາສາອັງກິດ ວ່າ: Public Private Partnership "PPP" ແມ່ນ ກິດຈະການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຫຼື ກິດຈະການທີ່ພາກເອກະຊົນ ເປັນຜູ້ລົງທຶນທັງໝົດເຂົ້າໃນໂຄງການຂອງລັດ ເປັນຕົ້ນ ໂຄງການກໍ່ສ້າງກິດຈະການໃໝ່, ປັບປຸງໂຄງລ່າງພື້ນຖານ ຫຼື ສະໜອງການບໍລິການສາທາລະນະ, ລວມທັງ ໂຄງການພັດທະນາກິດຈະການອື່ນໆ ເປັນຕົ້ນ ທ່ອງທ່ຽວ, ກະສິກຳ, ພະລັງງານ, ບໍ່ແຮ່ ແລະ ອື່ນໆ ພາຍໃຕ້ສັນຍາການລົງທຶນຮ່ວມ ໃນກຳນົດເວລາອັນແນ່ນອນໃນການດຳເນີນງານທຸລະກິດ ທີ່ສອດຄ່ອງກັບກົດໝາຍ.

## 6.2 ຮູບການ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ (PPP)

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ "ການລົງທຶນຮ່ວມ" ມີ 2 ຮູບການ ດັ່ງນີ້:

1. ການລົງທຶນຮ່ວມ ໂດຍມີພາກລັດເຂົ້າຮ່ວມລົງທຶນ;
2. ການລົງທຶນຮ່ວມ ໂດຍພາກເອກະຊົນລົງທຶນທັງໝົດ.

### 1. ການລົງທຶນຮ່ວມ ໂດຍມີພາກລັດເຂົ້າຮ່ວມລົງທຶນ

ການລົງທຶນຮ່ວມ ໂດຍມີພາກລັດເຂົ້າຮ່ວມລົງທຶນ ແມ່ນ ການປະກອບທຶນສົມທົບຂອງລັດໂດຍກົງ ເຂົ້າໃນການພັດທະນາໂຄງການຮ່ວມກັບພາກເອກະຊົນ ໂດຍອີງຕາມຜົນຂອງການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ບົນພື້ນຖານການຕົກລົງເຫັນດີຂອງລັດຖະບານ ຫຼື ການຮັບຮອງໂດຍສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນແຕ່ລະກໍລະນີ.

ລັດຈະເຂົ້າຮ່ວມລົງທຶນ ຕາມຮູບແບບທີ່ໄດ້ກຳນົດໄວ້ ໃນດຳລັດວ່າດ້ວຍການລົງທຶນຮ່ວມ PPP ຖ້າຜົນຂອງການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ມີປະສິດພາບສູງ, ມີການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ເປັນໂຄງການທີ່ມີລັກສະນະ ຍຸດທະສາດ ບົນພື້ນຖານການມີສັນຍາຮ່ວມກັນ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

### 2. ການລົງທຶນຮ່ວມ ໂດຍພາກເອກະຊົນລົງທຶນທັງໝົດ

ການລົງທຶນຮ່ວມໂດຍພາກເອກະຊົນລົງທຶນທັງໝົດ ແມ່ນ ພາກເອກະຊົນເປັນຜູ້ຮັບຜິດຊອບລົງທຶນທັງໝົດເຂົ້າໃນການພັດທະນາໂຄງການຂອງລັດ ໂດຍອີງຕາມຜົນຂອງການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກຂອງໂຄງການ ບົນພື້ນຖານການຕົກລົງເຫັນດີຂອງລັດຖະບານ ຫຼື ການຮັບຮອງໂດຍສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນແຕ່ລະກໍລະນີ.

## 6.3 ຮູບແບບການລົງທຶນຮ່ວມ

ຮູບແບບ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີ ດັ່ງນີ້:

1. ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດຳເນີນງານ (Design Build Finance Operate-DBFO);
2. ອອກແບບ, ກໍ່ສ້າງ ແລະ ດຳເນີນງານ (Design Build Operate-DBO);
3. ກໍ່ສ້າງ, ດຳເນີນງານ ແລະ ມອບໂອນ (Build Operate Transfer-BOT);
4. ກໍ່ສ້າງ, ເປັນເຈົ້າຂອງ, ດຳເນີນງານ ແລະ ມອບໂອນ (Build Own Operate Transfer-BOOT);
5. ກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານ (Build Own Operate-BOO);
6. ກໍ່ສ້າງ, ມອບຮັບ ແລະ ດຳເນີນງານ (Build Transfer Operate-BTO);
7. ກໍ່ສ້າງ, ເຊົ່າ ແລະ ມອບໂອນ (Build Lease Transfer-BLT);
8. ດຳເນີນງານ ແລະ ບຳລຸງຮັກສາ (Operate and Maintenance-O&M);
9. ຮູບແບບອື່ນ ຕາມການຕົກລົງເຫັນດີຂອງລັດຖະບານ.

### 1. ການລົງທຶນຮ່ວມ ໃນຮູບແບບ ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດຳເນີນງານ (DBFO)

1) ເປັນໂຄງການພັດທະນາ, ປັບປຸງໂຄງລ່າງພື້ນຖານ ແລະ ການສະໜອງການບໍລິການ ທີ່ລັດເປັນ ເຈົ້າຂອງ, ແຕ່ໃຫ້ພາກເອກະຊົນເຂົ້າມາຮ່ວມພັດທະນາ ດ້ວຍທຶນຂອງພາກເອກະຊົນທັງໝົດ ຫຼື ສ່ວນໃຫ່ຍ ເລີ່ມແຕ່ການ ອອກແບບ, ກໍ່ສ້າງ, ຈົນຮອດການດຳເນີນງານ ແລະ ບຳລຸງຮັກສາຕະຫຼອດອາຍຸຂອງໂຄງການ ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ພາກລັດກຳນົດໃຫ້ ໂດຍມີສັນຍາການລົງທຶນຮ່ວມ;
2) ການບຳລຸງຮັກສາ, ສ້ອມແປງ ແລະ ປ່ຽນຖ່າຍ ແມ່ນຢູ່ໃນຄວາມຮັບຜິດຊອບຂອງພາກເອກະຊົນ ຕະຫຼອດອາຍຸຂອງສັນຍາ;
3) ແຫຼ່ງທຶນໃນການຊຳລະ ໃນກໍລະນີ ພາກລັດປະກອບທຶນ ແມ່ນຈັດສັນຈາກງົບປະມານຂອງລັດ ທີ່ໄດ້ກຳນົດໄວ້ໃນແຜນງົບປະມານຊຳລະໂຄງການ. ການຊຳລະ ແມ່ນປະຕິບັດໃນໄລຍະດຳເນີນງານ ໂດຍອີງໃສ່ຜົນຂອງການບໍລິການທີ່ປະຕິບັດໄດ້ຕົວຈິງ ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ ທີ່ຖືກຮັບຮອງ ແລະ ສັນຍາ ຮ່ວມຕະຫຼອດໄລຍະອາຍຸຂອງສັນຍາ. ໃນກໍລະນີ ພາກລັດບໍ່ເຂົ້າຮ່ວມທຶນ ແມ່ນ ພາກເອກະຊົນເກັບລາຍຮັບໂດຍກົງຈາກໂຄງການ;
4) ພາກເອກະຊົນ ມອບໂຄງການຄືນຢູ່ໃນສະພາບດີ ໃຫ້ລັດຖະບານເມື່ອສິ້ນສຸດສັນຍາ.

### 2. ການລົງທຶນຮ່ວມ ໃນຮູບແບບ ອອກແບບ, ກໍ່ສ້າງ ແລະ ດຳເນີນງານ (DBO)

1) ເປັນໂຄງການພັດທະນາ, ປັບປຸງໂຄງລ່າງພື້ນຖານ ແລະ ການສະໜອງການບໍລິການ ທີ່ລັດເປັນ ເຈົ້າຂອງ, ແຕ່ ວ່າຈ້າງໃຫ້ພາກເອກະຊົນມາອອກແບບ, ກໍ່ສ້າງ ແລະ ດຳເນີນງານຕາມເງື່ອນໄຂ ແລະ ມາດຕະຖານທີ່ພາກລັດກຳນົດໃຫ້ ໂດຍມີສັນຍາ. ສຳລັບການດຳເນີນງານ ສາມາດດຳເນີນພາຍໃຕ້ ສັນຍາ ຫຼື ສັນຍາດຳເນີນງານຕ່າງຫາກ;
2) ການບຳລຸງຮັກສາ, ສ້ອມແປງ ແລະ ປ່ຽນຖ່າຍ ແມ່ນຢູ່ໃນຄວາມຮັບຜິດຊອບຂອງພາກເອກະຊົນ ຕະຫຼອດອາຍຸຂອງສັນຍາ;
3) ການຊຳລະ ແມ່ນປະຕິບັດເປັນ ສອງສ່ວນ ຄື ສຳລັບການອອກແບບ ແລະ ກໍ່ສ້າງ ໃຫ້ຊຳລະ ພາຍຫຼັງສຳເລັດການກໍ່ສ້າງ ໂດຍຈ່າຍເປັນງວດຕາມການຕົກລົງ ແລະ ສຳລັບການດຳເນີນງານຕະຫຼອດໄລຍະ ອາຍຸ

ຂອງສັນຍາ ໃຫ້ຊຳລະຕາມຜົນສຳເລັດໃນການຈັດຕັ້ງປະຕິບັດໂຄງການຕົວຈິງ ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ ທີ່ຖືກຮັບຮອງ ແລະ ສັນຍາ;

4) ແຫຼ່ງທຶນໃນການຊຳລະ ແມ່ນນຳໃຊ້ງົບປະມານຂອງລັດ ທີ່ໄດ້ກຳນົດໄວ້ໃນແຜນງົບປະມານຊຳລະໂຄງ ການ ແລະ ຈັດສັນຈາກລາຍຮັບທີ່ລັດເກັບໄດ້ໂດຍກົງຈາກໂຄງການ.

3. ການລົງທຶນຮ່ວມ ໃນຮູບແບບ ກໍ່ສ້າງ, ດຳເນີນງານ ແລະ ມອບໂອນ (BOT)

1) ເປັນໂຄງການພັດທະນາ, ປັບປຸງໂຄງລ່າງພື້ນຖານ ແລະ ການສະໜອງການບໍລິການ ທີ່ລັດເປັນເຈົ້າຂອງ, ແຕ່ໃຫ້ສິດສຳປະທານ ແກ່ພາກເອກະຊົນ ເພື່ອດຳເນີນການສຶກສາສຳຫຼວດ, ອອກແບບ ກໍ່ສ້າງ ແລະ ດຳເນີນງານ ຕາມເງື່ອນໄຂ ແລະ ມາດຕະຖານທີ່ພາກລັດກຳນົດໃຫ້ ໂດຍມີສັນຍາ;
2) ພາກເອກະຊົນເປັນຜູ້ຮັບຜິດຊອບລົງທຶນ, ລາຍຮັບ ແລະ ລາຍຈ່າຍ ທັງໝົດ ຂອງໂຄງການ ຕາມທີ່ກຳນົດໄວ້ ໃນບົດວິພາກເສດຖະກິດ-ເຕັກນິກ ທີ່ຖືກຮັບຮອງ ແລະ ສັນຍາ ທີ່ໄດ້ເຊັນກັບລັດຖະບານ;
3) ການບຳລຸງຮັກສາ, ສ້ອມແປງ ແລະ ປ່ຽນຖ່າຍ ແມ່ນຢູ່ໃນຄວາມຮັບຜິດຊອບຂອງພາກເອກະຊົນ ຕະຫຼອດອາຍຸຂອງສັນຍາ;
4) ພາກເອກະຊົນ ຕ້ອງມອບໂອນໂຄງການທີ່ຢູ່ໃນສະພາບດີ ຄືນໃຫ້ພາກລັດ ພາຍຫຼັງສິ້ນສຸດສັນຍາ.

4. ການລົງທຶນຮ່ວມ ໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ, ດຳເນີນງານ ແລະ ມອບໂອນ (BOOT)

1) ເປັນໂຄງການພັດທະນາ, ປັບປຸງໂຄງລ່າງພື້ນຖານ ແລະ ການສະໜອງການບໍລິການ ທີ່ມີຂະໜາດໃຫຍ່ ແລະ ເຕັກນິກສັບສົນ ທີ່ລັດເປັນເຈົ້າຂອງ, ແຕ່ໃຫ້ສິດສຳປະທານ ແກ່ພາກເອກະຊົນ ເພື່ອດຳເນີນການສຶກສາ ສຳຫຼວດ, ອອກແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານຕາມເງື່ອນໄຂ ແລະ ມາດຕະຖານທີ່ພາກລັດກຳນົດໃຫ້ ໂດຍມີສັນຍາການລົງທຶນຮ່ວມ;
2) ພາກເອກະຊົນ ເປັນຜູ້ຮັບຜິດຊອບ ລົງທຶນ, ລາຍຮັບ ແລະ ລາຍຈ່າຍທັງໝົດ ຂອງໂຄງການຕະຫຼອດອາຍຸຂອງສັນຍາ ຕາມທີ່ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ ທີ່ຖືກຮັບຮອງ ແລະ ສັນຍາ ທີ່ໄດ້ເຊັນກັບລັດຖະບານ;
3) ການບຳລຸງຮັກສາ, ສ້ອມແປງ ແລະ ປ່ຽນຖ່າຍ ແມ່ນຢູ່ໃນຄວາມຮັບຜິດຊອບຂອງພາກເອກະຊົນ ຕະຫຼອດອາຍຸຂອງສັນຍາ;
4) ພາກເອກະຊົນ ຕ້ອງມອບໂອນໂຄງການທີ່ຢູ່ໃນສະພາບດີ ຄືນໃຫ້ພາກລັດ ພາຍຫຼັງສິ້ນສຸດສັນຍາ ການລົງທຶນຮ່ວມ.

5. ການລົງທຶນຮ່ວມ ໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານ (BOO)

1) ເປັນໂຄງການພັດທະນາ, ປັບປຸງໂຄງລ່າງພື້ນຖານ ແລະ ການສະໜອງການບໍລິການ ທີ່ລັດເປັນ ເຈົ້າຂອງ, ແຕ່ມອບສິດສຳປະທານ ໃຫ້ແກ່ພາກເອກະຊົນ ເພື່ອດຳເນີນການສຶກສາ ສຳຫຼວດ, ອອກແບບ ກໍ່ສ້າງ,ເປັນເຈົ້າຂອງ ແລະ ດຳເນີນງານຕາມເງື່ອນໄຂ ແລະ ມາດຕະຖານທີ່ພາກລັດກຳນົດໃຫ້ ໂດຍມີສັນຍາ;
2) ພາກເອກະຊົນ ເປັນຜູ້ຮັບຜິດຊອບ ລົງທຶນ, ລາຍຮັບ ແລະ ລາຍຈ່າຍທັງໝົດ ຂອງໂຄງການຕະ ຫຼອດອາຍຸຂອງສັນຍາ ຕາມທີ່ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ ທີ່ຖືກຮັບຮອງ ແລະ ສັນຍາ ທີ່ເຊັນກັບລັດຖະບານ;
3) ການບຳລຸງຮັກສາ, ສ້ອມແປງ ແລະ ປ່ຽນຖ່າຍ ແມ່ນຢູ່ໃນຄວາມຮັບຜິດຊອບຂອງພາກເອກະຊົນ ຕະຫຼອດອາຍຸຂອງສັນຍາ;
4) ພາຍຫຼັງສິ້ນສຸດສັນຍາ ພາກເອກະຊົນບໍ່ມອບໂຄງການ ຄືນໃຫ້ພາກລັດ.

6. ການລົງທຶນຮ່ວມ ໃນຮູບແບບ ກໍ່ສ້າງ, ມອບຮັບ ແລະ ດຳເນີນງານ (BTO)

1) ເປັນໂຄງການພັດທະນາ, ປັບປຸງໂຄງລ່າງພື້ນຖານ ແລະ ການສະໜອງການບໍລິການ ທີ່ລັດເປັນເຈົ້າຂອງ, ແຕ່ມອບສິດໃຫ້ພາກເອກະຊົນ ເປັນຜູ້ລົງທຶນ ໃນການອອກແບບ ແລະ ກໍ່ສ້າງ ຕາມເງື່ອນໄຂ ແລະ ມາດຕະຖານທີ່ພາກລັດກຳນົດ ໂດຍມີສັນຍາ, ພາຍຫຼັງສຳເລັດການກໍ່ສ້າງແລ້ວ ມອບໂຄງການໃຫ້ພາກລັດ;
2) ພາກລັດ ຈະໃຫ້ພາກເອກະຊົນທີ່ໄດ້ລົງທຶນ ຕາມຂໍ້ 1 ຂອງມາດຕານີ້ ເຊົ່າສິ່ງກໍ່ສ້າງ ຫຼື ການບໍລິ ການ ເພື່ອດຳເນີນງານ ໂດຍມີສັນຍາເຊົ່າຮ່ວມກັນ;
3) ພາກເອກະຊົນເປັນຜູ້ຮັບຜິດຊອບໂດຍກົງ ຕໍ່ການດຳເນີນທຸລະກິດ ແລະ ເກັບລາຍຮັບທັງໝົດ ຈາກໂຄງການ ຕະຫຼອດອາຍຸສັນຍາເຊົ່າ.

7. ການລົງທຶນຮ່ວມ ໃນຮູບແບບ ກໍ່ສ້າງ, ເຊົ່າ ແລະ ມອບໂອນ (BLT)

1) ເປັນໂຄງການພັດທະນາ, ປັບປຸງໂຄງລ່າງພື້ນຖານ ແລະ ການສະໜອງການບໍລິການ ທີ່ລັດເປັນ ເຈົ້າຂອງ, ແຕ່ ວ່າຈ້າງໃຫ້ພາກເອກະຊົນ ເປັນຜູ້ອອກແບບ ແລະ ກໍ່ສ້າງ ຕາມເງື່ອນໄຂ ແລະ ມາດຕະຖານ ທີ່ພາກລັດກຳນົດ ໂດຍມີສັນຍາ, ພາຍຫຼັງສຳເລັດການກໍ່ສ້າງແລ້ວ ມອບໂຄງການໃຫ້ພາກລັດ;
2) ພາກລັດ ຄັດເລືອກພາກເອກະຊົນ ເພື່ອເຊົ່າສິ່ງກໍ່ສ້າງ ຫຼື ຮ່ວມສະໜອງການບໍລິການ ໂດຍມີສັນຍາເຊົ່າ ຫຼື ຮ່ວມທຸລະກິດນຳກັນ;
3) ຕະຫຼອດອາຍຸສັນຍາເຊົ່າ ພາກເອກະຊົນເປັນຜູ້ຮັບຜິດຊອບໂດຍກົງຕໍ່ການດຳເນີນທຸລະກິດ ແລະ ເກັບລາຍຮັບທັງໝົດຈາກໂຄງການ;
4) ພາຍຫຼັງສິ້ນສຸດສັນຍາເຊົ່າ ພາກເອກະຊົນ ຕ້ອງມອບໂຄງການ ຄືນໃຫ້ພາກລັດໃນສະພາບທີ່ດີ ຕາມທີ່ກຳນົດໄວ້ໃນວັກສອງ ມາດຕາ 55;
5) ແຫຼ່ງທຶນໃນການຊຳລະຄ່າອອກແບບ ແລະ ກໍ່ສ້າງ ແມ່ນນຳໃຊ້ງົບປະມານຂອງລັດ ທີ່ໄດ້ກຳນົດໄວ້ ໃນແຜນງົບປະມານຊຳລະໂຄງການ ຊຶ່ງສາມາດຊຳລະ ເທື່ອດຽວ ຫຼື ເປັນງວດ ຕາມສັນຍາ.

8. ການລົງທຶນຮ່ວມ ໃນຮູບແບບ ດຳເນີນງານ ແລະ ບຳລຸງຮັກສາ (O&M)

1) ເປັນໂຄງການ ໂຄງລ່າງພື້ນຖານ ແລະ ການບໍລິການ ທີ່ມີແລ້ວ ຊຶ່ງລັດເປັນເຈົ້າຂອງ, ແຕ່ວ່າຈ້າງ ໃຫ້ພາກເອກະຊົນ ເປັນຜູ້ດຳເນີນງານ ແລະ ບຳລຸງຮັກສາ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຕາມເງື່ອນໄຂ ແລະ ມາດຕະຖານທີ່ພາກລັດກຳນົດ ໂດຍມີສັນຍາ;
2) ແຫຼ່ງທຶນໃນການຊຳລະຄ່າ ດຳເນີນງານ ແລະ ບຳລຸງຮັກສາ ແມ່ນນຳໃຊ້ງົບປະມານຂອງລັດ ທີ່ໄດ້ກຳນົດໄວ້ ໃນແຜນງົບປະມານຊຳລະໂຄງການ ຊຶ່ງອາດຊຳລະແບບມອບເໝົາ ຫຼື ເປັນງວດ ອີງຕາມຜົນຂອງການໃຫ້ການດຳເນີນງານຕົວຈິງຕາມສັນຍາ.

## 6.4 ການກະກຽມ ແລະ ຂັ້ນຕອນ ການພິຈາລະນາ ການລົງທຶນຮ່ວມ

### 6.4.1 ບົດສະເໜີເບື້ອງຕົ້ນ ຂອງໂຄງການລົງທຶນຮ່ວມ (Solicited Proposal)

ບົດສະເໜີເບື້ອງຕົ້ນ ຂອງໂຄງການລົງທຶນຮ່ວມ (Solicited Proposal) ແມ່ນ ເອກະສານສະເໜີແນວຄວາມຄິດເບື້ອງຕົ້ນຂອງຂະແໜງການ ທີ່ນອນໃນແຜນຍຸດທະສາດຂອງຂະແໜງການ ຕາມແຜນພັດທະນາເສດຖະ ກິດ-ສັງຄົມແຫ່ງຊາດ ທີ່ມີຈຸດປະສົງຢາກໃຫ້ພາກເອກະຊົນ ມາລົງທຶນຕາມຮູບການທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍການລົງທຶນຮ່ວມ. ເປັນຕົ້ນ ໂຄງການທີ່ນອນໃນແຜນຂອງຂະແໜງການພາກລັດ ທີ່ຕ້ອງການໃຫ້ພາກເອກະຊົນມາມີສ່ວນຮ່ວມໃນການພັດທະນາໂຄງການດັ່ງກ່າວ.

### 6.4.2 ບົດສະເໜີແນວຄວາມຄິດລິເລີ່ມ ຂອງໂຄງການລົງທຶນຮ່ວມ (Unsolicited Proposal)

ບົດສະເໜີແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ (Unsolicited Proposal: USP) ແມ່ນ ເອກະສານຂອງໂຄງການທີ່ລິເລີ່ມໃໝ່ ໂດຍຂະແໜງການ ຫຼື ພາກເອກະຊົນ ທີ່ສອດຄ່ອງກັບແຜນນະໂຍບາຍພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ, ເປັນໂຄງການທີ່ມີຄວາມສຳຄັນ, ເປັນແນວຄວາມຄິດໃໝ່, ມີການນຳໃຊ້ເຕັກໂນໂລຊີໃໝ່ ແລະ ນະວັດຕະກຳສູງ ທີ່ເປັນໂຄງການບໍ່ນອນໃນແຜນການລົງທຶນຂອງລັດ.

### 6.4.3 ເງື່ອນໄຂບົດສະເໜີເບື້ອງຕົ້ນ ແລະ ບົດສະເໜີແນວຄວາມຄິດລິເລີ່ມ ຂອງໂຄງການລົງທຶນຮ່ວມ

ບົດສະເໜີເບື້ອງຕົ້ນ ແລະ ບົດສະເໜີແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ຕ້ອງສອດຄ່ອງກັບນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານ ແລະ ແຜນຍຸດທະສາດຂອງຂະແໜງການ.

ສຳລັບ ບົດສະເໜີແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມຍັງຕ້ອງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ເປັນໂຄງການຕາມແນວຄວາມຄິດລິເລີ່ມໃໝ່ ຂອງ ຂະແໜງການ ຫຼື ພາກເອກະຊົນ;
2. ເປັນໂຄງການທີ່ມີຄວາມສຳຄັນ, ນຳໃຊ້ເຕັກໂນໂລຊີໃໝ່ ແລະ ນະວັດຕະກຳສູງ, ມີຄວາມກຸ້ມຄ່າ ໃນການລົງທຶນ;
3. ມີຜົນຕອບແທນສູງ ແລະ ກວ້າງຂວາງ ທາງດ້ານເສດຖະກິດ-ສັງຄົມ;
4. ມີຂໍ້ມູນລະອຽດ ແລະ ພຽງພໍ ເພື່ອໃຫ້ສາມາດປະເມີນ ຫຼື ສືບຕໍ່ສ້າງບົດວິພາກເສດຖະກິດ-ເຕັກນິກລະອຽດຂອງໂຄງການ;
5. ຖ້າເປັນການສະເໜີໂດຍພາກເອກະຊົນ, ພາກເອກະຊົນ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ໂດຍບໍ່ຮຽກຮ້ອງການສະໜັບສະໜູນ ດ້ານການເງິນ ຫຼື ດ້ານນະໂຍບາຍດ້ານ ພາສີ, ອາກອນ ໃນການກະກຽມ ແລະ ດຳເນີນໂຄງການ ລວມທັງຮັບຜິດຊອບຄວາມສ່ຽງທັງໝົດຂອງໂຄງການ.

### 6.4.4 ການສະເໜີ ແລະ ການພິຈາລະນາບົດສະເໜີເບື້ອງຕົ້ນ ໂຄງການລົງທຶນຮ່ວມ

ຂະແໜງການ ທີ່ມີຈຸດປະສົງພັດທະນາໂຄງການ ໃນຮູບແບບການລົງທຶນຮ່ວມ ຊຶ່ງນອນໃນແຜນພັດທະນາຂອງຂະແໜງການ ໃຫ້ຍື່ນບົດສະເໜີເບື້ອງຕົ້ນ ຕໍ່ຫ້ອງການລົງທຶນຮ່ວມ (PPP Office) ກົມສົ່ງເສີມການລົງທຶນ ກະຊວງ ຜທ ເພື່ອຄົ້ນຄວ້າ ແລະ ສະເໜີ ຄລທ.ສ ພາຍໃນກຳນົດເວລາ 20 ວັນ ສຳລັບການລົງທຶນໃນກິດຈະການ ທີ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໄດ້ກຳນົດໃຫ້ຂັ້ນສູນກາງຄຸ້ມຄອງ.

ສຳລັບຂະແໜງການຂັ້ນແຂວງ ທີ່ມີຈຸດປະສົງພັດທະນາໂຄງການລົງທຶນຮ່ວມ ໃຫ້ຍື່ນບົດສະເໜີເບື້ອງຕົ້ນຕໍ່ຂະແໜງການສາຍຕັ້ງຂອງຕົນ, ໂດຍຜ່ານຄະນະນຳຂັ້ນແຂວງ, ເພື່ອເອົາເຂົ້າໃນແຜນ ແລະ ສະເໜີ ລັດຖະບານພິຈາລະນາ ໂດຍຜ່ານຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ.

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຄົ້ນຄວ້າ ແລະ ພິຈາລະນາບົດສະເໜີເບື້ອງຕົ້ນໂຄງການລົງທຶນຮ່ວມ ຖ້າວ່າຮັບຮອງບົດສະເໜີດັ່ງກ່າວ ໃຫ້ຫ້ອງການລົງທຶນຮ່ວມ ແຈ້ງເປັນລາຍລັກອັກສອນ ໃຫ້ຂະແໜງການ ພາຍໃນກຳນົດເວລາ 5 ວັນ ນັບແຕ່ວັນມີມະຕິກອງປະຊຸມ ຄລທ.ສ ເພື່ອກະກຽມການສ້າງຮ່າງກອບໜ້າວຽກ ສຳລັບການສ້າງບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບທາງດ້ານສິ່ງແວດ ລ້ອມ ສັງຄົມ ແລະ ທຳມະຊາດ ແບບລະອຽດຂອງໂຄງການ ເພື່ອປະມູນເອົາບໍລິສັດ ມາສຶກສາສຳຫຼວດໃນຂັ້ນຕໍ່ໄປ. ໃນກໍລະນີບໍ່ເຫັນດີ ກໍໃຫ້ແຈ້ງໃຫ້ຂະແໜງ ການທີ່ກ່ຽວຂ້ອງ ພ້ອມດ້ວຍເຫດຜົນ.

ຂັ້ນຕອນການພິຈາລະນາບົດສະເໜີເບື້ອງຕົ້ນ ໂຄງການລົງທຶນຮ່ວມ (Solicited Proposal)




* ຂະແໜງການສ້າງກອບໜ້າວຽກ (TOR) ເພື່ອສ້າງບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມແບບລະອຽດຂອງໂຄງການ ເພື່ອປະມູນເອົາບໍລິສັດ ສຶກສາ-ສຳຫຼວດ.

### 6.4.5 ການສະເໜີ ແລະ ການພິຈາລະນາ ແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ

ຂະແໜງການ ຫຼື ພາກເອກະຊົນ ທີ່ມີຈຸດປະສົງພັດທະນາໂຄງການລົງທຶນຮ່ວມ ຊຶ່ງເປັນໂຄງການທີ່ມີແນວຄວາມຄິດລິເລີ່ມ ສາມາດຍື່ນບົດສະເໜີແນວຄວາມຄິດລິເລີ່ມ ພ້ອມດ້ວຍບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ເບື້ອງຕົ້ນຂອງໂຄງການ ຕໍ່ຫ້ອງການລົງທຶນຮ່ວມຂັ້ນສູນກາງ ເພື່ອ

ສະເໜີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມຂັ້ນສູນກາງ ພາຍໃນກຳນົດເວລາ 45 ວັນລັດຖະການ ພາຍຫຼັງທີ່ມີຄຳເຫັນຄົບຖ້ວນຈາກຂະແໜງການກ່ຽວຂ້ອງ ຂັ້ນສູນກາງ ແລະ ຂັ້ນແຂວງ.

ໃນກໍລະນີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມຂັ້ນສູນກາງ ຫາກເຫັນວ່າບົດສະເໜີແນວຄວາມຄິດລິເລີ່ມ, ບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ເບື້ອງຕົ້ນ ມີເນື້ອໃນຖືກຕ້ອງ ແລະ ຄົບຖ້ວນແລ້ວ ກະຊວງແຜນການ ແລະ ການລົງທຶນ ນຳສະເໜີລັດຖະບານພິຈາລະນາ. ພາຍຫຼັງລັດຖະບານພິຈາລະນາຮັບຮອງແລ້ວ ໃຫ້ຫ້ອງການລົງທຶນຮ່ວມ ແຈ້ງໃຫ້ພາກເອກະຊົນທີ່ກ່ຽວຂ້ອງເພື່ອເຊັນບົດບັນທຶກຄວາມເຂົ້າໃຈ ແລະ ສ້າງບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແບບລະອຽດ ແລະ ສຳລັບຂະແໜງການ ແມ່ນໃຫ້ກະກຽມການສ້າງຮ່າງກອບໜ້າວຽກ ສຳລັບ ການສ້າງບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແບບລະອຽດຂອງໂຄງການ ເພື່ອປະມູນເອົາບໍລິສັດມາສຶກສາສຳຫຼວດໃນຂັ້ນຕໍ່ໄປ.ໃນກໍລະນີບໍ່ເຫັນດີກໍໃຫ້ແຈ້ງໃຫ້ຂະແໜງການທີ່ກ່ຽວຂ້ອງພ້ອມດ້ວຍເຫດຜົນ.

ພາກເອກະຊົນ ທີ່ໄດ້ຍື່ນບົດສະເໜີແນວຄວາມຄິດລິເລີ່ມນັ້ນ ຫຼື ບໍລິສັດທີ່ປຶກສາທີ່ໄດ້ຮັບການຄັດເລືອກໃຫ້ເປັນຜູ້ດຳເນີນການສຶກສາຂອງຂະແໜງການ ຈະບໍ່ໄດ້ຮັບສິດໃນການເປັນຜູ້ພັດທະນາໂຄງການໂດຍກົງ ຊຶ່ງຕ້ອງຜ່ານການປະມູນ. ໃນກໍລະນີຜູ້ກ່ຽວ ຫາກບໍ່ຊະນະການປະມູນ ຈະໄດ້ຮັບການທົດແທນຄືນຄ່າໃຊ້ຈ່າຍໃນການກະກຽມບົດສະເໜີແນວຄວາມຄິດລິເລີ່ມຈາກຜູ້ຊະນະການປະມູນ ໂດຍຄ່າໃຊ້ຈ່າຍດັ່ງກ່າວ ຕ້ອງຖືກຄິດ ໄລ່ເປັນຕົ້ນທຶນຂອງໂຄງການ ແລະ ກຳນົດແຈ້ງໃນເອກະສານປະມູນ.

ໃນກໍລະນີ ຜູ້ສະເໜີແນວຄວາມຄິດລິເລີ່ມ ຫາກສະເໜີລາຄາປະມູນສູງກວ່າ ຈະໄດ້ຮັບນະໂຍບາຍ ດັ່ງນີ້:

- ຮັບສິດ ໃນການເຂົ້າຮ່ວມປະມູນຮອບສຸດທ້າຍ (Automatic Shortlisting);
- ຮັບໂບນັດ (Bonus) ສູງສຸດບໍ່ເກີນ 5% ຂອງລາຄາປະມູນ.

ຂັ້ນຕອນການພິຈາລະນາບົດສະເໜີແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ (Unsolicited Proposal)



### 6.4.6 ເອກະສານປະກອບຄຳຮ້ອງຂໍລົງທຶນການລົງທຶນຮ່ວມ PPP

1. ຄຳຮ້ອງຂໍລົງທຶນ ຕາມແບບພິມ;
2. ບົດສະເໜີແນວຄວາມຄິດລິເລີ່ມ ຂອງໂຄງການລົງທຶນຮ່ວມ (Unsolicited Proposal) ກັບແນວແນວຄວາມຄິດໃນການພັດທະນາໂຄງການ ຢັ້ງຢືນໂດຍປະທານ ຫຼື ອຳນວຍການໃຫຍ່ ຂອງບໍລິສັດ (ຫຼື ຜູ້ຖືກມອບສິດ);
3. ປະຫວັດ ແລະ ປະສົບການຂອງບໍລິສັດ, ໃບອະນຸຍາດ ຫຼື ໃບທະບຽນທຸລະກິດ ຂອງບໍລິສັດ;
4. ສັນຍາຮ່ວມທຸລະກິດ (ໃນກໍລະນີ ມີສອງບໍລິສັດຂຶ້ນໄປ);
5. ປະຫວັດ ແລະ ອັດສຳເນົາໜັງສືເດີນທາງຂອງຜູ້ລົງທຶນ;
6. ໃບມອບສິດ ໃຫ້ຜູ້ຕາງໜ້າບັນດາຂາຮຸ້ນ ຫຼື ບໍລິສັດ, ໃນກໍລະນີ ບຸກຄົນດັ່ງກ່າວບໍ່ຢູ່ໃນຕຳແໜ່ງສູງສຸດຂອງບໍລິສັດ;
7. ແຜນທີ່ທີ່ຕັ້ງຂອງໂຄງການ (ຖ້າມີ);
8. ເອກະສານກ່ຽວກັບຂໍ້ມູນທາງດ້ານເຕັກນິກຂອງໂຄງການ (ຖ້າມີ);
9. ຈົດໝາຍ ສະໜັບສະໜູນຂອງສະຖາບັນການເງິນ ຫຼື ທະນະຄານ (ຖ້າມີ);
10. ເອກະສານກ່ຽວຂ້ອງອື່ນໆ.

# ພາກທີ

# 07

ຫ້ອງການຜູ້ຕາງໜ້າ

## 7.1 ຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດ

ຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດ ແມ່ນ ຫ້ອງການປະສານງານຕາງໜ້າໃຫ້ບໍລິສັດແມ່ ໃນການສຶກສາຊ່ອງທາງການລົງທຶນ ແລະ ພົວພັນກັບພາກສ່ວນຕ່າງໆ ທັງພາກລັດ ແລະ ເອກະຊົນ ຢູ່ ສປປ ລາວ.

## 7.2 ການສະເໜີຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ

ນິຕິບຸກຄົນຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ ຕ້ອງສະເໜີຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອພິຈາລະນາ ແລະ ອອກໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ພາຍໃນເວລາ 15 ວັນ ນັບແຕ່ວັນໄດ້ຮັບຄຳສະເໜີຂອງບໍລິສັດເປັນຕົ້ນໄປ.

ໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ແມ່ນ ເອກະສານຮັບຮູ້ສິດທີ່ຖືກຕ້ອງຕາມກົດໝາຍ ສາມາດເຄື່ອນໄຫວ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເປັນຕົ້ນ ການເກັບກຳຂໍ້ມູນດ້ານການລົງທຶນໃຫ້ແກ່ບໍລິສັດແມ່ ເພື່ອເປັນພື້ນຖານໃນການຕັດສິນໃຈລົງທຶນ ຢູ່ ສປປ ລາວ ແຕ່ຫາກບໍ່ມີສິດເຄື່ອນໄຫວດຳເນີນທຸລະກິດ.

## 7.3 ເງື່ອນໄຂຂອງການສ້າງຕັ້ງຫ້ອງການຜູ້ຕາງຫນ້າ

- ຕ້ອງເປັນບໍລິສັດນິຕິບຸກຄົນຢູ່ຕ່າງປະເທດ.
- ຈຸດປະສົງຂອງການສ້າງຕັ້ງແມ່ນເພື່ອສຶກສາ ແລະ ເກັບກຳຂໍ້ມູນ ເຖິງຄວາມເປັນໄປໄດ້ໃນການລົງທຶນໃນ ສປປ ລາວ.
- ກິດຈະການຂອງການຂໍສ້າງຕັ້ງຫ້ອງການຜູ້ຕາງຫນ້າ ໃນ ສປປ ລາວ ຕ້ອງແມ່ນບົນພື້ນຖານກິດຈະການຂອງບໍລິສັດແມ່ (ເພື່ອສຶກສາ ແລະ ເກັບກຳຂໍ້ມູນຄ້າຍຄືກັບກິດຈະການຂອງບໍລິສັດແມ່ທີ່ດຳເນີນຢູ່).

## 7.4 ເອກະສານປະກອບໃນການຍື່ນຄຳຮ້ອງຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ

1. ຄຳຮ້ອງຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ.
2. ກົດລະບຽບຂອງຫ້ອງການຜູ້ຕາງໜ້າທີ່ສະເຫນີຂໍສ້າງຕັ້ງ.
3. ໃບແຕ່ງຕັ້ງຜູ້ຕາງໜ້າ ແລະ/ຫຼື ໃບມອບສິດຈາກບໍລິສັດແມ່ ໃນການຂໍສ້າງຕັ້ງຫ້ອງການຜູ້ຕາງຫນ້າ ຢູ່ ສປປ ລາວ ພ້ອມທັງສຳເນົາໜັງສືຜ່ານແດນ ແລະ ຊີວະປະຫວັດຫຍໍ້ຂອງຜູ້ທີ່ຖືກແຕ່ງຕັ້ງ.
4. ສຳເນົາໃບທະບຽນຂອງບໍລິສັດແມ່ ທີ່ມີການຢັ້ງຢືນຄວາມຖືກຕ້ອງ ແລະ ມີຜົນບັງຄັບໃຊ້ໄດ້.
5. ສຳເນົາກົດລະບຽບຂອງບໍລິສັດແມ່ (ຖ້າມີ);
6. ເອກະສານການລາຍງານທາງດ້ານການເງິນຂອງບໍລິສັດແມ່.

   - ເອກະສານປະກອບທັງໝົດ 4 ຊຸດ.

# ພາກທີ

# 08

## ການປ່ຽນແປງທາງດ້ານນິຕິກຳ ແລະ ຄ່າບໍລິການ

## 8.1 ການປ່ຽນແປງທາງດ້ານນິຕິກຳຕ່າງໆ

ການຂໍປ່ຽນແປງນິຕິກຳຕ່າງໆ ທີ່ຍື່ນຄຳຮ້ອງກັບຂະແໜງແຜນການ ແລະ ການລົງທຶນ ຂັ້ນສູນກາງ ແລະ ຂັ້ນແຂວງ ບ່ອນທີ່ຕົນໄດ້ຮັບໃບອະນຸຍາດລົງທຶນ ຕິດພັນກັບ ກິດຈະການໃນບັນຊີຄວບຄຸມ ຫຼື ກິດຈະການສຳປະທານໂຄງການຂອງລັດຖະບານ ເຊັ່ນ: ກະສິກຳ, ບໍ່ແຮ່, ໄຟຟ້າ ແລະ ອື່ນໆ ທີ່ໄດ້ລະບຸໄວ້ຂ້າງເທິງນັ້ນ. ສຳລັບກິດຈະການລົງທຶນທົ່ວໄປ ທີ່ບໍ່ນອນໃນກິດຈະການບັນຊີຄວບຄຸມ ແມ່ນໃຫ້ຍື່ນຄຳຮ້ອງກັບຂະແໜງອຸດສາຫະກຳ ແລະ ການຄ້າ ບ່ອນທີ່ຕົນໄດ້ຮັບໃບທະບຽນວິສາຫະກິດ.

ຫ້ອງການບໍລິການ ການລົງທຶນປະຕູດຽວສາມາດອະນຸມັດການປ່ຽນແປງທາງດ້ານນິຕິກາ ຕໍ່ໄປນີ້:

### 8.1.1 ເອກະສານປະກອບການເພີ່ມທຶນທັງໝົດ ຫຼື ທຶນຈົດທະບຽນ

1. ໃບສະເໜີຂໍເພີ່ມທຶນທັງໝົດ ຫຼື ທຶນຈົດທະບຽນ;
2. ບົດບັນທຶກກອງປະຊຸມສະພາບໍລິຫານ ຫຼື ຜູ້ຖືຮຸ້ນຂອງບໍລິສັດ;
3. ໃບຢັ້ງຢືນການນຳທຶນເຂົ້າຈາກທະນາຄານແຫ່ງ ສປປ ລາວ ສຳນັກງານໃຫຍ່ ຫຼື ສາຂາ ຫຼື ທະນາຄານທຸລະກິດຂອງລັດ ທີ່ໄດ້ຮັບມອບຫມາຍຈາກທະນາຄານແຫ່ງ ສປປ ລາວ;
4. ສຳເນົາໃບອະນຸຍາດລົງທຶນ;
5. ສຳເນົາກົດລະບຽບຂອງບໍລິສັດ ແລະ ເອກະສານອະນຸຍາດຕ່າງໆ.

### 8.1.2 ເອກະສານປະກອບຂໍເພີ່ມກິດຈະການບໍລິສັດ

1. ໃບສະເໜີຂໍເພີ່ມກິດຈະການຂອງບໍລິສັດ;
2. ບົດບັນທຶກກອງປະຊຸມສະພາບໍລິຫານ ຫຼື ຜູ້ຖືຮຸ້ນຂອງບໍລິສັດ;
3. ບົດວິພາກເສດຖະກິດ-ເຕັກນິກ ສະເພາະກິດຈະການທີ່ຕ້ອງການເພີ່ມ;
4. ບົດລາຍງານການເຄືອນໄຫວຂອງບໍລິສັດໃນໄລຍະຜ່ານມາໂດຍສະເພາະພັນທະພາສີ, ອາກອນ ແລະ ຄ່າທຳນຽມອື່ນໆ ກ່ຽວກັບການ ດຳເນີນທຸລະກິດຂອງຕົນຢ່າງຄົບຖ້ວນ ແລະ ທັນເວລາ ແລະ ບົດລາຍງານການເຄື່ອນໄຫວຕໍ່ໜ້າຂອງບໍລິສັດ;
5. ສຳເນົາໃບອະນຸຍາດລົງທຶນ;
6. ສຳເນົາກົດລະບຽບຂອງບໍລິສັດ ແລະ ເອກະສານອະນຸຍາດຕ່າງໆ;

### 8.1.3 ເອກະສານປະກອບຂໍປ່ຽນແປງຂາຮຸ້ນບໍລິສັດ

1. ໃບສະເຫນີຂໍປ່ຽນແປງຂາຮຸ້ນຂອງບໍລິສັດ;
2. ບົດບັນທຶກກອງປະຊຸມສະພາບໍລິຫານ ຫຼື ຂາຮຸ້ນຂອງບໍລິສັດ;
3. ຫນັງສືມອບໂອນຮຸ້ນ ຫຼື ສັນຍາຊື້-ຂາຍ, ຮຸ້ນທີ່ໄດ້ ເຊັນກັນລະຫວ່າງສອງຝ່າຍ ເຊິ່ງຕ້ອງໄດ້ຂຶ້ນທະບຽນສານຈາກສຳນັກງານທະບຽນສານເສຍກ່ອນ;
4. ສຳເນົາຫນັງສືເດີນທາງ "Passport" ແລະ ຊີວະປະຫວັດຫຍໍ້ຂອງຜູ້ຖືຮຸ້ນຄົນໃຫມ່ (ສຳລັບຄົນຕ່າງປະເທດ), ຖ້າວ່າຜູ້ຖືຮຸ້ນຄົນໃຫມ່ເປັນຄົນລາວຕ້ອງອັດສຳເນົາບັດປະຈຳຕົວ, ສຳເນົາສຳມະໂນຄົວ ແລະ ໃບແຈ້ງໂທດ.
5. ສຳເນົາໃບອະນຸຍາດລົງທຶນ;
6. ສຳເນົາກົດລະບຽບຂອງບໍລິສັດ ແລະ ເອກະສານອະນຸຍາດຕ່າງໆ.

### 8.1.4 ເອກະສານປະກອບຂໍດັດແກ້ໃບອະນຸຍາດລົງທຶນ

1. ໃບສະເຫນີຂໍດັດແກ້ໃບອະນຸຍາດລົງທຶນ;
2. ບົດບັນທຶກກອງປະຊຸມສະພາບໍລິຫານ ຫຼື ຂາຮຸ້ນຂອງບໍລິສັດ.;
3. ເອກະສານທີ່ອ້າງອີງເຫດຜົນໃນການດັດແກ້ໃບອະນຸຍາດລົງທຶນ;
4. ໃບອະນຸຍາດລົງທຶນສະບັບຕົ້ນ;
5. ສໍາເນົາກົດລະບຽບຂອງບໍລິສັດ ແລະ ເອກະສານອະນຸຍາດຕ່າງໆ.

### 8.1.5 ເອກະສານປະກອບຄໍາຮ້ອງຂໍຕໍ່ໃບອະນຸຍາດລົງທຶນ

1. ໃບສະເຫນີຂໍຕໍ່ໃບອະນຸຍາດລົງທຶນ;
2. ບົດບັນທຶກກອງປະຊຸມສະພາບໍລິຫານ ຫຼື ຜູ້ຖືຂາຮຸ້ນຂອງບໍລິສັດ;
3. ບົດລາຍງານການເຄື່ອນໄຫວຂອງບໍລິສັດໃນໄລຍະຜ່ານມາໂດຍສະເພາະພັນທະພາສີ, ອາກອນ ແລະ ຄ່າທໍານຽມອື່ນໆ ກ່ຽວກັບການດໍາເນີນທຸລະກິດຂອງຕົນຢ່າງຄົບຖ້ວນ ແລະ ທັນເວລາ ແລະ ແຜນການເຄື່ອນໄຫວຕໍ່ຫນ້າຂອງບໍລິສັດ;
4. ໃບອະນຸຍາດລົງທຶນ;
5. ສໍາເນົາກົດລະບຽບຂອງບໍລິສັດ ແລະ ເອກະສານອະນຸຍາດຕ່າງໆ.

### 8.1.6 ເອກະສານປະກອບຄໍາຮ້ອງຂໍຕໍ່ອາຍຸຫ້ອງການຜູ້ຕາງຫນ້າ

1. ຄໍາຮ້ອງຂໍຕໍ່ໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງຫນ້າ;
2. ຫນັງສືສະເຫນີຂໍຕໍ່ຫ້ອງການຜູ້ຕາງຫນ້າຈາກບໍລິສັດແມ່;
3. ບົດລາຍງານການເຄື່ອນໄຫວຂອງຫ້ອງການຜູ້ຕ່າງຫນ້າໃນໄລຍະຜ່ານມາໂດຍສະເພາະພັນທະພາສີ, ອາກອນ ແລະ ຄ່າທໍານຽມອື່ນໆ ກ່ຽວກັບການດໍາເນີນທຸລະກິດຂອງຕົນຢ່າງຄົບຖ້ວນ ແລະ ທັນເວລາ ແລະ ບົດລາຍງານການເຄື່ອນໄຫວຕໍ່ຫນ້າຂອງຫ້ອງການຜູ້ຕ່າງຫນ້າ;
4. ໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງຫນ້າ ສະບັບຕົ້ນ;
5. ໃບຢັ້ງຢືນການຊໍາລະອາກອນເງິນເດືອນ;
6. ສໍາເນົາກົດລະບຽບຂອງຫ້ອງການຜູ້ຕາງຫນ້າທີ່ໄດ້ຮັບຮອງແລ້ວ.

### 8.1.7 ເອກະສານປະກອບຂໍໂຈະກິດຈະການຊົ່ວຄາວ ຫຼື ຍົກເລີກຖາວອນຂອງບໍລິສັດ

1. ໃບສະເຫນີຂໍໂຈະ ຫຼື ຍົກເລີກກິດຈະການຂອງບໍລິສັດ;
2. ບົດບັນທຶກກອງປະຊຸມສະພາບໍລິຫານ ຫລື ຂາຮຸ້ນຂອງບໍລິສັດ;
3. ສໍາເນົາເສຍຄ່າເຊົ່າເຮືອນ ແລະ ອາກອນເງິນເດືອນພະນັກງານ;
4. ສໍາເນົາເສຍຄ່ານໍ້າປະປາ ແລະ ໄຟຟ້າ;
5. ໃບອະນຸຍາດລົງທຶນ ສະບັບຕົ້ນ;
6. ສໍາເນົາກົດລະບຽບຂອງບໍລິສັດ ແລະ ເອກະສານອະນຸຍາດຕ່າງໆ.
7. ສໍາເນົາກົດລະບຽບຂອງບໍລິສັດ ແລະ ເອກະສານອະນຸຍາດຕ່າງໆ.
8. ກາປະທັບຂອງບໍລິສັດ ແລະ ກາປະທັບຊື່;
9. ໃບຢັ້ງຢືນດ້ານສິ່ງແວດລ້ອມ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ.

#### 8.1.8 ເອກະສານປະກອບຂໍປິດຫ້ອງການຜູ້ຕາງຫນ້າ ຫຼື ບໍລິສັດ

1. ໃບສະເໜີຂໍປິດຫ້ອງການຜູ້ຕາງຫນ້າ ຫຼື ບໍລິສັດ;
2. ບົດບັນທຶກກອງປະຊຸມສະພາບໍລິຫານ ຫລື ຂາຮຸ້ນ ຂອງບໍລິສັດແມ່ (ຫ້ອງການຜູ້ຕາງຫນ້າ) ຫລື ບໍລິສັດ;
3. ສຳເນົາເສຍຄ່າເຊົ່າເຮືອນ ແລະ ອາກອນເງິນເດືອນພະນັກງານ;
4. ສຳເນົາເສຍຄ່ານ້ຳປະປາ ແລະ ໄຟຟ້າ;
5. ໃບທະບຽນຫ້ອງການຜູ້ຕາງຫນ້າ ຫຼື ໃບອະນຸຍາດລົງທຶນ ສະບັບຕົ້ນ;
6. ສຳເນົາກົດລະບຽບຂອງບໍລິສັດ ແລະ ເອກະສານອະນຸຍາດຕ່າງໆ;
7. ກາປະທັບຂອງບໍລິສັດ ແລະ ກາປະທັບຊື່.

#### 8.1.9 ເອກະສານປະກອບຂໍປ່ຽນແປງຜູ້ອຳນວຍການບໍລິສັດ ຫຼື ຫ້ອງການຜູ້ຕາງຫນ້າ

1. ໃບສະເຫນີຂໍປ່ຽນແປງຜູ້ອຳນວຍການຄົນໃຫມ່;
2. ບົດບັນທຶກກອງປະຊຸມສະພາບໍລິຫານ ຫລື ຂາຮຸ້ນບໍລິສັດ ພ້ອມໜັງສືແຕ່ງຕັ້ງ;
3. ໃບມອບສິດຜູ້ອຳນວຍການຄົນເກົ່າ ແລະ ຜູ້ທີ່ຖືກແຕ່ງຕັ້ງເປັນຜູ້ອຳນວຍການຄົນໃຫມ່;
4. ສຳເນົາຫນັງສືເດີນທາງ (Passport) ແລະ ຊີວະປະຫວັດຫຍໍ້ຂອງຜູ້ທີ່ຖືກແຕ່ງຕັ້ງເປັນຜູ້ອຳນວຍການຄົນໃຫມ່ (ສຳລັບຄົນຕ່າງປະເທດ), ຖ້າວ່າເປັນຜູ້ຖືກແຕ່ງຕັ້ງເປັນຜູ້ອຳນວຍການເປັນຄົນລາວ ຕ້ອງສຳເນົາບັດປະຈຳຕົວ, ສຳມະໂນຄົວ ແລະ ໃບແຈ້ງໂທດ;
5. ສຳເນົາໃບອະນຸຍາດລົງທຶນ ຫຼື ໃບທະບຽນຫ້ອງການຜູ້ຕາງຫນ້າ;
6. ສຳເນົາກົດລະບຽບຂອງບໍລິສັດ ແລະ ເອກະສານອະນຸຍາດຕ່າງໆ.

#### 8.1.10 ເອກະສານປະກອບຂໍປ່ຽນສະຖານທີ່ຕັ້ງບໍລິສັດ ຫຼື ຫ້ອງການຜູ້ຕາງຫນ້າ

1. ໃບສະເໜີຂໍປ່ຽນສະຖານທີ່ຕັ້ງບໍລິສັດ ຫຼື ຫ້ອງການຜູ້ຕາງຫນ້າ.
2. ບົດບັນທຶກກອງປະຊຸມສະພາບໍລິຫານ ຫຼື ຜູ້ຖືຂາຮຸ້ນບໍລິສັດ.
3. ສຳເນົາສັນຍາເຊົ່າເຮືອນໃນເມື່ອກ່ອນ.
4. ສຳເນົາສັນຍາເຊົ່າເຮືອນໃນປັດຈຸບັນ.
5. ສຳເນົາຄ່ານ້ຳປະປາ, ຄ່າໄຟຟ້າໃນເມື່ອກ່ອນ (ໃບຮັບເງິນ).
6. ສຳເນົາໃບອະນຸຍາດລົງທຶນ ຫຼື ໃບທະບຽນຫ້ອງການຜູ້ຕາງຫນ້າ;
7. ສຳເນົາກົດລະບຽບຂອງບໍລິສັດ ແລະ ເອກະສານອະນຸຍາດຕ່າງໆ.
8. ໜັງສືຮັບຮູ້ຍົກຍ້າຍທີ່ຕັ້ງສຳນັກງານໃໝ່.

## 8.2 ຄ່າແບບຟອມຄຳຮ້ອງ ແລະ ຄ່າບໍລິການ:

| | |
|---|---|
| - ແບບຟອມຄຳຮ້ອງຂໍລົງທຶນ+ແບບຟອມກົດລະບຽບ 1 ຊຸດ | 50.000 ກີບ; |
| - ໃບທະບຽນສຳປະທານ | 70.000 ກີບ; |
| - ໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ | 70.000 ກີບ; |
| - ຮັບຮອງກົດລະບຽບ | 30.000 ກີບ; |
| - ດັດແກ່ໃບອະນຸຍາດສຳປະທານ | 30.000 ກີບ; |
| - ອອກໃບຢັ້ງຢືນໃນການປ່ຽນແປງທາງດ້ານນິຕິກຳຕ່າງໆ ເຊັ່ນ: ຂໍເພີ່ມກິດຈະການ,ດັດແກ້ຂາຮຸ້ນ ແລະ ອື່ນໆ | 30.000 ກີບ; |
| - ອອກສັນຍາໃໝ່ | 500.000 ກີບ; |

- ຄ່າທຳນຽມ ແລະ ຄ່າບໍລິການ ແມ່ນປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 003/ປຕທ, ລົງວັນທີ 26/12/2012.

## ເອກະສານຊ້ອນທ້າຍ 01

ບັນຊີກິດຈະການສົ່ງເສີມການລົງທຶນ

ເງື່ອນໄຂລວມ (Horizontal Requirements_HR) ໃນການໃຫ້ນະໂຍບາຍສົ່ງເສີມການລົງທຶນ:

ວິສາຫະກິດ ທີ່ລົງທຶນຢູ່ ສປປ ລາວ ທີ່ມີຈຸດປະສົງສະເໜີຂໍນະໂຍບາຍດ້ານອາກອນກໍາໄລ ແລະ ດ້ານຄ່າເຊົ່າ ຫຼື ຄ່າສໍາປະທານທີ່ດິນຂອງລັດ ຕ້ອງມີເງື່ອນໄຂ ດັ່ງນີ້:

1) ວິສາຫະກິດ ທີ່ລົງທຶນໃນກິດຈະການສົ່ງເສີມການລົງທຶນ ຕາມມາດຕາ 9 ຂອງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ຊຶ່ງມີລາຍລະອຽດກໍານົດໄວ້ໃນຕາຕະລາງລຸ່ມນີ້:
2) ການລົງທຶນຢ່າງຕໍ່າ 1,2 ຕື້ ກີບ ຫຼື ມີການນໍາໃຊ້ນັກວິຊາການລາວ ແຕ່ 30 ຄົນ ຫຼື ມີການນໍາໃຊ້ແຮງງານລາວ ທີ່ມີສັນຍາແຮງງານ ຢ່າງຕໍ່າ 1 ປີ ແຕ່ 50 ຄົນຂຶ້ນໄປ;
3) ຕ້ອງຖອກທຶນຈົດທະບຽນ ໃຫ້ຄົບຖ້ວນ ຕາມທີ່ໄດ້ກໍານົດໃນ ມາດຕາ 53 ແລະ 54 ຂອງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ;
4) ດໍາເນີນທຸລະກິດປົກກະຕິ ແລະ ປະຕິບັດພັນທະພາສີ, ອາກອນ ແລະ ພັນທະອື່ນໆ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຢ່າງຄົບຖ້ວນ;
5) ປະຕິບັດພັນທະດ້ານສິ່ງແວດລ້ອມຢ່າງເຄັ່ງຄັດ ແລະ ຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການ.

ນອກຈາກ ເງື່ອນໄຂລວມ (Horizontal Requirements_HR) ຂ້າງເທິງແລ້ວ, ບາງກິດຈະການຕ້ອງມີເງື່ອນໄຂສະເພາະ (Specific Requirements_SR), ດັ່ງລຸ່ມນີ້:

| ລ/ດ | ລະຫັດ LSIC | ປະເພດທຸລະກິດ (Sectors) | ເງື່ອນໄຂສະເພາະ (Specific Requirements_SR) |
|---|---|---|---|
| I. ການນໍາໃຊ້ເຕັກໂນໂລຊີສູງ ແລະ ທັນສະໄໝ, ການຄົ້ນຄວ້າວິໄຈວິທະຍາສາດ, ການຄົ້ນຄວ້າ ແລະ ການພັດທະນາ, ການນໍາໃຊ້ນະວັດຕະກໍາ, ເປັນມິດກັບສິ່ງແວດລ້ອມ, ປະຢັດຊັບພະຍາກອນທໍາມະຊາດ ແລະ ພະລັງງານ. | | | |
| 1 | 2431 | ການຫຼອມເຫຼັກ ແລະ ເຫຼັກກ້າ | 1) ຕ້ອງນໍາໃຊ້ເຕັກໂນໂລຊີ ທັນສະໄໝ (ເຄື່ອງຈັກໃໝ່ທີ່ມີອາຍຸບໍ່ເກີນ 5 ປີ ນັບແຕ່ມື້ຜະລິດ);<br>2) ຕ້ອງໄດ້ມາດຕະຖານ ISO 14000 (ພາຍໃນ 4 ປີ ນັບແຕ່ມື້ໄດ້ຮັບໃບຢັ້ງຢືນດໍາເນີນກິດຈະການໂຮງງານ);<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 2 | 2432 | ການຫຼອມໂລຫະທີ່ບໍ່ແມ່ນເຫຼັກ | 1) ຕ້ອງນໍາໃຊ້ເຕັກໂນໂລຊີ ທັນສະໄໝ (ເຄື່ອງຈັກໃໝ່ທີ່ມີອາຍຸບໍ່ເກີນ 5 ປີ ນັບແຕ່ມື້ຜະລິດ);<br>2) ຕ້ອງໄດ້ມາດຕະຖານ ISO 14000 (ພາຍໃນ 4 ປີ ນັບແຕ່ມື້ໄດ້ຮັບໃບຢັ້ງຢືນດໍາເນີນກິດຈະການໂຮງງານ);<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 3 | 2610 | ການຜະລິດສ່ວນປະກອບຂອງເຄື່ອງເອເລັກໂຕຼນິກ | ອີງໃສ່ເງື່ອນໄຂລວມ (HR). |
| 4 | 2620 | ການຜະລິດເຄື່ອງຄອມພິວເຕີ ແລະ ເຄື່ອງປະກອບສ່ວນນອກ | ອີງໃສ່ເງື່ອນໄຂລວມ (HR). |
| 5 | 2631 | ການຜະລິດອຸປະກອນດ້ານ | ອີງໃສ່ເງື່ອນໄຂລວມ (HR). |

| | | | |
|---|---|---|---|
| | | ການສື່ສານ | |
| 6 | 2640 | ການຜະລິດເຄື່ອງໃຊ້ເອເລັກໂຕຼນິກ | ອີງໃສ່ເງື່ອນໄຂລວມ (HR). |
| 7 | 2660 | ການຜະລິດເຄື່ອງສາຍແສງ, ເຄື່ອງກວດຄ້ວຍໄຟ ແລະ ເຄື່ອງສ່ອງໄຟຟ້າ | ອີງໃສ່ເງື່ອນໄຂລວມ (HR). |
| 8 | 2670 | ການຜະລິດວັດແທກສາຍຕາ ແລະ ເຄື່ອງປະກອບ | ອີງໃສ່ເງື່ອນໄຂລວມ (HR). |
| 9 | 2710 | ການຜະລິດໂມເຕີໄຟຟ້າລົດຍົນ, ເຄື່ອງປັ່ນໄຟ, ໝໍ້ແບ່ງໄຟ, ເຄື່ອງ ສົ່ງໄຟຟ້າ ແລະ ເຄື່ອງຄວບຄຸມໄຟຟ້າ | ອີງໃສ່ເງື່ອນໄຂລວມ (HR). |
| 10 | 2720 | ການຜະລິດໝໍ້ໄຟ ແລະ ໝໍ້ເກັບໄຟຟ້າ | ອີງໃສ່ເງື່ອນໄຂລວມ (HR). |
| 11 | 2731 | ການຜະລິດສາຍໃຍແກ້ວ | ອີງໃສ່ເງື່ອນໄຂລວມ (HR). |
| 12 | 2732 | ການຜະລິດເຄື່ອງເອເລັກໂຕຼນິກ ອື່ນໆ, ສາຍໄຟຟ້າ ແລະ ສາຍ ສົ່ງສັນຍານ | ອີງໃສ່ເງື່ອນໄຂລວມ (HR). |
| 13 | 2733 | ການຜະລິດອຸປະກອນສາຍສົ່ງ | ອີງໃສ່ເງື່ອນໄຂລວມ (HR). |
| 14 | 2740 | ການຜະລິດອຸປະກອນເຄື່ອງໃຕ້ໄຟຟ້າສຳຫຼັບໃຫ້ແສງສະຫວ່າງ | ອີງໃສ່ເງື່ອນໄຂລວມ (HR). |
| 15 | 2750 | ການຜະລິດເຄື່ອງໃຊ້ໄຟຟ້າພາຍໃນອາຄານ | ອີງໃສ່ເງື່ອນໄຂລວມ (HR). |
| 16 | 2811 | ການຜະລິດຫົວຈັກ ແລະ ກົງຫັນປັ່ນ, ຍົກເວັ້ນ ເຄື່ອງເຮືອບິນ, ລົດຍົນ ແລະ ລົດຈັກ | 1) ຕ້ອງນໍາໃຊ້ເຕັກໂນໂລຊີທັນສະໄໝແບບອັດຕະໂນມັດ ຫຼື ເຄິ່ງອັດຕະໂນມັດ (ນໍາໃຊ້ແຮງງານຄົນຊ່ວຍ ຈໍານວນໜຶ່ງ) ແລະ ຕ້ອງມີອາຍຸບໍ່ກາຍ 05 ປີ ນັບແຕ່ມື້ຜະລິດ;<br>2) ຕ້ອງໄດ້ມາດຕະຖານ ISO 9001 (ພາຍໃນ 4 ປີ ນັບແຕ່ມີການຜະລິດ);<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 17 | 2812 | ການຜະລິດເຄື່ອງຈັກພະລັງງານທີ່ກິນທາດແຫຼວ | 1) ຕ້ອງນໍາໃຊ້ເຕັກໂນໂລຊີທັນສະໄໝ ແບບອັດຕະໂນມັດ ຫຼື ເຄິ່ງອັດຕະໂນມັດ (ນໍາໃຊ້ແຮງງານຄົນຊ່ວຍ ຈໍານວນໜຶ່ງ) ແລະ ຕ້ອງມີອາຍຸບໍ່ກາຍ 05 ປີ ນັບແຕ່ມື້ຜະລິດ;<br>2) ຕ້ອງໄດ້ມາດຕະຖານ ISO 9001 (ພາຍໃນ 4 ປີ ນັບແຕ່ມີການຜະລິດ);<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 18 | 2813 | ການຜະລິດຈັກສູບ, ຈັກປໍ້າຄວາມ ດັນ, ກອກນໍ້າ ແລະ ລີ້ນຈັກສູບ (ວາວ) | 1) ຕ້ອງນໍາໃຊ້ເຕັກໂນໂລຊີທັນສະໄໝ ແບບອັດຕະໂນມັດ ຫຼື ເຄິ່ງອັດຕະໂນມັດ (ນໍາໃຊ້ແຮງງານຄົນຊ່ວຍ ຈໍານວນໜຶ່ງ) ແລະ ຕ້ອງມີອາຍຸບໍ່ກາຍ 05 ປີ ນັບແຕ່ມື້ຜະລິດ;<br>2) ຕ້ອງໄດ້ມາດຕະຖານ ISO 9001 (ພາຍໃນ 4 ປີ ນັບແຕ່ມີການ |

| | | | |
|---|---|---|---|
| | | | ຜະລິດ);<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 19 | 2814 | ການຜະລິດລູກປີ(ລູກປືນ), ເກັຍ, ສິ້ນສ່ວນເຟືອງເກັຍ ແລະ ອຸປະ ກອນຄັບເຄື່ອນ | 1) ຕ້ອງນໍາໃຊ້ເຕັກໂນໂລຊີທັນສະໄໝ ແບບອັດຕະໂນມັດ ຫຼື ເຄິ່ງອັດຕະໂນມັດ (ນໍາໃຊ້ແຮງງານຄົນຊ່ວຍ ຈໍານວນໜຶ່ງ) ແລະ ຕ້ອງມີອາຍຸບໍ່ກາຍ 05 ປີ ນັບແຕ່ມື້ຜະລິດ;<br>2) ຕ້ອງໄດ້ມາດຕະຖານ ISO 9001 (ພາຍໃນ 4 ປີ ນັບແຕ່ມີການຜະລິດ);<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 20 | 2815 | ການຜະລິດເຕົາອົບ, ເຕົາຫຼອມ ແລະ ເຕົາຫຼອມເຜົາໄຫມ້ | 1) ຕ້ອງນໍາໃຊ້ເຕັກໂນໂລຊີທັນສະໄໝ ແບບອັດຕະໂນມັດ ຫຼື ເຄິ່ງອັດຕະໂນມັດ (ນໍາໃຊ້ແຮງງານຄົນຊ່ວຍ ຈໍານວນໜຶ່ງ) ແລະ ຕ້ອງມີອາຍຸບໍ່ກາຍ 05 ປີ ນັບແຕ່ມື້ຜະລິດ;<br>2) ຕ້ອງໄດ້ມາດຕະຖານ ISO 9001 (ພາຍໃນ 4 ປີ ນັບແຕ່ມີການຜະລິດ);<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 21 | 2816 | ການຜະລິດລິຟ, ເຄື່ອງລາກແກ່, ຍົກ ແລະ ອຸປະກອນຫ້ອຍແຂວນ | 1) ຕ້ອງນໍາໃຊ້ເຕັກໂນໂລຊີທັນສະໄໝ ແບບອັດຕະໂນມັດ ຫຼື ເຄິ່ງອັດຕະໂນມັດ (ນໍາໃຊ້ແຮງງານຄົນຊ່ວຍ ຈໍານວນໜຶ່ງ) ແລະ ຕ້ອງມີອາຍຸບໍ່ກາຍ 05 ປີ ນັບແຕ່ມື້ຜະລິດ;<br>2) ຕ້ອງໄດ້ມາດຕະຖານ ISO 9001 (ພາຍໃນ 4 ປີ ນັບແຕ່ມີການຜະລິດ);<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 22 | 2819 | ການເຄື່ອງຈັກເພື່ອຮັບໃຊ້ທົ່ວໄປ | 1) ຕ້ອງນໍາໃຊ້ເຕັກໂນໂລຊີທັນສະໄໝ ແບບອັດຕະໂນມັດ ຫຼື ເຄິ່ງອັດຕະໂນມັດ (ນໍາໃຊ້ແຮງງານຄົນຊ່ວຍ ຈໍານວນໜຶ່ງ) ແລະ ຕ້ອງມີອາຍຸບໍ່ກາຍ 05 ປີ ນັບແຕ່ມື້ຜະລິດ;<br>2) ຕ້ອງໄດ້ມາດຕະຖານ ISO 9001 (ພາຍໃນ 4 ປີ ນັບແຕ່ມີການຜະລິດ);<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 23 | 2821 | ການຜະລິດເຄື່ອງຈັກຮັບໃຊ້ການກະສິກໍາ ແລະ ປ່າໄມ້ | ອີງໃສ່ເງື່ອນໄຂລວມ (HR). |
| 24 | 2822 | ການຜະລິດເຄື່ອງຈັກສໍາລັບແປຮູບໂລຫະ ແລະ ເຄື່ອງມືກົນຈັກ | ອີງໃສ່ເງື່ອນໄຂລວມ (HR). |
| 25 | 2823 | ການຜະລິດເຄື່ອງຈັກສໍາລັບການຫຼອມໂລຫະ | 1) ຕ້ອງນໍາໃຊ້ເຕັກໂນໂລຊີທັນສະໄໝແບບອັດຕະໂນມັດ ຫຼື ເຄິ່ງອັດຕະໂນມັດ (ນໍາໃຊ້ແຮງງານຄົນຊ່ວຍ ຈໍານວນໜຶ່ງ) ແລະ ຕ້ອງມີອາຍຸບໍ່ກາຍ 05 ປີ ນັບແຕ່ມື້ຜະລິດ;<br>2) ຕ້ອງໄດ້ມາດຕະຖານ ISO 9001 (ພາຍໃນ 4 ປີ ນັບແຕ່ມີການຜະລິດ);<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 26 | 2824 | ການຜະລິດເຄື່ອງຈັກສໍາລັບການຂຸດຄົ້ນບໍ່ແຮ່ ແລະ ການກໍ່ສ້າງ | 1) ຕ້ອງນໍາໃຊ້ເຕັກໂນໂລຊີທັນສະໄໝ ແບບອັດຕະໂນມັດ ຫຼື ເຄິ່ງອັດຕະໂນມັດ (ນໍາໃຊ້ແຮງງານຄົນຊ່ວຍ ຈໍານວນໜຶ່ງ) ແລະ ຕ້ອງມີອາຍຸບໍ່ກາຍ 05 ປີ ນັບແຕ່ມື້ຜະລິດ;<br>2) ຕ້ອງໄດ້ມາດຕະຖານ ISO 9001 (ພາຍໃນ 4 ປີ ນັບແຕ່ມີການຜະລິດ); |

| | | | |
|---|---|---|---|
| | | | 3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 27 | 2825 | ການຜະລິດເຄື່ອງຈັກສຳລັບການປຸງແຕ່ງອາຫານ, ເຄື່ອງດື່ມ. | ອີງໃສ່ເງື່ອນໄຂລວມ (HR). |
| 28 | 2826 | ການຜະລິດເຄື່ອງຈັກສຳລັບ ຕໍ່າ ແຜ່ນ, ຕັດຫຍິບ ແລະ ຜະລິດ ຕະພັນໜັງ | 1) ຕ້ອງນຳໃຊ້ເຕັກໂນໂລຊີທັນສະໄໝ ແບບອັດຕະໂນມັດ ຫຼື ເຄິ່ງອັດຕະໂນມັດ (ນຳໃຊ້ແຮງງານຄົນຊ່ວຍ ຈຳນວນໜຶ່ງ) ແລະ ຕ້ອງມີອາຍຸບໍ່ກາຍ 05 ປີ ນັບແຕ່ມື້ຜະລິດ;<br>2) ຕ້ອງໄດ້ມາດຕະຖານ ISO 9001 (ພາຍໃນ 4 ປີ ນັບແຕ່ມີການຜະລິດ);<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 29 | 2910 | ການຜະລິດເຄື່ອງຈັກລົດຍົນ ແລະ ປະກອບລົດຍົນ | ອີງໃສ່ເງື່ອນໄຂລວມ (HR). |
| 30 | 2920 | ການຜະລິດຮ່າງລົດຍົນສຳລັບລົດຍົນ; ການຜະລິດລົດລາກ ແລະ ເຄິ່ງລົດພວງ | 1) ຕ້ອງໄດ້ມາດຕະຖານ ISO 9001 (ພາຍໃນ 4 ປີ ນັບແຕ່ມື້ມີການຜະລິດ);<br>2) ຊິ້ນສ່ວນປະກອບຈຳນວນໜຶ່ງ ຕ້ອງຜະລິດຢູ່ພາຍໃນ 20%. |
| 31 | 3091 | ການຜະລິດລົດຈັກສອງລໍ້ | 1) ຕ້ອງນຳໃຊ້ເຕັກໂນໂລຊີທັນສະໄໝ ແບບອັດຕະໂນມັດ ຫຼື ເຄິ່ງອັດຕະໂນມັດ (ນຳໃຊ້ແຮງງານຄົນຊ່ວຍ ຈຳນວນໜຶ່ງ) ແລະ ຕ້ອງມີອາຍຸບໍ່ກາຍ 05 ປີ ນັບແຕ່ມື້ຜະລິດ;<br>2) ຕ້ອງໄດ້ມາດຕະຖານ ISO 9001 (ພາຍໃນ 4 ປີ ນັບແຕ່ມີການຜະລິດ);<br>3) ຮູບແບບການຜະລິດ IKD;<br>4) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 32 | - | ການຜະລິດອຸປະກອນໄຟຟ້າແສງ ຕາເວັນ ເຊັ່ນ: ອຸປະກອນປັບແຮງດັນຈາກ DC ມາເປັນ AC (Inverter), ຕູ້ຄວບຄຸມ, ແຜ່ນຮັບແສງຕາເວັນ, ດອກໄຟເຍື່ອງທາງ ແລະ ອື່ນໆ | 1) ຕ້ອງນຳໃຊ້ເຕັກໂນໂລຊີທັນສະໄໝ ແບບອັດຕະໂນມັດ ຫຼື ເຄິ່ງອັດຕະໂນມັດ (ນຳໃຊ້ແຮງງານຄົນຊ່ວຍຈຳນວນໜຶ່ງ) ແລະ ຕ້ອງມີອາຍຸບໍ່ກາຍ 05 ປີ ນັບແຕ່ມື້ຜະລິດ;<br>2) ຕ້ອງໄດ້ມາດຕະຖານ ISO 9001 (ພາຍໃນ 4 ປີ ນັບແຕ່ມີການຜະລິດ);<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 33 | - | ສົ່ງເສີມການພັດທະນາພະລັງງານທົດແທນ ທີ່ຜະລິດເປັນໄຟຟ້າ ເຊັ່ນ: Solar PV, Solar Thermal, ພະລັງງານລົມ, ພະລັງງານຊີວະມວນ ແລະ ພະລັງງານເຊື້ອໄຟຊີວະພາບ. | 1) ເປັນການລົງທຶນທີ່ສ້າງລາຍຮັບສູງໃຫ້ແກ່ຊາດ;<br>2) ເປັນການລົງທຶນທີ່ມີຄວາມຍືນຍົງ, ສີຂຽວ ແລະ ບໍ່ທຳລາຍສິ່ງແວດລ້ອມ;<br>3) ເປັນການລົງທຶນທີ່ມີການຕໍ່ຍອດຜະລິດຕະພັນ;<br>4) ເປັນການລົງທຶນທີ່ມີການຖ່າຍທອດຄວາມຮູ້ໃຫ້ແກ່ສີມືທາງດ້ານແຮງງານ;<br>5) ຕ້ອງມີເຕັກໂນໂລຊີທີທັນສະໄໝ ແລະ ມາດຕະຖານ ISO ຫຼື GMP;<br>6) ຕ້ອງມີການດຳເນີນໂຄງການ ແລະ ນຳໃຊ້ແຮງງານພາຍໃນປະເທດ;<br>7) ຕ້ອງມີຕະຫຼາດຮອງຮັບທັງພາຍໃນ ແລະ ຕ່າງປະເທດ;<br>8) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 34 | - | ສົ່ງເສີມໃຫ້ມີການປູກພືດ | 1) ເປັນການລົງທຶນທີ່ສ້າງລາຍຮັບສູງໃຫ້ແກ່ຊາດ; |

| | | | |
|---|---|---|---|
| | | ພະລັງ ງານ, ການຜະລິດ ແລະ ນຳໃຊ້ນ້ຳມັນເຊື້ອໄຟ ຊີວະພາບ (ໄບໂອດີເຊລ ແລະ ໄບໂອເອຕະນອນ), ສົ່ງເສີມການຜະລິດໄຮໂດ ເຈນຂຽວ (Green $H_2$) | 2) ເປັນການລົງທຶນທີ່ມີຄວາມຍືນຍົງ, ສີຂຽວ ແລະ ບໍ່ທຳລາຍສິ່ງແວດລ້ອມ;<br>3) ເປັນການລົງທຶນທີ່ມີການຕໍ່ຍອດຜະລິດຕະພັນ;<br>4) ເປັນການລົງທຶນທີ່ມີການຖ່າຍທອດຄວາມຮູ້ໃຫ້ແກ່ສີມືທາງດ້ານແຮງງານ;<br>5) ຕ້ອງມີເຕັກໂນໂລຊີທີ່ທັນສະໄໝ ແລະ ມາດຕະຖານ ISO ຫຼື GMP;<br>6) ຕ້ອງມີການດຳເນີນໂຄງການ ແລະ ນຳໃຊ້ແຮງງານພາຍໃນປະເທດ;<br>7) ຕ້ອງມີຕະຫຼາດຮອງຮັບທັງພາຍໃນ ແລະ ຕ່າງປະເທດ;<br>8) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 35 | - | ສົ່ງເສີມໃຫ້ມີການຜະລິດແກັສຊີວະພາບ ຈາກບັນດາໂຮງງານຕ່າງໆ ແລະ ສິ່ງເສດເຫຼືອທາງການກະເສດ ເພື່ອຮັບໃຊ້ໃນການຜະລິດກະແສໄຟຟ້າ, ຮັບໃຊ້ໃນຂະແໜງການຂົນສົ່ງ ແລະ ປຸງແຕ່ງອາຫານ. | 1) ເປັນການລົງທຶນທີ່ສ້າງລາຍຮັບສູງໃຫ້ແກ່ຊາດ;<br>2) ເປັນການລົງທຶນທີ່ມີຄວາມຍືນຍົງ, ສີຂຽວ ແລະ ບໍ່ທຳລາຍສິ່ງແວດລ້ອມ;<br>3) ເປັນການລົງທຶນທີ່ມີການຕໍ່ຍອດຜະລິດຕະພັນ;<br>4) ເປັນການລົງທຶນທີ່ມີການຖ່າຍທອດຄວາມຮູ້ໃຫ້ແກ່ສີມືທາງດ້ານແຮງງານ;<br>5) ຕ້ອງມີເຕັກໂນໂລຊີທີ່ທັນສະໄໝ ແລະ ມາດຕະຖານ ISO ຫຼື GMP;<br>6) ຕ້ອງມີການດຳເນີນໂຄງການ ແລະ ນຳໃຊ້ແຮງງານພາຍໃນປະເທດ;<br>7) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 36 | - | ສົ່ງເສີມໃຫ້ມີການຜະລິດສານເຄມີ ທີ່ເປັນສ່ວນປະກອບໃນການຜະລິດນ້ຳມັນເຊື້ອໄຟຊີວະພາບ | 1) ເປັນການລົງທຶນທີ່ສ້າງລາຍຮັບສູງໃຫ້ແກ່ຊາດ;<br>2) ເປັນການລົງທຶນທີ່ມີຄວາມຍືນຍົງ, ສີຂຽວ ແລະ ບໍ່ທຳລາຍສິ່ງແວດລ້ອມ;<br>3) ເປັນການລົງທຶນທີ່ມີການຕໍ່ຍອດຜະລິດຕະພັນ;<br>4) ເປັນການລົງທຶນທີ່ມີການຖ່າຍທອດຄວາມຮູ້ໃຫ້ແກ່ສີມືທາງດ້ານແຮງງານ;<br>5) ຕ້ອງມີເຕັກໂນໂລຊີທີ່ທັນສະໄໝ ແລະ ມາດຕະຖານ ISO ຫຼື GMP;<br>6) ຕ້ອງມີການດຳເນີນໂຄງການ ແລະ ນຳໃຊ້ແຮງງານພາຍໃນປະເທດ;<br>7) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 37 | - | ການຜະລິດພາຫະນະທີ່ນຳໃຊ້ພະລັງງານໄຟຟ້າ (ລົດໃຫຍ່ໄຟຟ້າ, ລົດຈັກໄຟຟ້າ ແລະ ລົດຖີບໄຟຟ້າ) | 1) ເປັນການລົງທຶນທີ່ສ້າງລາຍຮັບສູງໃຫ້ແກ່ຊາດ;<br>2) ເປັນການລົງທຶນທີ່ມີຄວາມຍືນຍົງ, ສີຂຽວ ແລະ ບໍ່ທຳລາຍສິ່ງແວດລ້ອມ;<br>3) ເປັນການລົງທຶນທີ່ມີການຕໍ່ຍອດຜະລິດຕະພັນ;<br>4) ເປັນການລົງທຶນທີ່ມີການຖ່າຍທອດຄວາມຮູ້ໃຫ້ແກ່ສີມືທາງດ້ານແຮງງານ;<br>5) ຕ້ອງມີເຕັກໂນໂລຊີທີ່ທັນສະໄໝ ແລະ ມາດຕະຖານ ISO ຫຼື GMP;<br>6) ຕ້ອງມີການສ້າງຕັ້ງໂຮງງານປະກອບ ຫຼື ຜະລິດ ລວມທັງ ລົດ ແລະ ອາໄຫຼ່;<br>7) ຕ້ອງນຳໃຊ້ແຮງງານ ແລະ ວັດສະດຸທີ່ມີພາຍໃນປະເທດ; |

| | | | |
|---|---|---|---|
| | | | 8) ຕ້ອງມີສູນບໍລິການຫຼັງການຂາຍ;<br>9) ຕ້ອງມີຕະຫຼາດຮອງຮັບທັງພາຍໃນ ແລະ ຕ່າງປະເທດ ເພື່ອສົ່ງຂາຍ;<br>10) ຕ້ອງມີການຄຸ້ມຄອງສິ່ງເສດເຫຼືອຫຼັງໝົດອາຍຸການໃຊ້ງານ ເປັນຕົ້ນແມ່ນ ແບັດເຕີລີ;<br>11) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 38 | - | ການແປຮູບຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ ມາເປັນພະລັງງານແບບຄົບວົງຈອນ | 1) ເປັນການລົງທຶນທີ່ສ້າງລາຍຮັບສູງໃຫ້ແກ່ຊາດ;<br>2) ເປັນການລົງທຶນທີ່ມີຄວາມຍືນຍົງ, ສີຂຽວ ແລະ ບໍ່ທຳລາຍສິ່ງແວດລ້ອມ;<br>3) ເປັນການລົງທຶນທີ່ມີການຕໍ່ຍອດຜະລິດຕະພັນ;<br>4) ເປັນການລົງທຶນທີ່ມີການຖ່າຍທອດຄວາມຮູ້ໃຫ້ແກ່ສີມືທາງດ້ານແຮງງານ;<br>5) ຕ້ອງມີເຕັກໂນໂລຊີທີທັນສະໄໝ ແລະ ມາດຕະຖານ ISO ຫຼື GMP;<br>6) ຕ້ອງມີການສ້າງຕັ້ງໂຮງງານ ແລະ ນຳໃຊ້ແຮງງານພາຍໃນປະເທດ;<br>7) ຕ້ອງນຳໃຊ້ຂີ້ເຫຍື້ອຢູ່ພາຍໃນເທົ່ານັ້ນ;<br>8) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 39 | - | ການຜະລິດນ້ຳມັນຊີວະພາບ ເປັນຕົ້ນ: ນ້ຳມັນກາຊວນຊີວະພາບ (B5, B10, B20) ແລະ ນ້ຳມັນແອັດຊັງຊີວະພາບ (E5, E10, E20, E85, E95) | 1) ເປັນການລົງທຶນທີ່ສ້າງລາຍຮັບສູງໃຫ້ແກ່ຊາດ;<br>2) ເປັນການລົງທຶນທີ່ມີຄວາມຍືນຍົງ, ສີຂຽວ ແລະ ບໍ່ທຳລາຍສິ່ງແວດລ້ອມ;<br>3) ເປັນການລົງທຶນທີ່ມີການຕໍ່ຍອດຜະລິດຕະພັນ;<br>4) ເປັນການລົງທຶນທີ່ມີການຖ່າຍທອດຄວາມຮູ້ໃຫ້ແກ່ສີມືທາງດ້ານແຮງງານ;<br>5) ຕ້ອງມີເຕັກໂນໂລຊີທີທັນສະໄໝ ແລະ ມາດຕະຖານ ISO ຫຼື GMP;<br>6) ຕ້ອງມີການສ້າງຕັ້ງໂຮງງານຜະລິດ, ປະສົມນ້ຳມັນ ແລະ ນຳໃຊ້ແຮງງານພາຍໃນປະເທດ;<br>7) ແລະ ອີງໃສ່ເງື່ອນໄຂລວມ (HR). |
| II. ກະສິກຳສະອາດ, ປອດສານພິດ, ການຜະລິດແນວພັນພືດ, ແນວພັນສັດ, ການປູກພືດອຸດສາຫະກຳ, ການພັດທະນາປ່າໄມ້, ປົກປັກຮັກສາສິ່ງແວດລ້ອມ ແລະ ຊີວະນາໆພັນ, ກິດຈະການສົ່ງເສີມການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ. | | | |
| 40 | 0111 | ການປູກພືດທັນຍາຫານປະເພດຖົ່ວ (ຍົກເວັ້ນເຂົ້າ), ຕະກຸນໝາກຖົ່ວ ແລະ ເມັດໝາກຖົ່ວທີ່ເອົາມາເຮັດນ້ຳມັນ (ເຊັ່ນ: ຖົ່ວເຫຼືອງ, ຖົ່ວຂຽວ, ຖົ່ວດິນ, ຖົ່ວຜັກຍາວ, ຖົ່ວອິນຄາ, ຖົ່ວເບີ, ການປູກສາລີຫວານ, ສາລີແຂງ, ໝາກງາ, ໝາກເດືອຍ...) | 1) ຕ້ອງໄດ້ປະຕິບັດຕາມມາດຕະຖານ GAP ຫຼື OA ພາຍໃນ 3 ປີ.<br>2) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 41 | 0112 | ການປູກເຂົ້າ<br>(ລວມທັງ ເຂົ້າຫວິດ) | 1) ຕ້ອງໄດ້ມາດຕະຖານ GAP ຫຼື OA ພາຍໃນ 3 ປີ.<br>2) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບ |

| | | | |
|---|---|---|---|
| | | | ການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 42 | 0113 | ການປູກພືດຜັກ ແລະ ໝາກແຕງໂມ, ພືດໃຫ້ຣາກ ແລະ ຫົວມັນ (ເຊັ່ນ: ມັນຕົ້ນ , ມັນດ້າງ, ມັນຝຣັ່ງ, ມັນເພົາ, ເຜືອກ...) | 1) ຕ້ອງໄດ້ມາດຕະຖານ GAP ຫຼື OA ພາຍໃນ 3 ປີ.<br>2) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 43 | 0114 | ການປູກອ້ອຍ | 1) ຕ້ອງໄດ້ມາດຕະຖານ GAP ຫຼື OA ພາຍໃນ 3 ປີ.<br>2) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 44 | 0116 | ການປູກພືດປະເພດໃຫ້ເສັ້ນໄຍ | 1) ຕ້ອງໄດ້ມາດຕະຖານ GAP ຫຼື OA ພາຍໃນ 3 ປີ.<br>2) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 45 | 0121 | ການປູກໝາກອາງຸ່ນ | 1) ຕ້ອງໄດ້ມາດຕະຖານ GAP ຫຼື OA ພາຍໃນ 3 ປີ.<br>2) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 46 | 0122 | ການປູກໝາກໄມ້ເຂດຮ້ອນ ແລະ ເຄິ່ງເຂດຮ້ອນ (ເຊັ່ນ: ໝາກກ້ວຍ, ໝາກມ່ວງ, ໝາກຫຸ່ງ, ໝາກນັດ, ໝາກຂາມ, ໝາກອາໂວກາໂດ , ໝາກອາງຸ່ນ...) | 1) ຕ້ອງໄດ້ມາດຕະຖານ GAP ຫຼື OA ພາຍໃນ 3 ປີ.<br>2) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 47 | 0123 | ການປູກໝາກໄມ້ປະເພດໝາກນາວ, ໝາກຂີ້ຫູດ | 1) ຕ້ອງໄດ້ມາດຕະຖານ GAP ຫຼື OA ພາຍໃນ 3 ປີ.<br>2) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 48 | 0126 | ການປູກໝາກໄມ້ປະເພດໃຫ້ນ້ຳມັນ (ເຊັ່ນ: ໝາກພ້າວ, ຕົ້ນນ້ຳມັນປາມ, ໝາກເຍົາ....) | 1) ຕ້ອງໄດ້ມາດຕະຖານ GAP ຫຼື OA ພາຍໃນ 3 ປີ.<br>2) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 49 | 0127 | ການປູກພືດສຳລັບເຮັດເຄື່ອງດື່ມ (ເຊັ່ນ: ກາເຟ, ຊາ ....) | 1) ຕ້ອງໄດ້ມາດຕະຖານ GAP ຫຼື OA ພາຍໃນ 3 ປີ.<br>2) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 50 | 0128 | ການປູກພືດເຮັດເຄື່ອງເທດ , ເຮັດນ້ຳຫອມ, ຢາ ແລະ ປຸງແຕ່ງຢາ | 1) ຕ້ອງໄດ້ມາດຕະຖານ GAP ຫຼື OA ພາຍໃນ 3 ປີ.<br>2) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 51 | 0129 | ການປູກຕົ້ນໄມ້ຢືນຕົ້ນອື່ນໆ/ໄມ້ອຸດສາຫະກຳ (ແຕ່ບໍ່ກວມເອົາ ການປູກ | 1) ຕ້ອງໄດ້ມາດຕະຖານ GAP ຫຼື OA ພາຍໃນ 3 ປີ;<br>2) ການລົງທຶນທີ່ມີການຕໍ່ຍອດຜະລິດຕະພັນ;<br>3) ຕ້ອງມີການສ້າງຕັ້ງໂຮງງານປຸງແຕ່ງ; |

| | | | |
|---|---|---|---|
| | | ຢາງພາລາ) | 4) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>5) ແລະ ອີງໃສ່ເງື່ອນໄຂລວມ (HR).<br><br>*ໝາຍເຫດ:* ບຸກຄົນ, ນິຕິບຸກ ຄົນສາມາດປູກຢາງພາລາໄດ້ ຖ້າຫາກມີເງື່ອນໄຂ ໂດຍສະເພາະແມ່ນ ດິນ, ທຶນ ແລະ ຕະຫລາດທີ່ແນ່ນອນ ແຕ່ລັດຖະບານບໍ່ອະນຸຍາດໃຫ້ມີການສຳປະທານດິນລັດເພື່ອປູກຢາງພາລາຕື່ມ. |
| 52 | - | ການຟື້ນຟູປ່າ ແລະ ການປູກໄມ້ຜະລິດສິນເຊື່ອກາກບອນ (ການຄ້າ-ຂາຍກາກບອນ) | 1) ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ ໃນແຕ່ລະໄລຍະ;<br>2) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 53 | 0130 | ການໂຄສະນາວິທະຍາການປູກພືດ (ລວມເອົາການຜະລິດອຸປະກອນສຳລັບ ການປູກພືດ, ການຕັດພືດຜັກ, ໜໍ່ໄມ້ ແລະ ແນວພັນສຳລັບການສົ່ງເສີມໂດຍກົງ ຫຼື ເພື່ອສ້າງການສະສົມ ຊຶ່ງໄດ້ຜ່ານການຄັດເລືອກເຊື້ອທີ່ໄດ້ ເພາະພັນຕົວຈິງ) | 1) ຕ້ອງໄດ້ມາດຕະຖານ GAP ຫຼື OA ພາຍໃນ 3 ປີ.<br>2) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>3) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 54 | 0141 | ການລ້ຽງງົວ ແລະ ຄວາຍ (ການລ້ຽງງົວ - ຄວາຍ ແລະ ການຜະລິດ-ສະໜອງລູກງົວ ແລະ ຄວາຍ) | 1) ຕ້ອງມີເນື້ອທີ່, ທຶນ, ສຳນັກງານ, ສິ່ງປູກສ້າງ, ອຸປະກອນ, ເຄື່ອງມື ແລະ ພາຫະນະຮັບໃຊ້ຢ່າງເໝາະສົມ;<br>2) ຕ້ອງມີນັກວິຊາການ ທີ່ມີຄວາມຮູ້ດ້ານການລ້ຽງສັດ ລະດັບວິຊາສະພາະຊັ້ນກາງຂຶ້ນໄປ ຫຼື ວິຊາການສັດຕະວັດແພດ ທີ່ມີໃບຢັ້ງຢືນໄດ້ ຜ່ານການປະຕິບັດວຽກງານຕົວຈິງ ສຳລັບການລ້ຽງ ສັດສ່ວນທຸລະກິດກ່ຽວກັບການສັດຕະວັດແພດນັ້ນ ຕ້ອງໃຫ້ມີສັດຕະວະແພດ ຫຼື ພະຍາບານສັດ ທີ່ມີໃບຢັ້ງຢືນປະກອບວິຊາຊີບ ຈາກສະພາສັດຕະວະແພດ;<br>3) ໄດ້ຮັບການເຫັນດີ ຈາກຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;<br>4) ປະຕິບັດເງື່ອນໄຂອື່ນໆທີ່ຈຳເປັນ ຕາມອົງການຄູ້ມຄອງວຽກງານ ແລະ ສັດຕະວະ ແພດ ກຳນົດ. ປະຕິບັດຕາມເງື່ອນໄຂອື່ນທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>5) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 55 | 0142 | ການລ້ຽງມ້າ ແລະ ສັດສາຍພັນດຽວກັນ (ການລ້ຽງ ແລະ ການຜະລິດ-ສະໜອງລູກມ້າ, ລາ, ລໍ) | 1) ຕ້ອງມີເນື້ອທີ່, ທຶນ, ສຳນັກງານ, ສິ່ງປູກສ້າງ, ອຸປະກອນ, ເຄື່ອງມື ແລະ ພາຫະນະຮັບໃຊ້ ຢ່າງເໝາະສົມ;<br>2) ຕ້ອງມີນັກວິຊາການ ທີ່ມີຄວາມຮູ້ດ້ານການລ້ຽງສັດ ລະດັບວິຊາສະພາະຊັ້ນກາງຂຶ້ນໄປ ຫຼື ວິຊາການສັດຕະວັດແພດ ທີ່ມີໃບຢັ້ງຢືນໄດ້ ຜ່ານການປະຕິບັດວຽກງານຕົວຈິງ ສຳລັບການລ້ຽງ ສັດສ່ວນທຸລະກິດກ່ຽວກັບການສັດຕະວັດແພດນັ້ນ ຕ້ອງ |

| | | | |
|---|---|---|---|
| | | | ໃຫ້ມີສັດຕະວະແພດ ຫຼື ພະຍາບານສັດ ທີ່ມີໃບຢັ້ງຢືນປະກອບວິຊາຊີບ ຈາກສະພາສັດຕະວະແພດ;<br>3) ໄດ້ຮັບການເຫັນດີ ຈາກຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;<br>4) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>5) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 56 | 0144 | ການລ້ຽງແກະ ແລະ ແບ້ (ການລ້ຽງ ແລະ ການຜະລິດ-ສະໜອງລູກແກະ ແລະ ແບ້) | 1) ຕ້ອງມີເນື້ອທີ່, ທຶນ, ສຳນັກງານ, ສິ່ງປູກສ້າງ, ອຸປະກອນ, ເຄື່ອງມື ແລະ ພາຫະນະຮັບໃຊ້ ຢ່າງເໝາະສົມ;<br>2) ຕ້ອງມີນັກວິຊາການ ທີ່ມີຄວາມຮູ້ດ້ານການລ້ຽງສັດ ລະດັບວິຊາສະເພາະຊັ້ນກາງຂຶ້ນໄປ ຫຼື ວິຊາການສັດຕະວັດແພດ ທີ່ມີໃບຢັ້ງຢືນໄດ້ຜ່ານການປະຕິບັດວຽກງານຕົວຈິງ ສຳລັບການລ້ຽງ ສັດສ່ວນທຸລະກິດກ່ຽວກັບການສັດຕະວັດແພດນັ້ນຕ້ອງໃຫ້ມີສັດຕະວະແພດ ຫຼື ພະຍາບານສັດ ທີ່ມີໃບຢັ້ງຢືນປະກອບວິຊາຊີບ ຈາກສະພາສັດຕະວະແພດ;<br>3) ໄດ້ຮັບການເຫັນດີ ຈາກຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;<br>4) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>5) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 57 | 0145 | ການລ້ຽງໝູ (ການລ້ຽງໝູ ແລະ ການຜະລິດລູກໝູ) | 1) ຕ້ອງມີເນື້ອທີ່, ທຶນ, ສຳນັກງານ, ສິ່ງປູກສ້າງ, ອຸປະກອນ, ເຄື່ອງມື ແລະ ພາຫະນະຮັບໃຊ້ຢ່າງເໝາະສົມ;<br>2) ຕ້ອງມີນັກວິຊາການ ທີ່ມີຄວາມຮູ້ດ້ານການລ້ຽງສັດ ລະດັບວິຊາສະເພາະຊັ້ນກາງຂຶ້ນໄປ ຫຼື ວິຊາການສັດຕະວັດແພດ ທີ່ມີໃບຢັ້ງຢືນໄດ້ຜ່ານການປະຕິບັດວຽກງານຕົວຈິງ ສຳລັບການລ້ຽງ ສັດສ່ວນທຸລະກິດກ່ຽວກັບການສັດຕະວັດແພດນັ້ນຕ້ອງໃຫ້ມີສັດຕະວະແພດ ຫຼື ພະຍາບານສັດ ທີ່ມີໃບຢັ້ງຢືນປະກອບວິຊາຊີບ ຈາກສະພາສັດຕະວະແພດ;<br>3) ໄດ້ຮັບການເຫັນດີ ຈາກຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;<br>4) ປະຕິບັດຕາມເງື່ອນໄຂອື່ນ ທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນຳໃຊ້ໃນແຕ່ລະໄລຍະ;<br>5) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 58 | 0146 | ການລ້ຽງສັດປີກ (ການລ້ຽງ ແລະ ການຜະລິດ-ສະໜອງລູກສັດປີກ) | 1) ຕ້ອງມີເນື້ອທີ່, ທຶນ, ສຳນັກງານ, ສິ່ງປູກສ້າງ, ອຸປະກອນ, ເຄື່ອງມື ແລະ ພາຫະນະຮັບໃຊ້ຢ່າງເໝາະສົມ;<br>2) ຕ້ອງມີນັກວິຊາການ ທີ່ມີຄວາມຮູ້ດ້ານການລ້ຽງສັດ ລະດັບວິຊາສະເພາະຊັ້ນກາງຂຶ້ນໄປ ຫຼື ວິຊາການສັດຕະວັດແພດ ທີ່ມີໃບຢັ້ງຢືນໄດ້ຜ່ານການປະຕິບັດວຽກງານຕົວຈິງ ສຳລັບການລ້ຽງ ສັດສ່ວນທຸລະກິດກ່ຽວກັບການສັດຕະວັດແພດນັ້ນຕ້ອງໃຫ້ມີສັດຕະວະແພດ ຫຼື ພະຍາບານສັດ ທີ່ມີໃບຢັ້ງຢືນປະກອບວິຊາຊີບ ຈາກສະພາສັດຕະວະແພດ;<br>3) ໄດ້ຮັບການເຫັນດີ ຈາກຂະແໜງການ ແລະ ອົງການປົກຄອງ |

| | | | |
|---|---|---|---|
| | | | ທ້ອງຖິ່ນທີ່ກ່ຽວຂ້ອງ;<br>4) ປະຕິບັດຕາມເງື່ອນໄຂອື່ນ ທີ່ກໍານົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນໍາໃຊ້ໃນແຕ່ລະໄລຍະ;<br>5) ແລະ ອີງໃສ່ເງື່ອນໄຂລວມ (HR). |
| 59 | 0149 | ການລ້ຽງສັດອື່ນໆ (ການລ້ຽງ ແລະ ການຜະລິດ-ສະໜອງລູກສັດອື່ນໆ) | 1) ຕ້ອງມີເນື້ອທີ່, ທຶນ, ສໍານັກງານ, ສິ່ງປູກສ້າງ, ອຸປະກອນ, ເຄື່ອງມື ແລະ ພາຫະນະຮັບໃຊ້ຢ່າງເໝາະສົມ;<br>2) ຕ້ອງມີນັກວິຊາການ ທີ່ມີຄວາມຮູ້ດ້ານການລ້ຽງສັດ ລະດັບວິຊາສະເພາະຊັ້ນກາງຂຶ້ນໄປ ຫຼື ວິຊາການສັດຕະວັດແພດ ທີ່ມີໃບຢັ້ງຢືນໄດ້ຜ່ານການປະຕິບັດວຽກງານຕົວຈິງ ສໍາລັບການລ້ຽງ ສັດສ່ວນທຸລະກິດກ່ຽວກັບການສັດຕະວັດແພດນັ້ນຕ້ອງໃຫ້ມີສັດຕະວະແພດ ຫຼື ພະຍາບານສັດ ທີ່ມີໃບຢັ້ງຢືນປະກອບວິຊາຊີບ ຈາກສະພາສັດຕະວະແພດ;<br>3) ໄດ້ຮັບການເຫັນດີ ຈາກຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;<br>4) ປະຕິບັດຕາມເງື່ອນໄຂອື່ນ ທີ່ກໍານົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີຜົນສັກສິດນໍາໃຊ້ໃນແຕ່ລະໄລຍະ;<br>5) ແລະ ອີງໃສ່ເງື່ອນໄຂລວມ (HR). |
